ปั้มเทสน์แหญ่

มะหาชาดพระเวสสันดอรชาดึก



พระอาจารย์ พัย สิดถาสึก

ภันต์ที่ 1 ทัสสะพอน มิ 19 พระคาถา

บัดนี้ พ่แต่ตั้งนะโมแล้ว
นะโม แปว่าข้า
ก่อนชีบันยายเล้ือง
เทดให้โยมผี่น้อง
พอภพ่ตาแม่ชิ้น
ยิงและชายลำฟัง
โยมทังปวงยากฟังเล่ือง
ขอเชินชวนจิ่งง่ายค้อย
ตั้งใจฟังไปให้มิ้ม
พากันฟังให้มันดัภา
ถ้าจิดใจเธ้าพั้น
ถ้าจิดใจเหื้อมใส
เล่ิมบั้นต้นข้อยชีเว้า
เทดสะนาให้โยมฟัง
สับสำนรึงก่อนแหู่
ย่าชีฟังแต่ทางสรึง
ข้อยชีเว้าต่ำเล้ือง
ในทำอิงสัมมา
ธรึมชีจับเอ้าข้ี
เทดกันฟังเป้นข้ี
ผู้ข้าชีว่าขั้นต้น
ฟังเป้นกอนต่ำกอน
ฟังเดิแถอโยมเจ้า
ย้อมก่าอเถิง
เม้าย่เหิงชั้นฟ้า
ทุกๆย่างตะหูอดสิ้น
ทังสะหิมมางใน
เม้าอิมามหำกอ้าง
สรึงบันเล่งคึกถิ้น
เทสะนาข้อยชีว่า
อันหาน้อมยึกถอาย
ในลำมะหาเทอด
ได้ฟังแจ้งคู่สู่คิน
และพอกท่านทังหูาย
นั่งเต้มสาลาก้อาง
กะแสทำบ่อนชีม่วน
หูน้อยหมู่ละโยม
ในลำพระเทอด13 กัน
ย่าชีหนีไกเอ้ิน
บ่ผันแปไปหางใหม่
ได้มาฟังบ่อนบั้นข้อยชีเว้าสู่ฟัง
เล่ืองเป้นมา
ให้จี่จำเอ้าเล้ือง
กะแสทำในเล่ือง โยมเอ่ีย
ฟังสำนรึงอาดข้ี ผะหยาน้อยชีอ่อยแถม
ตามเล่ืองคันในลำ
สาดสะดาเป้นเล้ือง
ในลำมะหาเทอด
ขอแจ้งชีก่าอกอน
เอิ้นอ่า ทัดสะพอน
อ่ากันอันนี้
ทัดสะพอนกันที่หน่ึง
นางผุดสะดี
เป้นเมยเทงิ้าท่านพะอิน
สะหุกย่ิงเหื้อวิไส
หมื่นกีกองล้าน
กองปะโคมข้อยชื่น
บ่มีมีชีง่วมเทงิา

ສົມກັບຊື່ວ່າເຈົ້າ
ຍາມຊິກິນຊິນອນ
ມີຄົນຄອຍປະເຄນໃຫ້
ປະດັບຈັນແກ່ນຄູ
ນັ່ງຢູ່ເທິງເກົ້າອີ້
ຮົ້ນກໍ່ບໍ່ໄດ້ກັດຍຸງກໍ່ບໍ່ໄດ້ຕອມ
ເນົາຢູ່ເທິງສະຫວັນຟ້າ
ຄວາມເປັນຈິງນິມິດເກີດແກ່ນ້ອງ
ບຸບພະນິມິດວ່ານັ້ນ
ໃຫ້ຈຸຕິລົງມາ
ມາເກີດໃນເມືອງໃຕ້
ຜຸດສະດິນາດນ້ອຍ
ຄາວນັ້ນອິນທິຣາດໄທ້
ເປັນຈັ່ງໃດນາງເອີ່ຍ
ຄາວນັ້ນຜຸດສະດີໄທ້
ນ້ອງຊິໄດ້ຈາກໜີ
ໜີກໍ່ໜີບໍ່ພົ້ນ
ຄິດອາວອນເມືອງສະຫວັນ
ຈັກແມ່ນເວນອີ່ຫຍັງຂ້ອງ
ພຣະອິນເວົ້າຕໍ່ນ້ອງ
ສຸກແລະທຸກບໍ່ເຫືອດແຫ້ງ
ຄາວເມື່ອກັມນຳທັນ
ຄາວເມື່ອກັມນຳໃຊ້
ໂລກມັນບໍ່ທ່ຽງໝັ້ນ
ຊື່ວ່າສິ່ງສານນີ້
ໃຜຜູ້ໜີບໍ່ພົ້ນ
ບໍ່ວ່າຂ້ອຍແລະເຈົ້າ
ໄປຕາມກັມຕາມເວນ
ເວນນຳປອງກຳນຳໃຊ້
ເຈົ້າກໍ່ບໍ່ຢາກຮ້າງ
ເປັນເມຍເອກອົງອິນ
ບໍ່ຍາກແຄນຜໍ້ນ້ອຍ
ອາຫານກິນເປັນຢູ່
ຫອມກຸ້ມທົ່ວທະລັງ
ສະໜົມປັ່ນວິປັດ
ຢູ່ທາງບັນທົມເນົ່ງ
ເປັນເວລານານຍິ່ງ
ບໍ່ມີຮູ້ເມື່ອຝັນ
ບອກເຫດຊາວສະຫວັນ
ເກີດພູມພາຍຜີ
ກັມມີຕ້ອງໃຊ້ຊາດ
ໝອງເສົ້າເກົ່າພະໄທ
ຈຶ່ງຈາຕໍ່ເມຍຮັກ
ຈຶ່ງຄ່ອຍທໍລະມານກັ້ນ
ຈຶ່ງວານອົງພະພີ່
ລົງໄປເກີດທີບໃຕ້ໃນຜືນມະນຸດຄົນ
ເພາະນິມິດມັນສັ່ງຫອນ
ບໍ່ຢາກໄກໄລເວັ້ນ
ກຳຫຍັງນໍ້ມານ້ຳວ່ອງ
ອີ່ນາງຫຼ້ານາດຖະແພງ
ຊື່ວ່າເມືອງສະຫວັນ ນາງເອີ່ຍ
ຫຼີກໜີບໍ່ມີໄດ້
ກັນດານແສນໂສກ
ຄືດ້ານດັ່ງນິບພານ
ວຽນຕາຍວຽນເກີດ ນາງເອີ່ຍ
ຫາກເລີງພໍ້ຢູ່ບໍ່ເຊົ່າ
ຈຳຊິພາກພອຍໜີ
ກ່ອນລະເດີນວນນ້ອງ
ມັນຈຳໃຈຊິໄດ້ຫ່າງ
ຂ້ອຍກໍ່ບໍ່ຢາກຮ້ີ ຄືຊິໄດ້ຫ່າງກັນ ເດ່ນໍ

ເອີ,ພອນທີ່ນາງປະສົງນັ້ນ
ພີ່ຊິປຸນແປງຕົກ
ຄາວນັ້ນຜຸດສະດີໄທ້
ຄັນຊິໄກອີ່ຫຼີ
ຂໍ້ໜຶ່ງນັ້ນ ຍາມນ້ອງໄປເກີດກ້ຳ
ໃຫ້ເກີດນຳພຣະຣາຊາ
ສີວິຣາຊາໄທ້
ຂໍ້ສອງ ນໍ່ພະເນດເນື້ອ
ສອງຕາກ້ຳ
ປະດຸດປຸນແປງເອົາ
ຂໍ້ສາມ ພຣະມຸຄົ້ວ
ໂກ່ງເປັນສີຄົ້ງໂນ້ງ
ຈັ່ງວ່າ **ຂໍ້ສີ່ນັ້ນ**
ຂໍໃຫ້ມີນາມທັດ
ສຳລັບ**ຂໍ້ທີຫ້າ**ຄັນນາງມີບຸດຕາ
ເປັນຄົນໃຈແກ່ກ້າ
ຂໍ້ຫົກນັ້ນ ຍາມຂ້າມີລູກນ້ອຍ
ຢ່າໄດ້ໜູນຄືຄົນ
ຂໍ້ເຈັດນັ້ນ ຍາມຂ້າມີບຸດແລ້ວ
ຢ່າໄດ້ລະໄດ້ຄອນ
ຂໍ້ແປດນັ້ນ ອັນວ່າເກສາເສັ້ນ
ປຽບດັ່ງເທົ່າຢູ່ນ້ຳ
ຂໍໃຫ້ພຣະພີ່ໄທ້
ຂໍ້ເກົ້ານັ້ນ ຂໍໃຫ້ກາຍານາງ
ຂໍ້ຊິບນັ້ນ ຍາມເມື່ອໄວຊະລາເຖົ້າ
ຄຳຈາໃດທີ່ນ້ອງເວົ້າ
ມີເມດຕາຕໍ່ຄ້າຍ
ນີ້ລະພອນຊິບປະການ
ຂໍປະທານນຳອ້າຍ
ຊິບປະການທີ່ນາງຂໍ
ຈົ່ງຂໍພີ່ເຖີດຄົນດີ
ແຕ່ງແປງປະທານໃຫ້
ຈົ່ງຂໍພອນຈາກພີ່
ນ້ອງຂໍພອນຈາກອ້າຍ ຊິບຂໍ້ຈົ່ງປະທານ
ເມືອງມະນຸດໄກຕາ
ຜູ້ຍົດສູງຄຸງຟ້າ
ນາມະກອນຊັ້ນພໍ່
ໃຫ້ງາມເຫຼືອມຂ່ຽມຂຳ
ໃຫ້ດຳປອດບໍລິສຸດ
ຢ່າໄດ້ມີໝອງເສົ້າ
ຄັນທະນູໃຫ້ກ້ຳເກົ່ງ
ໃຫ້ງາມລົ້ນວ່າລື່ນຄົນ
ໃຫ້ໄດ້ຊື່ຜຸດສະດີ
ດັ່ງເດີມດາເຄົ້າ
ຂໍໃຫ້ໄດ້ຊາຍກ່ອນ
ເຜະລາສ້າງແຕ່ງບຸນ
ຈົນທ້ອງແກ່ຄັນຢ່າຕ້ອງ
ໝູ່ປະຊາຊາວບ້ານ
ນິມພະນາງຢ່າໄດ້ຢ່ອນ
ຄືດັ່ງສາວສ່ຳນ້ອຍສົມດ້ຳມດັ່ງໝາຍ
ໃຫ້ດຳດີຄືເກົ່າ
ຢ່າມີແຫ້ງແຕ່ຢ່າງໃດ
ຈົ່ງປະສາດພອນທິບ
ຜ່ອງໃສສະເໝີດ້ຳມື
ກາຍຂອງເຮົາໃຫ້ຄືເກົ່າ
ໃຫ້ໃສເຫຼືອມດອກດັ່ງໝາຍ
ໂຜດໝູ່ຝູງສັດ
ສິ່ງທີ່ນາງຂໍຕ້ານ
ອົງອິນພະເຈົ້າພີ່
ຈົ່ງປະທານທອດໃຫ້

ຄັນສົມໂອ້ດັ່ງໝາຍ
ທັດສະພອນກັນນີ້
ພໍວ່າຈົບພໍດີ
ເອວັງທີຕົນຂ້າ
ຕອນໜ້າພຸ້ນ
ນັ້ນເທາະນາ
ນັ້ນລະນາ ພີ່ພຣະອົງ.
19 ເລື່ອງພຣະຄາຖາ
ຊິອ່ວຍລົງກັນນີ້
ອັຕຕະມາ ຢຸດໄວ້ກ່ອນ
ຈົ່ງຟັງເລື້ອງ ວ່າຕໍ່ໄປ
ສັດທາໂຍມ.....ນໍ່

ຈົບ (ກັນທັດສະພອນ ມີ 19 ພຣະຄາຖາ).

ກັນຕ໌ທີ່ 2 ຫິມະພານ ມີ 134 ພຣະຄາຖາ

ບັດນີ້ ທັດສະພອນວ່າແລ້ວ
ຂໍໃຫ້ພວກພີ່ນ້ອງ
ເລີ່ມແຕ່ນາງນາດນ້ອຍ
ມາເກີດໃນປະຖະພີ
ເໝືອນກັບທອງຄຳກ້ອນ
ຍິງຢູ່ໃນໂລກນີ້
ຊັບສົມບັດມາກລົ້ນ ຈ
ພວກຊາວເມືອງທັງປວງ
ໃຜກໍ່ໂມທະນານ້ອມ
ສີວິຣາດແກ່ນໄທ້
ຕໍ່ມາຜຸດສະດີເທງ້ຳ
ໄດ້ 16 ຂວບເຂົ້ຳ
ທຸກປະເທດດ້ຳວ
ກຸງສົນໄຊຣາຊ
ບໍ່ມີຄວາມຂັດຂ້ອງ
ບໍ່ມີຄວາມເດືອດຮ້ອນ
ຕໍ່ມາໄດ້ນາດນ້ອຍ
ເປັນຜູ້ມີບຸນຫຼາຍ
ເທວດສັນດອນນາມເຈົ້ຳ
ເລີດດ້ວຍບຸນກ່ຳໄວ້
ແລ້ວຍັງມີລູກຊ້ຳງ
ຫິມມະພານຂ້ຳຊິຕໍ່
ຈົ່ງຟັງຂ້ຳຊິຕໍ່ເຕີມ
ນາມຫໍ່ມຜຸດສະດີ
ລູກພະຍາຈົງແຈ້ງ
ຍິນສະອອນງຳມຍິ່ງ
ສະບາຍແທ້ຕ່ຳງກວ່ຳຄົນ
ນແໜ້ນອັ່ງພະຄັ່ງຫຼວງ
ສິ່ງຂ່ຳວສານມາໄຫວ້
ນຳອົງພູວະນາດ
ບິດາເທງ້ຳພໍ່ພະອົງ
ຈະເລີນໄວສອນໃຫຍ່
ພະນາງເຈົ້ຳກໍ່ເປັ່ງສາວ
ເຂົ້ຳລືຊ່ຳວ່ານາງງຳມ
ຈົ່ງແຕ່ງເອົ້ຳເປັນເມຍຊ້ອນ
ຄອງນະຄອນແທນພໍ່
ປະການແທ້ແຕ່ຢ່ຳງໃດ
ນາມຫໍ່ໂພທິສັດ
ເກີດມານວນພ້ອມ
ໂພທິຍານລົງມາເກີດ
ນຳຍູ້ສິ່ງແຖມ
ເທາະເວີ່ນເວຫາ

ເວ່ນເຂົ້າມາໃນໂຮງ
ເພ່ນຈ່ຶງສົມພອນສ້າງ
ຊ້າງງາມ່ນເກີດພ້ອມ
ເມ່ືອອ່ິງພະເຫວດໄດ້
ສ້າງໂຮງທານ 6 ຫຼັງ
ຂ້ຶນສູ່ເທ່ິງຄໍຊ້າງ
ທຸກໆວັນບ່ໃຫ້ເວ້ັນ
ຕ່ໍຈາກນ້ັນ
ຄືກັນຫາຊາລ
ລູກຂອງໂພທິຍານເຈ້ົາ
ສົມບັດມ່ີມາກລ້ົນ
ກ່າວເຖ່ິງເມ່ືອງກະລິງແວ້ນແຄ້ວນ
ທ້ັງໄຮ່ນາສວນຄ່ໍວ
ທ້ັງລໍາທານກະບ່ກແຫ້ງ
ຝ່ົນບ່ຕ່ົກຢາດໃຫ້
ຕ່ົກລ່ົງໃຈມາຂໍຊ້າງ
ພາມອອກຈາກເຂດຄຸ້ມ
ພໍແຕ່ມາຮອດແລ້ວ
ເຫວດສັນດອນຊ່ົງເຫັນ
ໃຫ້ແກ່ພາມມະນາເຖ້ົາ
ເມ່ືອງກະລິງໄດ້ກ່ໍສ້າງ
ຕ່ົກບ່ອນຄາວຊ່ໍໄດ້ມ້ວນ
ຊາວພາລາຜ່ິດໃຈ
ເຂ່ົາຈ່ຶງນ່ໍາເອ່ົາເລ້ືອງ
ກຸງສ່ົນໄຊບ່ຄ່ິດພ້ໍ
ພວກຊາວເມ່ືອງທ້ັງຄ້າຍ
ພະອ່ິງເລ່ຍຜ່ິດໃຈ
ບອກວ່າຄ່ົນຂວາງບ້ານ
ປູ່ຂ້ັບໜ່ີຈາກບ້ານ
ວ່າຕ່ໍຈາກນ້ີ
ເຜ່ືອກ່ົນ່ງາແກ້ວ
ໂພທ່ິຍານແຕ່ຊາດກ່ອນ
ບຸນສ້າງທ່ານພະອ່ິງ
ຊ່ົງນ່ັງໃນນະຄອນ
ແຈກທານບ່ໍ່ມ່ີຄ້ານ
ໂຄຈອນອອກກວດ
ເວ້ັນເຊ້ົາຄູ່ສູ່ວ້ັນ
ເລ່ຍມ່ີລູກສອງເຂ່ືອ
ລູກພະອ່ິງງາມໂກ້
ເ່ມ່ານະຄອນບ່ຮ້ອນເຮ່ັງ
ຄ່ົນໄດ້ຍ້ອງທ່ໍ່ວແດນ
ອ່ົດຢາກປູປາ
ແຜ່ນດ່ົນກະຄອນແລ້ງ
ປູປາກ່ໍ່ເຂ່ົນຂາດ
ດ່ົນແລ້ງໄ່ງ່ຜ່ິງ
ສັນດອນພະຍາເຫວດ
ສະໜາມກວ້າງດຸ່ງເດ່ົນ
ກ່ົ້ມຂາບສຸລ່ົກອນ
ກ່ໍ່ເລ່ົ່າທານຍ່ັງຊ້າງ
ເມ່ືອງກະລ່ົງຄູ່ສູ່ຢ່າງ
ນາຣ່ໍ້ວໄຮ່ສວນ
ຂໍ່ຂອດອະນາຖາ
ດ່ັ່ງຊ່ົ່ຕ່ິອ່ົກມ້ວຍ
ໄປທູນອ່ິງພະຍາພ່ໍ
ຕອງຖ້ວນສູ່ຂະບວນ
ໄປຍຸງຢ່ິວະກຸງສ່ົນໄຊ
ຈ່ຶ່ງໄລ່ໜ່ີນະຄອນກ້ວາງ
ບ່ໍ່ເປ່ັນການລ້ຽງໄວ້ຢູ່
ກ່ໍ່ເລ່ຍເວ້ົ່າຕ່ໍ່ມະທ່ິ
ຜ່ີຊ່ິຈາກນ່າງໜ່ີ

ເປັນດ້ວຍຊາວສີພີ
ອົງພະຣາຊາໄທ້
ພໍ່ບໍ່ຄິດຖີ່ຖ້ວນ
ເຈົ້າຢ່າຟ້າວເຄືອດຮ້ອນ
ໄອຍະກາທັງສອງ
ນາງມະທິເສຍໃຈ
ເສຍໃຈອີກຊິແຕກ
ນາງນີ້ຢູ່ບໍ່ໄດ້
ບໍ່ມີຄົນໃດປານ
ຄັນໃຫ້ນາງມະທິຮ້າງ
ພາກຈາກຜົວຢູ່ບໍ່ໄດ້
ແມ່ນຊິທຸກຍາກໄຮ້
ຍາມເຂົ້າໄປໃນໄພ
ບໍ່ໃຫ້ເຄືອງມືອ້າຍ
ພ້ອມໄປດ້ວຍບຸດຕາ
ບໍ່ຍອມເປັນແມ່ຮ້າງ
ເນົາພາລາຄົນດຽວ
ແໜງສູ້ຕາຍສາຊໍ້າ
ຫິມມະພານເຂດກວ້າງ
ເຂົ້າໄປດົງດ່ານຊ້ຶງ
ມີແຕ່ເສືອສາງຊ້ຶງ
ນາງຊິຕາມສາມີເຈົ້າ
ຊິໄປຕາມສາມີ
ກະຕາມຖ້ອນນ້ອງບໍ່ແໜງ
ເພາະສະນັ້ນຜູ້ຂ້າຈຶ່ງໄດ້ເວົ້າ
ນາງມະທິທົນທຸກ
ແສນເສຍດາຍແຕ່ຊິໜີໄກຂ້າງ
ນາງຊິໜີກະບໍ່ໄດ້
ນີ້ລະແມ່ໃຫຍ່ ກັນນີ້ໄດ້
ຈັດການມາພໍດີ
ເພິ່ນຄຽດຫຼັງຊັງໜ້າ
ກຸງສິນໄຊໃຈມໍ່
ຂັບອ້າຍຈາກນະຄອນ
ໃຫ້ຄອຍເບິ່ງບຸດຕາ
ຈຶ່ງຖະໜອມທອມໄວ້
ທັງເລົ່າຍົມມະນາໄທ້
ແຍກເບິ່ງໜ້າເຜົ່າຜູ້ຜົວແກ້ວຮໍ່າໄຮ
ຄັນໃຫ້ພາກພອຍຜົວ
ເຜົ່າຜົວຄົນນີ້
ຮາມຜົວເຈຍລະຈາກ
ພະນາງຫຼ້າສ່ວນຊິຕາຍ
ກໍ່ຕາມຊ່າງຊິຕິດຕາມີພີ່ເອີ່ຍ
ຊິຄ່ອຍອຸປະຖຳລ້ຽງ
ແນວໃດຢູ່ໃນປ່າ
ຊິຄ່ອຍອົດຄ່ອຍເຍື່ອນຕາມສົ້ນກົ່ນຖາງ
ໃຫ້ເຂົາຫຸ່ມນິນທາ
ຊິຢູ່ເປັນຊັ້ນບໍ່ອ້າຍ
ຕາມກັນໃຫ້ມັນຊ່ວງ
ຊິເປັນພ້ອງເພື່ອນຝູງ
ຂົງເຂດວົງກົດ
ຄ່າງລີງກະຕາມແມ້
ອອກໄປດົງຄົງທີ່
ແມ່ນຊິທຸກຍາກໄຮ້
ນັ້ນດອກນາ ພີ່ພະເອີ່ຍ.
ອອດອ່ວຍໄປມາ
ເວດທະນານຳອ້າຍ
ສາມີໂກໂພທິລາດ
ໃຈນ້ອງດອກຫ່ວງຫຼັງ
ເອີ້ນວ່າຫິມມະພານ
ໄດ້ລອບລອມເອົາໄວ້

ຕໍ່ໄປນີ້ທ່ານອາຈານເພິ່ນຊິໄດ້
ອາຈານ.....ວ່າໃຫ້ມັນແຈ້ງໆ
ເພິ່ນຊິສິມມຸດວ່າ
ອາຈານເພິ່ນຊິຈັດການທຳ
ຄອຍຝັງເອົາກັນໜ້າ
ແບ່ງກັນໄວ້ຈັ່ງຊີ້
ແລ້ວລະນາ
ເທດສະນາຕົກແຕ່ງ
ຄັນໃນແຫຼ່ເທດສະນາ
ໃນແມ່ຜຸດສະດີ ໂຍມເອີ່ຍ
ຄູ່ສູ່ອັນຕຽມພ້ອມ
ທານະຂັນກັນແຂ່ງ ໂຍມເອີ່ຍ
ພະອອນຊ້ອຍຊິອ່ອຍລົງ
ສັດທາໂຍມ.

ຈົບ (ກັນຫິມມະພານ ມີ 134 ພຣະຄາຖາ)

ກັນຕ໌ທີ່ 3 ທານະຂັນ ມີ 209 ພຣະຄາຖາ

ນະມັດຖຸ ຣັດຕະນັດຕະຍັດສະນອ້ມ
ອາຫັງຄາລະອະໄຫວ້
ເບື້ອງໜ້າຕໍ່ແຕ່ນີ້
ເຫວດສັນດອນຊາດົກ
ທັດສະພອນກ່ຳຈົບຖ້ວນ
ເທດສະນາກ້ຽງແລ້ວ
ທານະຂັນກ່າວຕ້ານ
ປະເພນີຄອງວັດ
ອາດຕະມາຊິຈາເວົ້າ
ຕາມນິທານພາກຂໍ້
ຕໍ່ນີ້ນັ້ນຜຸດສະດີຮູ້ແຈ້ງ
ຈາຕໍ່ນາງມະທິຂວັນ
ມາສົ່ງສານບຸດຕີໄທ້
ຢູ່ນຳກັນແທ້ໆ
ເຫວດສັນດອນວ່ານີ້
ສັ່ງເລົ່າມີເຫຼົ່າຄົນພານ
ຄົງບໍ່ຕາຍຍັງຊິໄດ້ພາກຂ້າງ
ອັນໂຮງທານເຈົ້ານັ້ນຕັ້ງ
ຢ້ານບໍ່ຍັງພໍເມັດ
ອະພິວັນທະນາວາດ
ຄຸນແກ້ວໜ່ວຍສາມ
ຊິສືບຕໍ່ຄຳກອນ
ຍົກນິທານຈາຊ້ອນ
ຫິມມະພານກະໄດ້ວ່າ
ຊິຮຽງແຫຼ່ຕໍ່ນິທານ
ນິທານພາກໂພທິສັດ
ພາກນິທານເດີມເຄົ້າ
ຈັບສຳເນົາຊີ້ອ່ານ
ຊິຂໍເວົ້າກ່າວຖະແຫຼງ
ປະໂລມເລົ່າສຸນິສາ
ເຈົ້າຮ່ຳໄຮທັງໄທ້
ມະທິນາງລູກຂອງແມ່ ແພງເອີ່ຍ
ສັ່ງຊິໃຫ້ເຈົ້າດ່ວນໜີ
ຄົນເກັ່ງກະທຳທານ
ກ່ຳກັມເຈົ້າທຳຮ້າຍ
ເຈົ້າຮາມຮ້າງຫ່າງວັ່ງ
ສ້າງກ່ຳຢ້ານເພຍັງ
ສິ່ງຂອງທອງໃຊ້

ສຸດສາຍໃຈ
ເວນຫຍັງນໍແຕ່ປາງກ່ອນ
ຢູ່ກາງຜາສາດກວ້າງ
ທຸກທົ່ວບ້ານ
ເຈົ້າຊິເດີນກາງໄພ
ຍ່າຊິໄປທູນເຈົ້າ
ບາງທີລະໂທດໃຫ້
ຕອນນັ້ນ ຜຸດສະດີໄປອອນໄຫວ້
ຂໍງົດໂທດລູກໄວ້
ຜຸດສະດີຈຶ່ງກັບກ້ຽວ
ຈາກັບນົງນາງຄານ
ສຸດທີ່ກືນລົງໄດ້
ແມ່ຂໍພໍ່ບໍ່ໄດ້
ຕອນນັ້ນ ພໍເຖິງວັນຊິຈອນດ້າວ
ກັບລູກແກ້ວ
ຊິໜີໄກນະຄອນກວ້າງ
ຂຶ້ນສູ່ຫໍພະເຈົ້າແລ້ວ
ວ່າເຈົ້າຢ່າມີເຄາະຮ້າຍ
ລູກຊິໄກໃຫ້ພໍ່ມີຄວາມສຸກ
ມະທີຟຸມຟາຍນ້ຳ
ວ່າປູ່ເອີ່ຍ ລູກນີ້ຢູ່ບໍ່ໄດ້
ຂໍໃຫ້ປູ່ຍ່າໄດ້
ພັນປີໃນສົງສານ
ສິນໄຊຂໍຫຼານນ້ອຍ
ມະທີຍໍຍົກນິ້ວ
ວ່າປູ່ເອີ່ຍ ບຸນຫຼານນ້ອຍ
ຢ້ານມັນເພຜັງເສຍ
ຢ້ານຂັບຫຼານໜີຊ້ຳ
ປະສາຫຼານກັບລູກໄພ
ຕັ້ງແຕ່ພະເຫວດເຈົ້າ
ຈັກແມ່ນເວນຫຍັງຂ້ອງ
ເຈົ້າເຄີຍຫຼັບເຄີຍນອນ
ສະໜົມຫຸ້ມແກວ່ງໄກວ
ເຂົ້າຍໍຍົກສັນລະເສີນ ຄຳເອີ່ຍ
ພາກນະຄອນວາງໄວ້
ກຸ່ງສິນໄຊລອງເບິ່ງ
ຍັງຊິໄດ້ນັ່ງນະຄອນ
ຫຼາຍທີບໍ່ເຕື້ອງຕ່ຳ
ຕາຊ້າຍກະບໍ່ຫຼຽວ
ລົງມາຈາກຫໍປາງ
ແມ່ມະທີທັງສະອື້ນ
ມັນຄາຄໍຢູ່ຈໍ່ລໍ່ ມະທີເອີ່ຍ
ຊິຈຳໃຫ້ ເຈົ້າຫ່າງກັນ ໂອຍ....
ດຸ່ງໄພຂອງພະເຫວດ
ທັງນາງຫຼ້າມິ່ງມະທີ
ໄປອຳລາພະຍາພໍ່
ກ່ຳເລີຍຂຶ້ນກາບຖວາຍ
ເທາະເດີພໍ່ສິນໄຊ
ນັ່ງນະຄອນຄອຍຕຸ້ມ
ໄປອຳລາພະຍາປູ່
ຊິຕາມກົ້ນເຈົ້າເຜົ່າຜົວ
ຕຸ້ມໄພ່ໃນນະຄອນ
ກະຢ່າມີຄຳຮ້ອນ
ຄອງນະຄອນແທນປູ່
ໄດ້ວອນໄຫວ້ຂາບຖວາຍ
ບໍ່ຄອຍຢູ່ຄອງນະຄອນ
ບໍ່ຖືກໃຈພະອົງທ່ານ
ບໍ່ຫຼຽວນຳພໍໄງ່
ຊິເອົາໄວ້ເຮັດອີ່ຫຍັງ
ເປັນລູກເກີດກັບອົກ

ພະຍັງຂັບໜີເມືອງ
ສົນໄຊເຈົ້າ
ລູກສະໄພເວົ້າສຽດປູ່
ໜ່ອຍກໍ່ລົງຈາກຫົ້ນ
ຕ່າງຄົນຕ່າງຊິໂສກີໃຫ້
ແນວຊິໄກກັນນີ້
ຄົນບໍ່ຕາຍຍັງຊິໄດ້ຫ່າງໜ້າ
ຜຸດສະດີຈົນວ່າເກົ່ ີ
ຈັກຊິເປັນແນວໃດ
ຄິດນຳເດ ຄິດນຳແກ້ວ
ສາດບໍ່ມີໝອນບໍ່ພ້ອມ
ເຈົ້າເຄີຍກິນຂອງສົ້ມ
ຍາມເຈົ້າພັດພາກບ້ານ
ມີແຕ່ຜົນໝາກໄມ້
ໃຜຊິຈັດແຈງຫາ
ມາເຫຼືອໃຈກູເດ
ເວນຫຍັງເດມາແລ່ນຕ້ອງ
ຕອນນີ້ ຜຸດສະດີຈົນວ່າເກົ່ ີ
ຈັກຊິເປັນແນວໃດ
ຄິດນຳເດ ຄິດນຳສອງຫຼານແກ້ວ
ສອງກັນຫາຊາລີ
ຮອດມື້ເຊົ້າຈຶ່ງເລືອກເຟັ້ນ
ເບີກພະຄັງທຳທານ
ລາລົງປາງທອງກວ້າງ
ຜຸດສະດີນາງ ນ້ຳຕາໄຫຼຍັ່ງຍ້ອຍ
ຜຸດສະດີນ້ຳຕາຫົ້ງ
ຮອດມື້ເຊົ້າເຫວດສັນດອນກັບນາງຄານ
ພວກຍາຈົກຂີ້ຂ້າ
ນັ່ງຢູ່ຕາມຫົນທາງ
ມີຄົນຫຼາຍໝູ່ບ້ານ
ບໍ່ຫ່ວງນຳພໍ ີ
ນ້ຳຕາພັ່ງຢັ້ງບໍ່ຢູ ໂອຍ.....
ນ້ຳຕາໄຫຼຍ້າວໆຊາວອຸ້ມກອດແຕ່ຫຼານ
ໄປລາແມ່ຜຸດສະດີ
ນຳກັນໄດ້ເຫີນຫ່າງ
ເຕັມທີສອງຝ່າຍ ຍາຍເອີ່ຍ
ໂລດເປັນບ້າປ່ວງລະເມີ
ຄະນິງລູກແລະຫຼານຮັກ
ບາດພາກວັ່ງວຽງແລ້ວ
ກັນຫາຊາລີຮາດ
ຊິນອນຄ້າງຢູ່ວ່າງດິນ
ຫວານຄາວຕາມແຕ່ຢາກຄຳເອີ່ຍ
ຊິຫາໄດ້ເຈົ້າແຕ່ໃສ
ກອຍເຜືອກມັນແຊງ
ແຕ່ງພາຖວາຍໄທ້
ກັມເວນໆມີສັງຊິພາກລູກອ່ອນ
ສະອອນໂອ້ ອັ່ງມະໂນ
ຄະນິງລູກແລະຫຼານຮັກ
ບັດພາກວັ່ງວຽງແລ້ວ
ດີຫຼາຍຮ້າຍຍິ່ງ
ເຈົ້າຊິຕາຍໃນດ່ານດ້າວຄາວນີ້ຍ່າບໍ່ເຫັນ
ຈັດແຈ່ງແພພັນ
ຄູ່ຊູ່ແນວບໍ່ຍັງເຫຼືອຄ້າງ
ນ້ຳຕານາງກະລຸລັ່ງ
ເປັນປຸ້ມຍ່າວລົງ
ນຳສິ່ງທາງຫຼານ
ຂີ່ລົດຍົນທຽມມ້າ
ເດີນຕາມມາກະລົ້ນລັ່ງ
ຍົກມືຂຶ້ນວຶ້ນໆຂໍທ້ານຕະຫຼອດທາງ
ໄດ້ມາລັດປະສົງຂໍ

ພະອົງຍໍທຳທານ
ອາສະໄນມ້າ
ລົດແລະລາບໍ່ໄດ້ຄ້າງ
ຈັ່ງວ່າໃນຕອນນີ້ກະທາກຈົບລົງແລ້ວ
ທານະຂັນຈົບລົງ
ເອວັງທີຕົນຂ້າ
ເພິ່ນຊິເທດຕໍ່ຊ້ອນ
ແລ້ວລະນາ

ບໍ່ໃຫ້ຍັງເຫຼືອຄ້າງ
ເງິນຕາຜ້າຜ່ອນ
ປະທານໃຫ້ຄູ່ສູ່ແນວ
209 ພຣະຄາຖາ
ເອົາແຕ່ພໍພຽງນີ້
ອາດຕະມາຍົກໄວ້ນີ້ສາກ່ອນ
ພະອວນຂ້າຊິອ່ວຍລົງ
ສັດທາໂຍມ.

ຈົບ (ກັນທານະຂັນ ມີ 209 ພະຄາຖາ)

ກັນຕ໌ທີ່ 4 ວັນມະປະເວດ ມີ 57 ພຣະຄາຖາ

ບັດນີ້ ພໍເມື່ອສຸຣິໂຍຂຶ້ນ
ລົມພັດຕົ້ນດອກໄມ້
ແລເຫັນເມກແລ່ນລ້ອມ
ຕົກເຖິງຄາວຊິເດີນໄພ
ຊວນເອົານາງມະທິໄທ້
ຄົດສະສານຂຸນຊອນ
ສິ່ງໝູ່ນີ້ບໍລິຈາກທານໝົດ
ໃຫ້ຕຽມຕົວອຸ້ມລູກ
ສ່ວນວ່າຊາລີພະ
ມະທິຟຸມຟາຍນ້ຳ
ຫຼຽວຄືນຫຼັງກໍ່ບໍ່ໄດ້
ໃນຂະນະນັ້ນ
ບອກເລົ່າເມຍຂວັນວ່າ ມະທິເອີ່ຍ
ຢ່າໄດ້ເພີ່ນທາງຫຼຽວ
ຊື່ວ່າທຽວໃນຫ້ອງ
ບາບບຸນເປັນຜູ້ແຕ່ງ
ແຕ່ກ່ອນເນົາຢູ່ຢັ້ງ
ດຽວນີ້ເຮົາພອຍພັດ
ນາງຢ່າມີວເມົາຢ້ານ

ບົວລະພາຝ້າໃໝ່
ຈັນຄ້ຶກິນຫອມ
ກະເລື່ອນໆກາງຫາວ
ພາກວັ້ງວຽງໄວ້
ກັບບຸດຕາສອງອ່ອນ
ອາຊະໄນໝູ່ມ້າທັ້ງພ້ອມລົດລາ
ບອກແກ່ນາງມະທິແກ້ວ
ໃຫ້ນາງອຸ້ມຜູ້ນ້ອຍນາງນາດກັນຫາ
ພີ່ພະອົງຊິເອົາອຸ້ມ
ຊົນລະທາອຸກອັ່ງ
ນ້ຳຕາຍ້ອຍຍ່າວລົງ
ອົງພະເຫວດຈຶ່ງກ່າວເວົ້າ
ເຈົ້າຈົ່ງອົດສາເດີນ
ຊິຕ່ອຍຕຳຕົນຕ້ອງ
ສົງສານກະຍາກແຍ່ງ ນາງເອີ່ຍ
ປາຖະນາບໍ່ໄດ້ອາໄລຫ້ອງຣາຊະວັງ
ສະເຫວີຍຣາດເປັນກະສັດ
ຊິພາກວັ້ງວຽງໄວ້
ການເດີນທາງຊິຢຸດຢ່ອນ ມະທິເອີ່ຍ

ໜ້ອຍໜຶ່ງແດດແຮງຮ້ອນ
ພະເຫວດເວົ້າຕໍ່ນ້ອງ
ຄາວເມື່ອໄກວຽງວັງ
ບຸນຜະຫຼາມໍາປ້ອງ
ເຫດມັນເປັນຈັ່ງຊີ້
ນັ້ນເທາະນາ
ເອີ ຄັນນາງຄິດຢາກໄດ້
ກະບໍ່ຄວນຕາມຜົວ
ຊື່ວ່າຄີຣິກ້ວາງ
ປາກຫາກເວົ້າຈ້ອຍໆ
ຄາວຄັ້ງນັ້ນເປັນລະດູແລ້ງ
ໄດ້ຍິນແມງເລໄລ
ໄດ້ຍິນເຂົາຂັນກ້ອງ
ຍິນສະອອນຮໍ່າໄຫ້
ເດືອນສີ່ຝ້າຮໍ່າຮ້ອງ
ຜັດຕາມເງົາສາຂາ
ກາຍໄປແລ້ວ
ເຫັນແຕ່ຝ້າຫໍ່ຫຸ້ມ
ເລື່ອນໆຍ້າຍ
ແລເຫັນບັບພະໂຕສູງ
ເຂົາສຸວັນຄີລີຂ້າມ
ແດດແຫ່ງເຜົາຄົນແຫ່ງລ້າ
ສອງອ່ອນນ້ອຍ
ນາງກັນຫາຫົວນົມ
ໜ້າອິດ ສອງນ້ອຍ
ຜົນເຝືອງໄຟແລະໝາກຫວ້າ
ຄາວນັ້ນເທບພະທ່ອນເຈົ້າ
ມະທິເກັບເອົາຜົນ
ຄ່ຳມານອນໃນດ້າວ
ເອົາຫົວໜຸນທ່ອນໄມ້
ຕີນນ້ອງຊິເປື່ອຍພອງ
ອ່ອນໆປະໂລມຂວັນ
ໃຫ້ເບິ່ງກັນເທາະເນີນ້ອງ
ຄົງຊິຄືນນະຄອນເຣດ
ໃຫ້ຄອຍສ້າງຮ່ວມຜີຊາຍ
ມະທິເອີ່ຍ.
ປະສົບໂຊກຄວາມສຸກ
ດຸ່ງມາປານນີ້
ປວງປະຊາມັນເດີນຍາກ
ສິງສານນ້ອຍນາດຖະແພງ
ປ່າໄມ້ໂປ່ງໂຫຼງເຫຼງ
ຈັກຈັ່ນອີແມງງ້ວງ
ຫານສຽງທອງວີວ່ອນ
ມະທິນັ້ນໝົ່ນໝອງ
ລົມພັດປັ່ນຊາຍເຂົາ
ຊົ່ວປະດຽວເລີຍຍ້າຍ
ຫຽວຄືນມາມືດຈຸ່ມກຸ່ມ
ກອມກຸ້ມທົ່ວທະຣັງ
ນະພາພາດເມໂຄ
ຄາດລະວ່າງທາງໜ້າ
ໜາມຄອງເກາະແຂ່ງ
ສີໜ້າກໍ່ລ່າເຫຼືອງ
ອວນແອ່ວກິນຜົນ
ຊິແອ່ວກິນທັ່ງຈູ້
ວອນເອົາເວົ້າແມ່
ແລແລ້ວກະແອ່ວເອົາ
ກໍ່ນ້ອມຍອດບັນດານ
ຮັບປະທານທັ່ງປ້ອນ
ຫີນໜາວເລີຍບໍ່ອຸ່ນ
ແພຜ້າແຜ່ນປູ

ເດົາມານ້ຳໝອກຍ້ອຍ
ສອງກຸມມານຄອຍຄອງ
ໄດ້ຍິນສຽງເສືອຄ່າງ
ອົງຣາຊາພະເຫວດທ້າວ
ເພາະມີເທບພະທ່ອນໄທ້
ຊື່ວ່າໂພຍໄພສັງ
ພໍອຸໄທແສງຂຶ້ນ
ອາທິດໃສແຈ່ມຟ້າ
ເລີຍເລົ່າຂ້າມແມ່ນ້ຳ
ຊື່ໂກກິມາລາ
ເຖິງນະຄອນຫຼວງກວ້າງ
ເຖິງເຈຕຸມແມ່ນ້ຳ
ຕົກຮອດເທົ້າ
ມຸດຈະລິນສະສີ
ພະອິນບັນດານສາລາໄວ້
ໂຂມະຜືນແຜ່ນຜ້າ
ສຳເຫຼັດແລ້ວ
ເຫວດສັນດອນເດີນເຖິງ
ຫຼຽວເຫັນສາລາເຫຼື້ອມ
ເຫວດສັນດອນຮູ້ເລື້ອງ
ແລ້ວຈຶ່ງບອກແກ່ເຈົ້າ
ວ່າມະຫີເອີ່ຍ ຕໍ່ແຕ່ນີ້
ນາງເປັນດາປະສີນີ
ຜີຊີສັນຍາໄວ້
ກາມກິເລດກໍ່ເກື້ອ
ເຮົາຊິບຳເພັນສ້າງ
ເນົາສາລາຄົນຫຼັງ
ນາງຮັບເອົາໝົດແລ້ວ
ສັນຍາຂ້າຮັບໄວ້
ນັ້ນລະນາ
ນ້ຳຮົ່ວບົນໃບຕອງ
ໃຫ້ແມ່ຄົງຄຽງຂ້າງ
ຢູ່ກາງໄພໃນປ່າ
ບໍ່ມີຢ້ານຢ່ອນໄພ
ມາພິທັກອົງກະສັດ
ໂລດບໍ່ມີມາໃກ້
ບົວລະພາຟ້າໃໝ່
ມາແລ້ວກະເລົ່າເດີນ
ສາຍໜຶ່ງຊົນລະທາ
ກະບໍ່ມີຄຳຮ້ອນ
ນະຄອນໄຊເຈດຕະຣາດ
ກໍ່ເລີຍໄດ້ພັກເຊົາ
ເຖິງສະໂບກຂະລະນີ
ພັກເຊົາພຽງນັ້ນ
ໃນເຂົາຫິມມະເວດ
ມີພ້ອມເຄື່ອງຊົງ
ຂຶ້ນຫໍຣາຊດາວະດຶງ
ແປກພະໄທຊົງຢ້ຽມ
ມຸງດີຕົດປະກາດ
ກໍ່ເລີຍໄດ້ພັກເຊົາ
ນ້ອຍນາດນາງມະຫີ
ຜີຊີເປັນດາບົດ
ນຸ່ງໂຂມັງຜ້າ
ໃຫ້ນາງຈຳຈົດຈໍ່ ນາງເອີ່ຍ
ນາງນ້ອງໃຫ້ລະເສຍ
ປາລະມີສູ່ຝັ່ງ
ກໍ່ລະກາມບໍ່ຄືເຄົ້າ
ຍໍພະກອນກົ້ມຂາບ
ຊິໝົດຖ້ວນຄູ່ສູ່ອັນ
ຜີພະອົງ

ອີກອັນໜຶ່ງ ປົກກະຕິນາງນັ້ນ
ສ່ວນກັນຫາຊາລີ
ໄປໃນໄພດົງດ້າວ
ອຸປະຖຳທ່ອນທ້າວ
ອົດສາລ້ຽງລູກນ້ອຍ
ລ່ວງມານານຫຼາຍເດືອນ
ນັບໄດ້ເຈັດເດືອນຖ້ວນ
ອົດສາກິນໝາກໄມ້
ກັນນີ້ຢຸດພັກໄວ້
57 ພຣະຄາຖາ
ສັດທາທ່ານຄູ່ສູ່ຄົນ

ໃຫ້ເຂົ້າປ່າຫາຫົວມັນ
ຝາກພະສາມີໄວ້
ຕາເວັນແດງກ່ຳໃຫ້ຕ່າວ ນາງເອີ່ຍ
ບໍ່ມີໃຫ້ຝຶດເຄືອງ
ກັບທັງພໍ່ພະລືສີ
ກະບໍ່ມີຄຳຮ້ອນ
ແຕ່ແຮມໄພພາກຖິ່ນ
ຕາງເຂົ້າຢູ່ໄພ
ເອີ້ນວ່າອັນະປະເວດ
ເດີໝູ່ຍາດພີ່ນ້ອງ
ນັ້ນລະນາ ສັດທາເອີ່ຍ

ຈົບ (ກັນອັນນະປະເວດ ມີ 57 ພຣະຄາຖາ)

ກັນຕ໌ທີ່ 5 ຊຸຍຊະກະ ມີ 79 ພຣະຄາຖາ

ບັດນີ້ ຈົບປົດແລ້ວ
ນອນລະຫົ່ງຢາກຮູ້
ຈັ່ງວ່າເຊົ້າມົດຄ້ອຍ
ງ່ຽງໃຫ້ຫູທັງສອງ
ຮຽງກັນເປັນຂໍ້ໆ
ຄັນວ່າສຽງຕ່ຳສຽງ
ເພິ່ນກ່ຳເວົ້າເປັນເລື່ອງເທດສະນາ
ອັນະປະເວດແຈ່ວ
ເລື່ອງຂອງພະເຫວດນັ້ນ
ແຕ່ບັດນີ້ຍ້ອນກ່າວກ້ຽວ
ພໍໃຫ້ໂຍມຟັງຊັດ
ເພິ່ນໄດ້ລົງເອົາໄວ້
ກັບພະເຫວດທ່ອນທ້າວ
ສາລາໃຫຍ່ພັກຢ້ຽມ
ພາກັນກິນທຳທານ
ຫວັງເອົາຜົນຜະຫຼານ້ອມ

ຊິມີແນວແຖມສິ່ງ
ໃຫ້ຟັງແຫຼ່ຕ່ຳເລີຍ
ເວົ້າຄ່ອຍໆເດີໂຍມ
ໂປດຮັບຟັງກະແສເລື່ອງ
ໃຫ້ໂຍມຟັງພໍຮູ້ເລື່ອງ
ກອນຕ່ຳກອນ
ວ່າງຫັ້ນວ່າໄປແລ້ວ
ສຽງດັງກ້ອງສະນັ່ນ ແມ່ໃຫຍ່ເອີ່ຍ
ໄກຂ້າງຫ່າງນະຄອນ
ຂ້າຊິວ່າຕາມປະຫວັດ
ຕ່ຳໄປພາຍພຸ້ນ
ຕອນມະທິຮຽມພາ
ໄປເນົາຢັ້ງຢູ່ໄພ
ບໍລິຈາກກະທຳທານ ແມ່ໃຫຍ່ເອີ່ຍ
ຝ່າຍປາລະມີຕັ້ງ
ສັງໂຄໃຫ້ຕັ້ງຕ່ຳ

ອົງສັມມານໍໂຍມພໍ
ຕໍ່ແຕ່ນີ້ຜູ້ຂ້າຊິໄດ້ເວົ້າ
ເອົາກັນໃດ່ວ່າຕິແມ່ໃຫຍ່
ນີ້ແມ່ນກັນທີ 5
ຟັງເປັນວັກເປັນຕອນ
ດອກຂັນຂໍ້
ຈັ່ງວ່າເລີ່ມຈາກນີ້
ສົມມຸດໂຕເປັນພາມ
ສົມມຸດໂຕເປັນເຖົ້າ
ຟັງເດີແຖວໂຍມເຖົ້າ
ກັນຊູຊິກບ່ອນນີ້
ຈາລະໄນເຖິງເຖົ້າ
ຕະເລີດເຖິງທ່ານເຖົ້າ
ໃນໜັງສືບອກແຈ້ງ
ເມືອງກະລິງບ່ອນເນົາ
ຕອນອີ່ຕາພາມເຖົ້າ
ມັນຫາກຝັນປະຫຼາດແທ້
ຝັນວ່າກິນຜັກບົ້ງ
ກິນປາທູໝົດເຈັດແກງ
ບໍ່ໜຳຊໍ້າຍັງໄປຕັກເອົານໍ້າ
ສີ່ຄຸຖົງລ້ອນໆ
ວັນທີ່ລາວເກີດນັ້ນ
ເກີດບັນດາມສັງຫອນ
ລາວເປັນຄົນຖະແຫຼງບ້ານ
ຫົວເປັນຫຍຸມຮູບຂີ້ຮ້າຍ
ຂາແລະແຂນກໍ່ປຸ່ມເປົ້າ
ກຸຍພໍປານໂຄງຄວາຍ
ແນວເໝັນແຮງຂອງເຖົ້າ
ເຄົາກໍ່ລາມຮອດກົ້ນ
ເຂົາໃສ່ຊື່ໃຫ້ແຕ່ນ້ອຍ
ເຮົາຍັງນິບນ້ອມໄຫວ້ກັນໄວ້ສູ່ອັນ
ຕໍ່ໄຕ່ກັນໄປ
ເອົາກັນຊູຊິກໝູ່ກະໂຍມຈຳໄວ້
ໂຍມສັດທາຟັງໄວ້ກ່ອນ
ຕ້ອງເຂົ້າໃຈບ່ອນນັ້ນ
ໄດ້ຕໍ່ເຕີມນໍໂຍມ
ຜູ້ຂ້າຊິວ່າກັນຊຸຍຊິກ
ທ່ຽວຂໍສອງນ້ອຍ
ຈາລະໄນໃຫ້ໂຍມຮູ້ຈັກເລື່ອງ
ຟັງເອົາໃຫ້ຖ້ວນຖີ່
ຂ້ອຍຊິເວົ້າສູ່ຟັງ
ອີ່ຕາພາມລົງມາເກີດ
ໄປຂໍນ້ອຍນາດຖະແພງ
ຊຸຍຊິກເປັນນາມຈິງ
ຈອດເຊົ້າພໍຫາຍຮ້ອນ
ມາຖືຄັນໃນທ້ອງແມ່
ບໍ່ຄືທ້ອງເພື່ອນຝູງ
ໝົດເຈັບຫາບກະບຸງຫູ
ລາບງົວໝົດເຈັດຖ້ວຍ
ຂີ້ຕົມຄວາຍມາຖົ່ມ
ກິນສ້ຽງບໍ່ໃຫ້ຍັງ
ມີລາງຫຼາກຫຼາຍປະການ
ມຶດມົນບໍ່ມີແຈ້ງ
ອັນທະພານຜິດຮີດ
ກາຍເສົ້າປູດເປົ້າ
ໜ້າຂີ້ດຽດເຫຼືອກະດັດ
ກິ່ນເໝັນພໍປານແຮ້ງ
ເໝັນຫຼາຍແມ່ນຂີ້ເຕົ່າ
ປານຍຸ້ມໝາກບວບລອຍ
ເອີ້ນວ່າຊຸຍຊິກ

ຊຸຍຊິກຕົກລົງເປັນຄົນຂໍ
ອາໄສລຸງກໍ່ຕາຍຈ້ອຍ
ຊາດວ່າຄົນຂີ້ຮ້າຍ
ລາວເລີຍເກີດເດືອດວຸ້ນ
ຕົກລົງໄປຂໍທານ
ລາວຮີບໂຮມເງິນໄດ້
ຊາດວ່າຄົນຂີ້ຮ້າຍ
ຈັກຊິເອົາໄປລີ້
ອີ່ຕາພາມຈົນໃຈ
ຄິດໄປມາຫາເພື່ອນ
ຝາກເງິນສີ່ຮ້ອຍໄວ້
ໄປຮອດທີບພໍ້ວໍ້
ກັບມາເອົາເງິນຄືນ
ສ່ຽວໃຊ້ເງິນໄປໝົດກ້ຽງ
ຫາອັນໃດກະບໍ່ໄດ້
ຄອບວ່າໂຕບໍ່ເປັນກ້າວ
ຍົກລູກສາວແທນເງິນ
ອາມິດຕານາງຫຼ້າ
ຕາພາມໄດ້ນາດນ້ອງ
ໃຈຂອງພາມດີແທ້
ແມ່ນບໍ່ມີເງິນຄຳ
ວ່າແຕ່ເອົານາງແກ້ວ
ເງິນກະແມ່ນເງິນຄ່າໜີ້
ລາວກໍ່ຄິດບໍ່ເສົ້າ
ແມ່ນໃຜໆກໍ່ລືຊາ
ຄັນແມ່ນໄດ້ເມຍແລ້ວ
ຊວນເອົານາງອະມິດຕາ
ສຸກສຳລານກະເສມສ້ານ
ຍ່າງໄປໃສຫ້ອຍຸ້ມໆ
ສຸກຢູ່ໃນໂລກນີ້
ພໍ່ແມ່ຕາຍແຕ່ຍັງນ້ອຍ
ອາໄສອາກໍ່ຕາຍຫ່າ
ອາໄສບ້ານເພີ່ນບໍ່ຄືນ
ບໍ່ມີທີ່ອາໄສ
ທ່ຽວຂໍຕາມບ້ານ
ເປັນເງິນໄທສີ່ຮ້ອຍບາດ
ຫາໄດ້ຈັ່ງຄ່ອຍດີ
ຊຸກເຊື່ອງໄວ້ທາງໃດ
ແຕ່ຊິເອົາເງິນໄວ້
ທາງໄກຊິໄປຝາກ
ຄັນເດີນດົ້ນທ່ຽວຂໍ
ໂງ່ຫາສ່ຽວຕາມເດີ່ມ
ສ່ຽວໃຊ້ສອຍໄປໝົດກ້ຽງ
ບໍ່ມີເຫຼືອຊິຄ້າງໄຖ່
ກະເລີຍໄຫ້ໃສ່ລູກສາວ
ໃຊ້ເງິນເພີ່ນຈົນໝົດ
ຊ່າງບໍ່ອາຍຂາຍໜ້າ
ເປັນເມຍພາມຈັ່ງແມ່ນຄ່ອງ
ມັນຫ້ອຍຸ່ມຢູ່ໃນ ເຮີ້ງ
ບໍ່ຫຼີກແວ່ໄປທາງໃດ
ກະຊ່າງຕາມຕີວເຈົ້າ
ອະມິດຕາມາຊ້ອນຄູ່ ນໍໂຍມ
ເມຍກະແມ່ນເມຍຄ່າໜີ້ ພາມເຖົ້າກໍ່ຈິ່ງເອົາ
ໄດ້ເມຍໜຸ່ມຊຸມສາວ ໂຍມເອີ່ຍ
ຊ່າກັນໄປໄດ້
ກັບຕ່າວເຄຫາ
ຕ່າວຄືນເມືອບ້ານ
ອີຕາພາມໄດ້ເມຍໜຸ່ມ
ພໍປານໄດ້ໜ່ວຍມະນີ
ກະຄືຕອນເມຍຮັກ

ສ່ວນວ່າເງິນຫຼືທອງ
ອະມິດຕານາງແກ້ວ
ທຳແຕ່ດີຖືກຕ້ອງ
ຄອງອັນໃດເພິ່ນຕັ້ງ
ຖືຕາມສາມີວັດ
ຈົນຜູ້ຍິງແຖວນັ້ນ
ຮ້າຍໃຫ້ນາງໂຈ້ເຈ້
ອີຕາພາມມັນກຸ້ມ
ບອກໃຫ້ໄປຂໍຄືນ
ຈຳໃຈພາມມະໂນໃຫ້
ເຂົ້າບໍ່ມີຊິຈອກໜ້ໍ
ມື້ໜຶ່ງນັ້ນ ນາງອາມິດຕາເຈົ້າ
ຈັກເຂົ້າຈາເຂົ້າແຊວ
ຄືນເຫັນນາງອະມິດຕາແກ້ວ
ພາມມະໂນຂີ້ຮ້າຍ
ອຸກປານຟ້າຊິຂາດມ້າງ
ນາງອະມິດຕາຈຶ່ງບໍ່ຄິດ
ມຶງເປັນເດັກນ້ອຍມາໄດ້ຜົວຄືນເຖົ້າ
ນາງອະມິດຕາຈຶ່ງວ່າປາກບໍ່ໄດ້
ນາງກໍ່ຈຶ່ງໄດ້ຮ້ອງ
ກັບຄືນມາເຮືອນພາມ
ພາມຫຼຽວເຫັນວ່າເປັນຫຍັງນໍ້ອຍ
ເຈົ້າເປັນຫຍັງຈຶ່ງໃຫ້
ມາຈັ່ງຊີ້ຂີ້ເຂັບກະບໍ່ໄດ້ຕອດ
ຈາກນັ້ນນາງອະມິດຕາ
ຄັນບໍ່ໄປຫາຄືນຂ້າຍິງຊາຍມາໃຫ້
ຊິຄືນເມືອສູ່ບ້ານ
ພໍແຕ່ວ່າທໍ່ນັ້ນ
ພາມຈຶ່ງຈາຄຳໄຂ
ວ່ານາງເອີ່ຍຕໍ່ໄປນີ້

ສ່ວນບໍ່ມີກະຕາມແລ້ວ
ຖືຄອງຕາມຊ່ອງ
ບໍ່ມີໄດ້ໜ່າຍແໜງ
ນາງກໍ່ໝັ່ນປະຕິບັດ
ບໍ່ລ່ວງພາງຕິອະຫຼີ້ນ
ເຂົ້າຊິ້ງຊັງແໜງໜ່າຍ
ຕີຂ້າໄລ່ໂຄມ
ເຫັນເມຍທຸກອຸກໃຈ
ຊ່ວງຕີນຕາງໃຊ້
ຊິໄປໃສນໍ້ອຸ່ນ
ຊິພໍໄດ້ກະຊ່າງຕາມເຄນ
ໄປລົງທ່ານຳເຂົ້າ
ຊ່ານັ້ນຫຼາຍລົ້ນ
ສຽງແຊວໆເອີ້ນໃສ່
ເຂົ້າເວົ້າດ່ານາງ
ຈັກວ່າແມ່ນແນວໃດ ໂຍມເອີ່ຍ
ຫ່ວງນຳພໍ້ນ້ອຍ
ສຽງເຂົ້າແຊວເວົ້າວ່າ
ແສນເສົ້າເກົ່າໝອງ
ຮ້ອງໂຮ່ໂພສັງກາ
ກະກ່າວຈາຄີ້ຄ້ອຍ
ອະມິດຕາເມຍມິ່ງ
ມາເຮືອນເຫຍື່ອຍໆ
ແມ່ງອດກະບໍ່ໄດ້ຕ່ອຍກູດອກ
ກໍ່ຈຶ່ງວ່າພີ່ພາມເອີ່ຍ
ອະມິດຕາຊິກັບຕ່າວ
ຂ້ອຍຢູ່ບໍ່ໄດ້ມາແລ້ວສູ່ອັນ
ພາມຈຶ່ງວ່າຕໍ່ລົງໄປ
ກ່າວຈາຖະແຫຼງຕ້ານ
ເຈົ້າຢ່າໄປຕັກນ້ຳທຳຄ໊ວຄືເກົ່າ

ພໍ່ອາສາຜູ້ເຖົ້າ
ນາງອະມິດຕາແກ້ວ
ວ່າພາມເອີ່ຍນາງບໍ່ເຄີຍເອົາແລ້ວ
ແມ່ນຊີທຸກຍາກໄຮ້
ແຕ່ວ່າຂໍໃຫ້ເຈົ້າໄປຂໍຄືນມາໃຊ້
ຄັນບໍ່ທຳຈັ່ງຊັ້ນ
ພໍແຕ່ວ່າທໍ່ນີ້
ອັນວ່າເງິນຄຳແກ້ວ
ແສນວ່າລຳບາກຮ້າຍ
ເຂົ້າຊິກິນອີ່ມທ້ອງ
ຊໍ້າບໍ່ໜຳຍັງຊິຫາຄືນໃຊ້
ເຈົ້າຢ່າເຮັດຈັ່ງຊັ້ນ
ພໍວ່າແລ້ວນາງອາມິດຕາເຈົ້າ
ຄັນແມ່ນເຈົ້າບໍ່ຫາຄືນ
ນາງຊິກັບຕ່າວບ້ານ
ພາມກໍ່ຈິ່ງວ່າໂອ້ຍ
ການທີ່ຫາຄືນນັ້ນ
ຄັນຫາເຫົ່າຢູ່ຫົວ
ດອກນາງຫຼ້າ
ຈັ່ງຊັ້ນພໍ່ຊິຕົກລົງໃຫ້
ນາງຈິ່ງຕຽມຫໍ່ເຂົ້າ
ຕຽມເອົາຂອງມາໃຫ້
ຄັນແມ່ນຕຽມໃຫ້ແລ້ວ
ແລ້ວຕໍ່ຈາກນັ້ນ
ກໍ່ຈິ່ງຕຽມຫໍ່ເຂົ້າ
ມີຫຼາຍແນວ
ເອົາລະຮອດບັດນີ້
ໂຍຕິກາໄວ້ນີ້ກ່ອນ
ອາວະສານພັກໄວ້
ນັ້ນເທາະນາ

ຊິທຳໃຫ້ຄູ່ສູ່ແນວ
ເວົ້າຕໍ່ອີ່ລຸງພາມ
ເອົາສາມີເປັນຫາດ
ນາງນ້ອງກໍ່ຊິເອົາ
ຕາງຕົນໃຊ້ຊ່ວງ
ຕົວຂ້ອຍສ່ວນຊິໜີ
ພາມກໍ່ຈິ່ງວ່ານາງເອີ່ຍ
ຂອງເຮົາມັນທຸກຍາກເສຍແລ້ວ
ປານນັ້ນກະບໍ່ດີ
ແລງເຊົ້າກະບໍ່ມີ
ຕາງຕົນໃຊ້ຊ່ວງ ວ່າຕົນາງ
ແນວນັ້ນກະບໍ່ເອົາ
ຈິ່ງບອກພໍ່ເປັນມາ
ໃຫ້ຫາແນວໃຊ້ຊ່ວງ
ສະເໜີດ້ວມດັ່ງໝາຍ
ນາງອະມິດຕາເອີ່ຍ
ຫາເຫົ່າຍັງຍາກກວ່ານາງເອີ່ຍ
ມັນຫາຍາກກວ່ານັ້ນ
ຢ່າອ່ອນໃຈເດີນາງ
ໄປໄວມາງ່າຍ
ຫາພ້ອມຍັດໃສ່ຖົງ
ຂອງກິນບ່ອນຊິຍ່າງ
ພາມເຖົ້າຊິຈາກນາງ
ນາງອະມິດຕາ
ພ້ອມພໍ່ຫຼາຍປະການ
ຍັດໃສ່ຖົງພາມເຖົ້າ
ຊຸຍຊະກະກັນຫ້າ
79 ຄາຖາຕອນ
ຕອນໜ້າຈັ່ງຄ່ອຍຟັງ
ສັດທາໂຍມ.

ຈົບ (ກັນຊຸຍຊະກະ ມີ79 ພຣະຄາຖາ)

ภันต์ที่ 6 จุละพิน มี 35 พระคาถา

บัดนี้ โปดสะดับธับข้อ
ทำมะพากกะแสสรุง
เป้นสำนรุง
พากสำนอนสรุงแหู่
ชาดิกาแปปะพันเพิ่ม
โดยผิมพาผะหยาเอก
สันเสกคัดเลือกเฟั้น
เอิามาหลิ้มเอี่ยสรุง
บัดนี้ฝังต่ำเมื่อง
มะหาชาดภันทิหิก
จ ละพินชิยุ์ยิก
เหดสะนาจาซ้อม
ก่าวเถิงตอนพามเข้ำ
พะนาเขิาดั้นป่า
ถามมักคาเพื่อนบ้าน
สะถานห้องห่องเถิง
ไปธอดเปิงเมืองกว้าง
สีพินะคอนเธด
ถามเถิงบ่อนพะเหอดยั้ง
พะนังไม้ละหว่างใด
ถึกก้อนหินและห่อนไม้
เขิาฝาดหน้าบ่สิงสาน
พวกขุทานชูชิก
ธิกสะถานดินบ้าน
เขิาลำคานชิลุมข้า
พามมะนากะใจต่าง
ขาสวากคางแล่นลื้อ
หิอไม้นั้นบ่อนไป
ลาวกำมาคิดได้
ไพฐากลันเป้นโยม
เดินทางไกบ่เหมาะสิม
อันเผดโยมชาวบ้าน
เหมาะแก่กานต้องหิ่งผ้า
สิขาวชิทรุวห่อง
ฝูงเผดไพชิบ่ต้อง
หากลองผ้าดั่งชิ
คิดแต่พรุงท่ำนี้
ก่ำถิเผดชิพาม
ห่รุวหาถามหินทาง
บ่อนชิไปในด้าว
ลาวนั้นสิมใจเถิ้า
ถามเขิากะบอกที่
เป้นเพาะกำเก่ากี้
สองฐ้านั้นจ่องจูง
จั่งแม่นสิมมาดมุ้ง
แล้วดั้นดุ่งไพพะนอม
เถิงเขิาธอมบ่อนนายพาน
เขดสะถานหวงห้าม
อิตาพามบ่หวนธู้
ว่าสัดตูชิลัดด่าน
ไปเจิหมานายพาน
มันก่ำเลียโหง่หุ้มเถิ้าพามย้ามสั่นสาย
หมานายพานมิแต่โตร้ายๆ
เต้นใสพ่ปานเสือ
หิอใจเผยหมิดหวัง
ดั่งชิเป้นลิมต้อง
หมากะแซวๆร้อง
โหยหวนหุ้มเห่า

ຕາພາມຖືໄມ້ເທົ້າ
ບໍ່ມີຝັງສຽງໂຫ່
ເຖົ້າພາມຮ້ອງຮ່ວຍໆ
(ເດີນ) ວ່າໝາບັກດຳຄາບສົ້ນນ່ອງ
ພາມຢ້ານຕາຍເຕັ້ນຫ້ອຍ
ຂົ້ນຕົ້ນສົ້ນ ຕົ້ນສົ້ນນັ້ນກ່ຳຫັກ
ໄມ້ເທົ້າຕອກຫົວໝາ
(ແຫຼ) ອະນິຈາພາມເຖົ້າ
ຂົ້ນໄປນັ່ງສະບັ້ນ
ພະເຫວດເນົາຢູ່ຜຸ້ນ
ພູດຖາຈານມາເຖິງ
ຂ້ານ້ອຍເປັນຄົນເຖົ້າ
ຕາຍຍ້ອນໝາຢ່າໃຫ້ພໍ້
ນັ້ນເທາະນາ
ຕອນນັ້ນເຈດຕະບຸດລ່ວງຍ້າຍ
ຈິງໄວເປື້ອງຕຽມຍິງ
ເລັ່ງໃສ່ເອົາພາມເຖົ້າ
ພາມເຖົ້າກອດງ່າໄມ້
ກູຊິຕາຍຄັກແທ້
ຕ້ອງໃຊ້ຫົວປັ້ນຍາຄົມ
ອອກດຳແດງ ຫຼືຫົວກ້ອຍ
ຮ້ອງຕະວາດວ່າເຮີ້ຍໆ
ຢຸດໆເດີຢຸດນິ້ງໆ
ຟັງເລື່ອງລາວສາກ່ອນແມ່
ເບິ່ງໃຫ້ດີບັກຕາໃບ້
ກູນີ້ໜໍ່ເປັນທູດໄທ້
ຄັນມຶ່ງເວົ້າບໍ່ຮູ້ເລື່ອງ
ສູຕ້ອງຕາຍໝົດຊຸມ
ຄົນຈັ່ງກູແມ່ນກາຍເຖົ້າ
ໝົດປະເທດເຂດແຄວ້ນ
ວິໜ້າແກວ່ງຫລັງ
ໝາຫຼາຍໂຕເຕັ້ນຈ່ອງ
ຊວຍແທ້ແນ່ລະກູ.
ໝາອີແດງຈ່ອງຖົ່ງລາຍ
ຂົ້ນຕົ້ນນ້ອຍ ຕົ້ນນ້ອຍນັ້ນກະໂຄ່ນ
ກ່ຳເລີຍປົ້ນຂົ້ນຕົ້ນກອກ
ວ່າເສະນາ ເສະນາ...ເສະ!!!ໆ
ລົ້ນລານຢ້ານສັ່ນ
ໄດ້ວອນໄຫ້ວຈົ່ມຄຸນ
ພະຄຸນແຜ່ໄພສານແນ່ເດີ
ເພິ່ງພຣະໂພທິຍານເຈົ້າ
ສົ້ມຄວນຕາຍຍ້ອນໄຂ້ປ່າ
ຂໍຖ້ວນໃຫ້ຜ່ວນຄາຍ
ພະອົ່ງເອີ່ຍ...
ມາຮອດທີ່ໄດ້ຍິນສຽງ
ໂກ່ງທະນູຕົ່ງເປ້ງ
ໝາຍເອົາໃຫ້ມຸດມອດ
ເອົາເອົກແຫຍ້ໃສ່ແຈ
ຕ້ອງລວງຫຼອກໃຫ້ມັນກົວ
ເຮັດໃຫ້ສົ້ມຈິງແຈ້ງ
ຊິລອງຝອຍໃຫ້ເດັດຂາດ
ເຊົ່າເວີ້ຍຢ່າຊິຍິງ
ຢຸດກ່ອນບັກຕາຂາວ
ຢ່າຊິແນມາທາງພີ້
ກູເປັນໃຜມຶ່ງຮູ້ບໍ່
ພະຍາທ່ານຜ່ານເມືອງ
ເຈັດຊົ່ວໂຄດຕ້ອງຈົບຫາຍ
ໂທດປະຫານຍິງເປົ້າ
ແຕ່ຈິດໃຈກ້າແກ່ນ
ຜູ້ຫານກ້າກະແມ່ນກູນີ້ແລ້ວ

ມຶງຢູ່ປ່າຫຍັງຊິຮູ້
ອຶງຈອມຄຸນພະສັນດອນ
ໃຜກະແຊວໆເອີ້ນ
ກູນີ້ລະ ຊິໄປເຊີນທ່ານທ້າວ
ກູຈຶງໄດ້ຮີບຮ້ອນ
ຕາມບັນຊາພະສີນໄຊ
ມຶງຢ່າວອນຫາເລື່ອງ
ບັ້ງປາແດກຈືກງົດງ້າງ
ເຈຕະບຸດໄດ້ຟັງຕະຫຼອດທົ່ວ
ຕົກຫຼຸມພາມຊູຊີກ
ຂໍອະໄພຕາທ່ານ
ຍອມຜູກໝາມັດໄວ້
ຂຶ້ນໄປຄາລະວະເອີ້ນ
ຂໍອະໄພທີ່ຫຼານຜິດ
ພາມໄດ້ທີກະເລີຍປ້ຳ
ກາບບັ້ງສານຈັ່ງຊິສິ້ນ
ຫຼຽວເບິ່ງນາຍພານກ້າ
ເຖົ້າພາມແຍກໜ້າຍຸ້ມ
ນີ້ລະເພິ່ນກ່າວໄວ້
ມີເຫດຜົນເຊິ່ງເຊົ່າ
ຄາວອັບຈົນປັນຍາໃຊ້
ຄົນສະຫຼາດໄດ້ຍົກໂປ້
ຜູ້ດີຢູ່ບ້ານນອກ
ຄຳທີ່ເພິ່ນກ່າວເວົ້າ
ເຖົ້າພາມຫຼິງແລເຫັນ
ສຽງນາຍພານອອຍເວົ້າ
ຕ່າງໃຫ້ຫຼານໄດ້ຊິດໃຊ້
ຫຼານຊິໄປທ່ຽວລ້າ
ຢ້າງເນື້ອຫຼາຍສາລະພັດ
ຊິກິນກວາງກິນເກ້ງ
ກູຊິບອກເອົາບຸນ
ຈາກນະຄອນດົນແລ້ວ
ຢາກທູນເຊີນໃຫ້ກັບຕ່າວ
ໃຫ້ຄືນເຂົ້າສູ່ນະຄອນ
ນຳຣາດຊະສານຕາ
ຊິດ່ວນໄປໄວຮ້ອນ
ເບິ່ງເອົາສາບັກຕາແຕກ
ຊູອ້າງໃຫ້ຢ້ານກົວ
ຈົນຕົວສັ່ນງັນງົກ
ສັ່ນສາຍລາຍບ້າ
ຫຼານຄົນດົງບໍ່ຮູ້ຮ່ອມ
ແລ້ວຫາໄມ້ກ່າຍເກີນ
ເຊີນມານັ່ງປາໄສ
ຈົ່ງໂຜດຜາຍຄາວນີ້
ມຶງມີກຳປະໝາດທ່ານ
ອະໄພໃຫ້ເທື່ອດຽວ
ຂໍຂະມາບັ້ງປາແດກ
ຫົວຍົ້ມຄັກກະໃຈ
ໃຜສະຫຼາດທັນຄົນ
ຍ່ອມຊິເອົາຕົວພົ້ນ
ດຳເນີນໄປຊິສົມມາດ
ຄົນໂງ່ນັ້ນເປັນເຫຍື່ອເຂົາ
ບໍ່ທ່ຂີ້ກະຈອກຢູ່ໃນເມືອງ
ນີ້ຈັ່ງແມ່ນເປັນຈິງ
ຄູ່ປະເດັນຄຳຕ້ານ
ໃຫ້ເນົານຳອີກຈັກຫວ່າງ
ທີ່ເກີນລ້ວງທ່ານຕາ
ສັດປ່າມາຖວາຍ
ສູ່ກິນໃຫ້ເຕັມເປັ້ງ
ແນວໃດບໍ່ອຶດຢາກ

ຝາກໃສ່ຖົງຊິ້ນຢ້າງ
ພາມໄດ້ຟັງຕະຫຼອດສິ້ນ
ທັງຢ້ານຕາຍບັດເຂົ້າເຫັນ
ຕັດຊິນໃຈບໍ່ເມົາຍັ້ງ
ຣາດຊະການດ່ວນແທ້
ຈັ່ງວ່າການໄປໜ້າ
ລໍນຳພົ້ວໝາກຫວ້າ
ຂໍໃຫ້ເຈົ້ານັ້ນອ້າງ
ຂໍຂອບໃຈທີ່ຫວັງດີ
ໂອກາດມີວັນໜ້າ
ຣາຊະການຮັບໃຊ້
ເຈຕາບຸດກະຈິງແຈ້ງ
ຈົນໄປເຖິງອະຈຸດຕາທ່ານ
ໃຫ້ໄປເມົານຳທ່ານ
ຍັງຢູ່ໄກກະດໍ້
ຊິຂໍປົງເອົາໄວ້
ຈົບທຳນອງວາດເວົ້າ
ຈຸລະພົນໝົດມ້ວນ
ມະຫາພົນຊົມໄພ
ຈົບສຳນຽງພຽງຍົ້ນ
35 ຄາຖາຈາຣຍ໌
ຊິລົງແຫຼ່ກ່ອນລະໂຍມ

ທາງໜ້າໄດ້ຢູ່ກິນ
ນ້ຳລາຍເຮ່ຍຫົວຫຼາຍ
ບົ້ງປາແດກໃນບົ້ງ
ການຈຳເປັນຕາຕ້ອງຜ່ານ
ຊິມາຫຼິ້ນຢູ່ຈັ່ງໃດ
ມັນຍັງໜາແສນຍ່ານ
ມັນຊິຊ້າຄ່ຳທາງ
ບົນບອກທາງຊິໄປ
ຕໍ່ຕາຄາວນີ້
ຄາວກັບມາຊິທູນທ່ານ
ຊຸບົ້ງບ່າແດງ
ຊິ້ບອກມັກຄາ
ພະລືສີເຖົ້າ
ຖາມທາງອີກຕໍ່
ຫຼາຍຖ້ານດ່ານດົງ
ບ່ອນພານໄພຊິ່ຊ່ອງ
ຊິເອົາໄວ້ທີ່ຄວນ
ມ່ວນບໍ່ມ່ວນກຳຈຳໃຈ
ຕໍ່ໄປຈັ່ງຟັງເລື້ອງ
ຈຸລະພົນພົ້ນຜ່ານ
ອາວະສານພັກໄວ້
ນັ້ນລະນາ ສັດທາໂຍມ.

ຈົບ (ກັນຈຸລະພົນ ມີ 75 ພຣະຄາຖາ)

ກັນຕ໌ທີ່ 7 ມະຫາພົນ ມີ 80 ພຣະຄາຖາ

ບັດນີ້ ຕໍ່ຈາກນີ້
ມະຫາພົນແມ່ນດົງໄມ້
ມະຫາພົນແມ່ນປ່າໄມ້
ພາມມັນລຸກແຕ່ເຊົ້າ
ໄດ້ອອນອົງມຸນີ

ໃນໝວດມະຫາພົນ
ພັນລະນາປ່າໄມໃຫຍ່
ທາງເຂົ້າເຂດເຂົາ
ໄດ້ຈາຕໍ່ພະລືສີ
ໃຫ້ບອກທຽວທາງດົ້ນ

ຈົນໄປເຖິງເຂດຂັ້ນ
ພະລືສີບອກໃຫ້ຮູ້
ພະລືສີກ່າວຕ້ານ
ວ່າຕໍ່ແຕ່ນີ້ມີພູຜາ
ມີແຕ່ຈອມເຂົາຂັ້ນ
ອະນັນຕັ້ງໝື່ນຕໍ
ພ້ອມໄປດ້ວຍຫ່ອມຫວ້ຍ
ດູດັ່ງເປັນທາງລັບ
ສັດໃນໄພເມີຍມ້າ
ມີນາໆປະຫຼາດລ້ຳ
ມີສີພູໃຫຍ່ຮ້າຍ
ໃຜບໍ່ເຄີຍທຽວດົງ
ຕິດພູເຂົາເປັນຫ້ວຍ
ໂອງກວາງຝານມັ່ງມ້ຳ
ດິນວ່າງນັ້ນ
ບໍ່ມີຄົນທຽວທາງ
ມີແຕ່ສາຂາໄມ້
ມີນາງເຄືອສອດກ້ຽວ
ໃຜໄປເຫັນຂະມ່າຄ້ຳມ
ມອງບໍ່ເຫັນສຸລິໂຍ
ຫົມມະພານບໍ່ມີແຫ້ງ
ຊຸມໝູ່ໄມ້ຕາດຕ້ອງ
ດູສັ່ງງາມເລີດລ້ຳ
ຍາມເມື່ອລົມມາພັດ
ດູດັ່ງດົງດອນດ້າວ
ລຸກຂະຊາດໝູ່ໄມ້
ມີທັງກົກກ້ວຍກ້ຽວ
ດົງນັ້ນມີທາງເລາະ
ເຊີນພາມເດີນດຸງດັ້ນ
ຄັນແມ່ນຄິດຮອດຊູ້
ຫົມະວັນພະເຫວດຢູ່
ຈາແຈ້ງສູ່ປະການ
ຊົ່ບອກມັກຄາ
ແວດລະວັງຄະນັງລ້ອມ
ຕັນຕາອະນັນເນກ
ເຕັມໄປດ້ວຍໂງ່ນຫີນ
ເຫວເລິກລຽງລະດັບ
ທີ່ດ່ານດົງແດນໄມ້
ເສືອໝີເໝີຍມອມມັ່ງ
ໂງເລື່ອຍລຽບຄານ
ຮັກສາດ່ານແດນດົງ
ອາດຊີຕາຍວາຍມ້ວຍ
ລະຫັດຊົນແດນຝັ່ງ
ປະສົງໃຊ້ຊອກກິນ
ຂາດຜູ້ສັນຈອນ
ຈອດໃສຊິເດີນໄດ້
ໄພວັນມືດໝອກ
ຂຽວທົ່ວດັ່ງຄາມ
ຂວັນສັ່ນສະຍົດຫຍອງ
ມືດມົນບໍ່ເຫັນແຈ້ງ
ປັດຖະພີຊື່ນຊຸ່ມ
ສູງຊັ້ນຊໍ່ຊັ້ນ
ໝອກຮົ່ວໂຮຍຮຳ
ອ່ອນໂອນເອນຍູ້
ຕາວເຕີຍເຄຍລະດາດ
ມີແທ້ມາກຫຼາຍ
ແກມກິ່ງເຄືອມັນ
ແຕ່ຍືດຍາວຄາວເຍີ້ນ
ຊົມດອຍດວງດອກ
ໃຫ້ດູໄມ້ໝູ່ແມ່ງ

ມົ້ມທີ່ນັ້ນຊິເປັນອາກາດແຈ້
ເປັນມະລິງງົງເງ
ພູມສະຖານວ່າງນັ້ນ
ເລາະລົງມາລຽບຈ້າຍ
ທົ່ງກະບໍ່ແມ່ນທົ່ງແທ້
ເຊິນພາມເດີນໄປຕົ້ງ
ທາງມັນມີຫຼາຍເສັ້ນ
ພູມສະຖານບ່ອນເພິ່ນຢັ້ງ
ພໍເມື່ອຈົບບ່ອນນັ້ນ
ຕາພາມເລີຍລາໄປ
ເອົາເຜະຫຼາຜົນໄມ້
ພາມກະບາຍເອົາໄມ້ເທົ້າ
ໂຄກາກະເປັນໂຄກາເຍັ້ນ
ສະບັດໄປສະບັດມາ
ເບັດໃສ່ດົງດອນດ້າວ
ເອົາເມຍນ້ອຍແນບຂ້າງ
ນີ້ລະນໍເພິ່ນວ່າຕົນຫາຫຸ້ມ
ດຸດດັ່ງມຸ້ງມ່ານກັ້ງ
ເວັ້ນແຕ່ຜູ້ເພິ່ນໄດ້
ຈົ່ງບໍ່ມີວເມົາກາມ
ປະຊາຊົນເຮົານີ້
ກໍ່ຈັກທຸກຂະເວດໂອ້
ອຸປະມາຄືດອກບົວຢູ່ໃນນ້ຳ
ບໍ່ອາດປົນໃບໂຊ
ອຸປະມາຄືພາມເຖົ້າ
ຖືກຜູ້ຍິງຊ່ວງໃຊ້
ຫາກບໍ່ມີພວກເພື່ອນ
ທຽວໃນຫິມະວັນຮົກ
ແລເຫັນຕາວເຕັຍຕົ້ນ
ຫວາຍມັນມາມັດກ້ຽວ
ເປັນທົ່ງສີໂຫຼງເຫຼງ
ລຽບດົງພະມັງຂັ້ນ
ຊິມີກວງງົວປ່າ
ກົນຫຍ້າປ່າຂະໂໜງ
ແຕ່ເປັນປ່າສາຂາ
ຝ່າຍທິດອຸດອນຊ້າງ
ຂ້າມດົງພົງດ່ານ
ຍັງແທ້ຍືດຍາວ
ລືສີ່ພ່ຖະແຫຼງໄຂ
ຈາກພະລືສີເຖົ້າ
ນັ້ນຍັດໃສ່ຖົງລາຍ
ມາແລ້ວກະເລົ່າເດີນ
ຕາພາມເດີນຈົນເຊຊັດ
ແຂ່ງຂາກະໂງໂຄ້ງ
ຄິດເຫັນຄາວຊິເດີນຍ່າງ
ມັນແສນຊັ້ນເວດທະນາ
ບັງຕາປະຊາຣາດ
ບັງໄວ້ບໍ່ໃຫ້ເຫັນ
ບັນລຸອໍລະຫັນ
ຊາດເຊິງກະເຈິງຈໍ້
ຍ່ອມມີວເມົາຍ້ອນກິເລດ
ມາໄດ້ຕັ້ງແຕ່ກາມ
ປ່າເຕົ່າຄອຍຖ້າກິນ
ຮັບສຸລິໂຍໄດ້
ເອົາເມຍສາວມັນແສນຍາກ
ຈຳໃຫ້ຫ່າງເຮືອນ
ເດີນປ່ຽວຄົນດຽວ
ຊິພາກພອຍເມືອງບ້ານ
ຊວນຊົ້ນກິ່ງເຄືອ
ສີມ້ວມຸ່ງມືດມຸ່ງ

ຝູງຕາລີງໂທນເຖົ້າ
ທ່ຽວຫາກິນໝາກໄມ້
ໜ້ອຍໜຶ່ງຕົກຫຼົ່ນຕົ້ງ
ພາມກະເກັບມາກິນ
ເກັບກິນພໍຮອງທ້ອງ
ເໜັດເໜື່ອຍອິດເມື່ອຍລ້າ
ພາມກໍ່ຢອງແຢງລີ
ທາງລອດຂອນລອດໄມ້
ມອງດ ຝູງສໍ່າເຊື້ອ
ງອຍຢູ່ກົກຂັນຄອນ
ມອງເຫັນດອຍຂວາງຂັ້ນ
ທາງແຫ່ງຄັບແຄບຄ້ອຍ
ໄດ້ຍິນສຽງໄກ່ຟ້າ
ມະຍຸຣາກະທາຂັນ
ສັກກືນາມັນມີຊູ້
ກູນີ້ນໍບັດຊິເຂົ້າປ່າໄມ້
ໄປຮອດທາງຄົດລ້ຽວ
ກວ່າຈັກຫຼົງທາງເດີນ
ຕັດຊິນໃຈໄປທາງໜ້າ
ຄືຊິສົມມາດມຸ້ງ
ໜ້ອຍໜຶ່ງຕົກຮອດຊົ້ງ
ໄດ້ຍິນສຽງຍຸງແຍວ
ມອງດ ຕາວັນຄ້າຍ
ຄ້າຍເລກສາມສີ່ຫ້າ
ມອງເຫັນພໍລີລັບ
ພາມກໍ່ຕາມອງສົ້ງ
ມອງຫຼາຍທີວ່າແມ່ນໃກ້
ຄົງຊິເປັນສາລາເຈົ້າ
ພາມກະປວດຈ້າວໆ
ພໍພາມມອງເຫັນແລ້ວ
ໂຕນເຕນເຕັ້ນໃສ່
ໃນດ້າວດ່ານດົງ
ລີງເຮັດຫຼົ່ນລີງດິນ
ເງື່ອນລີງເລັມຫຼ້ອນ
ສະໜອງມົນແກ້ເມື່ອຍ
ຕາເຖົ້າກະອ່ອນແຮງ
ຄືຜີໂພງຄ່າງ
ໃຈລະຫ້ອຍຫ່ວງເມຍ
ສັດປ່າຄະນານົກ
ຊິຄ່ຳແລງຄືຄ້ອຍ
ຕັນຕາບ່ອນຊິຍ່າງ
ເປັນຫ້ວຍຮ່ອມຜາ
ຮ້ອງສັ່ງຫັດສະໄນ
ແຂກຂຽວຂັນຄື້
ນອນຄອນຮຽງຄູ່
ໄພກວ້າງຜູ້ດຽວ
ສາມແຍກຢືນງົ່ງ
ແຍກຂວາຫຼຽວຊ້າຍ
ຕາມທາງເສັ້ນຊື່
ມະໂນຕັ້ງທ່ຽງຕົ່ງ
ດົງໃຫ່ຍພະລານຫີນ
ແອ່ວສຽງປະສານຊູ້
ເອນອຽງບ່ຽງບ່າຍ
ມາແລ້ວຄ່ຳຈອນ
ກະເລື່ອນລີງຄ້ອຍ
ຊິເປັນຈິງຫຼືວ່າບໍ່
ສາລາກວ້າງຂວ່າງອາສົມ
ສັນດອນຊົ່ງຜະນວດ
ພໍປານຖົ້າໃສ່ໜອງ
ຫົວໃຈເຕັ້ນຕົ່ງໆ

ດຽວນີ້ກຳລັງເຖິງ
ລູກກັບແມ່ຢູ່ພ້ອມ
ເວລາເດີນໄປຂໍ
ເພາະຈິດໃຈຜູ້ຍິງນີ້
ຕິດໃນບ້ວງໂລກີ ບໍ່ອາດທານລູກໄດ້
ໃນຄືນນີ້ກູຄວນເນົາວິງກົດ
ພໍວ່າແລ້ວ
ນອນຢູ່ໃນຄູຫາ
ສຽງພູມພຳພາມເຖົ້າ
ໜ້ອຍໜຶ່ງໂກນໂກກເກກ
ເອົາລະນໍ່ໍ່ຕູ້
ມະຫາພິນມີ 80 ພຣະຄາຖາຖ້ວນໆ

ແຕ່ຕາເວັນຄ່ຳຄ້ອຍມະທິນ້ອຍຊິຕ່າວມາ
ພຽນຮັກສະເໝີຕາ
ຢ້ານບໍ່ສົມໝາຍໄວ້
ຫວງແຫນຂີ້ຕະໜີ
ຊິເອົາໃຫ້ດັ່ງປະສົງ
ເນັ່ງນອນໃນຖ້ຳ
ຖິ້ມຍ່າມວາງໝອນ
ນັ້ນກົ່ງຫີນອັດຖ້ຳ
ນັ້ນຮອຍມືນມັນຈົ່ມ
ຜັດດັງກ້ອງທ້ອພູ
ໂຍຕິກາໄວ້ນີ້ກ່ອນ
ຊິຍໍ້ມ້ວນກ່ອນລະໂຍມ..

ຈົບ (ກັນມະຫາພິນ ມີ 80 ພຣະຄາຖາ)

ກັນມະຫາພິນ (ກອນນີ້ກໍ່ໄດ້)

ອະນຸສົນສືບເລື່ອງ
ມະຫາພິນຊົມໄພ
ຫລັງຈາກລ່ວງພານໄດ້
ມອງເບິ່ງເຂົາເລົ່າເຍີ້ນ
ລັດເລັ່ງລ້ຽວ
ອັນສຸລິຍໍຍິກ
ຈອມມຸນີກະເລີຍເວົ້າ
ເຈົ້າຊິມາບອບບີ
ອົງພະເຫວດມາຢູ່ຢັ້ງ
ໜີເມືອງມາເພາະທຳທານ
ມາຖືສິນຢູ່ໃນດ້າວ
ຍັງແຕ່ອາພອນຜ້າ
ຍັງນຳມາຮອດພີ
ຊ່າງບໍ່ມີເມືອງພໍ
ຫຼືຊິມາຂໍຫຼ້າ
ເຈົ້າກະສ່າງໜ້າດ້ານ

ຊາດິກາເທດນິທານໄຂ
ລະດາດດາດົງກວ້າງ
ເຖົ້າພາມໄປຕາມຊ່ອງ
ເດີນດົ້ນດຸ່ງດຽວ
ເຖິງເຂດພະລືສີ
ອະພິວັນທະນານ້ອມ
ຈັບສຳເນົາຊິດ່າ
ເຖິງພີ້ເລື່ອງອີ່ຫຍັງ
ກາງປ່າໄພໝາ
ສູ່ປະການໝົດສິ້ນ
ດອມມະທິແລະລູກອ່ອນ
ແນວຊິໃຫ້ກະບໍ່ມີ
ຊິຈີ້ປົ່ນວິນຂໍ
ບໍ່ຢາກອາຍດິນຟ້າ
ສອງກຸມານລູກທ່ານ
ຊິກວນທ່ານຢູ່ບໍ່ວາຍ

ພາມໄດ້ຍິນເພິ່ນຮ້ອງ
ສໍ່າຖືກຕີປາຍຄາງ
ປາດຕິໂຫລືສິນີ້
ຈັ່ງແມ່ນທວາຍຖືກຕ້ອງ
ຊ່າງຮູ້ຈັກເຊາະໂຊ້ງ
ບໍ່ແມ່ນແນວລະເດີກ
ເອົາລະເນື້ຄາວນີ້
ໜີຈາກເສືອມາຟົບແຂ້
ອັນໝາຮ້າຍວ່ານັ້ນ
ຄິດແລ້ວຫຼີງເຫັນທາງ
ແລ້ວຈິງແລດ ໜ້າ
ຍຶດຕໍ່ຕົ້ງຕາດເວົ້າ
ຟັງຄວາມຂ້ອຍສາກ່ອນນ່າ
ທ່ານຖ ສິນເປັນຊີໄພ
ການເດີນທາງຄາວນີ້
ມາເຊີນພະເຫວດເຈົ້າ
ບໍ່ແມ່ນຮຽມນີ້ອ້າງ
ອາສາທຽວທາງຮົກ
ຊາວສີພີທັ້ງຄ້າຍ
ຫຼາຍກະຫຼາຍແຕ່ໄມ້
ໄດ້ບັກເຖົ້າຜູ້ນີ້ລະ
ຫຼຽວເບິ່ງຄົນໃຫ້ມັນຄັກ
ເປັນພຣະສົງອົງຄະເຈົ້າ
ເຫັນວ່າພຣະຂ້ອຍຈິ່ງໄຫວ້
ລືສີນັ່ງໜ້າງໍ້າ
ໃນຕຳນານກະຍອມຮັບ
ຈັ່ງເອີອວຍໃຫ້ພາມຢັ້ງ
ຜົນຜະຫຼາໝາກໄມ້
ນັ້ນລະນາ
ລາຕີການຜ່ານສິ້ນ
ຕົກຂະມ່າເສຍສີ
ອ່າວອັດສະຈັນໂອ້
ຊ່າງຮູ້ດີສອດສ່ອງ
ເຖິງຫມ້ອງບ່ອນປະສົງ
ຫາຕິ່ງມັນແກວ
ຊິຊ່ວຍຄືນໃຫ້ຢືນເຊີ
ປັນຍາມີໃຊ້ອີກເທື່ອ
ແນວໃດແທ້ກະຊ່າງມັນ
ບໍ່ໄດ້ຫວັ່ນຊິເອົາຈິງ
ຫວ່າງຊິຫາກອນແກ້
ອະຈຸດຕາຈ້ອງຕອບ
ພະຄຸນເຈົ້າຢ່າກ່າວຈາ
ຢ່າຟ້າວວ່າຈາໄຂ
ຊິກ່າວຈາລະວັງໄວ້
ບັນຊາມີໃຫ້ເຂົ້າປ່າ
ຄືນເຂົ້າສູ່ປາງ
ຜູ້ຫານປ່າກະຄົນດຽວ ນີ້ແລ້ວ
ຈັ່ງຜ່ານດົງມາພົ້
ມີຫຼາຍແຕ່ຫາກລ່າຍ
ລຳຊີໃຊ້ກະບໍ່ມີ
ກ້າດ່ຽວເດີນດຽວ
ຢ່າຊິເດົາແປງເວົ້າ
ຈັບສຳເນົາໃຫ້ມັນມ່ວນ
ຊິຂໍຢັ້ງນັ່ງນຳ
ເພາະຖືກສອກພາມກັບ
ບອກວ່າເທວະດາຊ່ວຍ
ມີຫຍັງກະຍໍມອບ
ກະຍໍໃຫ້ສູ່ກິນ
ສັດທາເອີ່ຍ
ຟ້າສະຫວ່າງເວຫາ

ພາມຊິໄກຈົ່ງຂໍລາ
ອົ່ງມຸນີກໍຈົ່ງເວົ້າ
ຕະວັນອອກເດ່ຊີ້
ເຂົາລູກນັ້ນມີຊື່ໄວ້
ໄກຈາກພູເຂົາຮອມ
ພູເຂົາຫຼວງຢູ່ທາງໜ້າ
ເດຍລະດາດໝູ່ໄມ້
ເວັ້ນຈາກແລ້ວ
ຄືດັ່ງອິນປຸນແປງ
ສັດໃນໄພຫຼາຍລົ້ນ
ບ່ອນນັ້ນຢູ່ຮ່ອມຫ້ວຍ
ທີ່ຫວ່າງນັ້ນ
ໜ້າອອນຊອນທິວທັດ
ພາມຍິນດີໄດ້ຟັງແລ້ວ
ກົ້ມຂາບລາເພັ່ນຜ້າຍ
ລົງຈາກເນີນເຖິງຫ້ວຍ
ບຸນສະລົມສະເລືອກລົ້ມ
ຈົນວ່າໄດ້ຮ້ອງໂອ້ຍ
ເປັນມະລົມໂຊມແຊວ
ເກັບເອົາເອງຢາຫວ້ານ
ແຍກເບິ່ງອາທິດກ້າ
ເກືອບຊິມຸດມອດມ້ວຍ
ຄອບຜູ້ຍິງລະນໍກູ
ຈັ່ງແມ່ນຕົນຫາຫຸ້ມ
ປຽບເໝືອນດັ່ງໝອກມົ້ວ
ເຖົ້າຊິຕາຍກະບໍ່ເວັ້ນ
ຊ່າງເທາະນໍຂອງມັກ
ໜີດສູ່ແນວເກັບມ້ຽນ
ຈອນລີລັນຍ່ານເຍີ້ນ
ເຖິງເຂດໂຊ້ງ
ຫ່າງພະລີສີເຖົ້າ
ຈັບສຳເນົາບິນບອກ
ທາງນີ້ໃຫ້ທ່ານໄປ
ຄັນທະມາດດວງຫອມ
ນັ້ນແມ່ນແມ່ນະທີກວ້າງ
ໄພພະນາກວ້າງໃຫ່ຍ
ໄປໜ້າຊິຮຸ່ງເຫັນ
ຊິເປັນແຄ່ວຮາວຫີນ
ລະດາດດາແນວໄມ້
ສາລະວິນມາກໝູ່
ສະກວ້າງຂ່ວງສະຫວັນ
ເປັນຫມ່ອງຢູ່ພະສັນດອນ
ທຸກສະຖານແຖວນີ້
ກະເລີຍລາຕັ້ງທ່າ
ເຊຊ້າຍຍ່າງເດີນ
ຄາວຊວຍພະລາດມື້ນ
ໂຊມໂຊ້ໂກ່ງໂກຍ
ໂອດໂອ່ຍເຈັບແອວ
ຊະຊາຍອັນຖົງເປ້ງ
ຜູພັນປັ້ງປາແດກ
ຕະເວັນຂຶ້ນອອກວ່າສວາຍ
ໂອ້ຊວຍໃຫ່ຍຈິ່ງໆ
ຮ່າເອີ່ຍມັນແສນກຸ້ມ
ກຸມໃຈມິວມືດ
ມິວມຸ້ງບໍ່ຮຸ່ງເຫັນ
ບໍ່ຮູ້ເດັ່ນເຫັນປະຈັກ
ແມ່ນຊິຕາຍກະຍອມແລ້ວ
ແລ້ວໝູນວຽນເຄື່ອນທີ່
ເດີນເຂົ້າປ່າໂພງ
ດົງປ່າໄພໜາ

ມີນາມາກິກກໍ
ເຖົ້າວັນກ້ຽວ
ເປັນມະລິງຕິ່ງຕ້ອນ
ດອກດູ່ດົ້ວ
ແຊມນິມສາວ
ເຄັ່ງຄອມໄຄ້
ຄຸມຄັບຂ້າ
ຕົ້ນຊ້າງນ້າວ
ແພງພວຍຜາ
ອຸມຄຸມຫ້ອຍ
ໂອ້ນໂຕ່ນເຕັ້ນ
ແຕນຕໍ່ເຜິ້ງ
ບິນໂບຍບິນ
ຕອມຕາມຕ້າຍ
ແຕນຕ່ອຍຕ້ອງ
ຕົກຄະມ່າເຕັ້ນ
ມືຄວາຕົບປັດແຕນ
ຕັ້ງແຕ່ເຕັມແຕນຕ້ອງ
ຕາປູດເປົ້າ ໄຄ່ຂຶ້ນທໍ່ໝາກຕູມ
ມືໜຶ່ງຄວາມາຄຳ
ພາມໂຫຼດຫລີງຮ້ອງ
ຕອດຫວ່າງອື່ນກູບໍ່ຮ້ອງ
ຕອນນີ້ ສະຫລຸບເວົ້າ
ເສຍເວລາໂຍມຍາຍ
ຄັນຊິຈາໃຫ້ໝົດກ້ຽງ
ພັນລະນາບໍ່ຖ້ວນ
ເພິ່ນຈັ່ງໄດ້ກ່າວຊີ້
ແປວ່າແນວໄພສິນ
ສັດໃນດົງແດນນີ້
ທັງງົວຄວາຍຊ້າງມ້າ
ກໍ່ກັນເປັນຊັ້ນ
ກຽວຍອຍຍ້ອຍຢ່ອນ
ຍວມຍົ້ວທົ່ວແດນ
ເດຍລະດາດດ ສວຍ
ຜ່ອງຈວງຈັນຄີ
ຂົງໄຄຕົ້ນໝາກຄ່າ
ໂຄມໄມ້ໝູ່ແໜ່ງ
ແນວໝູ່ສະໝຸນໄພ
ຜາກເປື່ອຍເປັນປຸ້ມ
ໂຕງເຕງຕິນຕັ່ງ
ຮັງນົກຢ່ອນແຂວນ
ແມງຜູ່ພູມມະລິນ
ວ່າຍວົນວຽນຕ້ອງ
ຕົນຕົວຕາຕີ່
ຕິນໃຕ້ກະຕ່ອຍຕຳ
ຜັດລົ້ມຄຸບຮັງແຕນ
ຕ່ອຍຕາຈົນຮ້ອງ
ຕາພາມຕອດຕ່ອຍ
ມືໜຶ່ງງຸ້ມ ຕາຕຸ່ມແຕນຕຳ
ເບິ່ງຕາອັນແຕນຕ້ອງ
ຮ່າມືງເອີ່ຍໂພດຊວຍລື່ນ
ນົ້ມາຕ້ອງຕ່ອຍກະຕາ ໂອ້ຍນໍ...
ບ່ຢາກເລົ່າໄປຫຼາຍ
ຜູ້ຢາກຟັງກັນໜ້າ
ອັນເຝືອງໄຟໄມ້ປ່າ
ກໍ່ຫຼາຍລ້ວນມາກມີ
ເອີ້ນວ່າມະຫາພົນ
ໃຫ່ຍມະຫັນພັນໂຊ້ງ
ໝູໝີທະນີປ່າ
ໝາເໝັ້ນມັ່ງເມີຍ

ມາກໝູ່ກັ້ງ ກວາງປ່າເສືອສິງ
ບໍ່ຈັກນຳມາອ້າງ
ມີຕະກາມລາກລົ້ນ
ຊູຊີກເຂົ້າປ່າໄມ້
ເຖິງຍາມນອນກໍປົ້ນແຂວນ
ຈັ່ງວ່າຫຼາຍວັນໄດ້
ຫຼາຍລາຕີຜ່ານພົ້ນ
ມື້ນັ້ນພາມລ່ວງຍ້າຍ
ອັດສະຈັນງາມງົດ
ພູມສະຖານແຖວນີ້
ສີນາໆຫຼາກແຍ້ມ
ໂຊກຂອງເຮົາຈົ່ງແຈ້ງ
ເຫັນສາລາພະເຫວດແລ້ວ
ມື້ນີ້ເຂົ້າບໍ່ໄດ້
ເລີກບໍ່ງາມຖ້າວັນຫຼັງ
ຕອນນີ້ນາງມະທີເຈົ້າ
ບໍ່ເປັນທ່າແທ້ໆ
ລູກກັບແມ່ຢູ່ພ້ອມ
ໃຜຊິມາພອຍພັດ
ຄອຍນາງໄປໃນດ້າວ
ມື້ອື່ນເຊົ້າ
ຄົງຊິໄດ້ອ່ອນນ້ອຍ
ນອນພັກກາຍຢູ່ເທິງດອຍ
ຈຶ່ງຈັດແຈງຕຽມນອນຫຼົ້ນ
ຮ້ອຍເປີເຊັນຈະຕ້ອງໄດ້
ຈົບບົດບາດຊີພັກຮ້ອນ
ມີ 80 ພະຄາຖາ
ມະຫາຜົນສຸດສ້ຽງ
ອາວະສານພັກໄວ້

ຫັດສະດີລົງນົກ ໃຫ່ຍປານພະຍາຊ້າງ
ຢູ່ຕາມທາງພໍ້ຜ່ານ
ຈົນເອົ້ນອ່ານບໍ່ໄຫວ
ມຸ່ງໃສ່ພະສັນດອນ
ອູ່ເທິງປາຍໄມ້
ແຕ່ເດີນໄພຖ້ອນຖີ່
ກະເຖິງບ່ອນປ່ອງໝາຍ
ຮອດເດີ່ນເນີນສະຫວັນ
ດັ່ງພະລືສີຕ້ານ
ຂຽວກະຈົດອກໄມ້ປ່າ
ດັ່ງອົນແຕ້ມແຕ່ງເອົາ
ບໍ່ເສຍແຮງທີ່ໝົ້ນປ່າ
ພາມເຖົ້າອີ່ມກະໃຈ
ຕະເວັນບ່າຍຜິດຍາມ
ຈັ່ງຊິໄປຕອນເຊົ້າ
ຊິກັບມາຈາກປ່າ
ພະນາງເຈົ້າຊິບໍ່ຍອມ
ພຽງຮັກສະເໝີຕາ
ສ່ວນຊີຂັດຂວາງໄວ້
ໃຫ້ເຖິງຄາວຫາເລີກ
ຈັ່ງຄວນເຂົ້າດຸ່ງຂໍ
ສົມດັ່ງກະໃຈໝາຍ
ເພື່ອຊິຄອຍໃຫ້ມັນແຈ້ງ
ໃຈເຢັນໆຖ້າມື້ໃໝ່
ໂດຍແທ້ວ່າແນ່ນອນ
ກອນອ່ອຍໂຍຕິກາ
ຊິອ່ວຍລົງປົ່ງເລື້ອງ
ຈົບສຳນຽງບາດຮອດດ່ານ
ຊີລົງແຫ່ກ່ອນລະໂຍມ..

ຈົບກັນມະຫາຜົນ.

ภັນຕ໌ທີ່ 8 ກຸມມາຣ ມີ 101 ພຣະຄາຖາ

ບັດນີ້ ຕົ້ນແຣກເລີ້ມ
ກ່າວເຖິງນາງມະທິຝັນ
ສຸກສຳລານກະເສມສ້ານ
ບຳເພັນພຽນຢູ່ສູ່ມື້
ຕື່ນມື້ເຊົ້າ
ປະໃຫ້ສອງກຸມມານ
ເຖິງເວລາກ່ຳກັບບ້ານ
ອຸປະຖຳມິ່ງເຫງົ້າ
ທຸກທີມື້
ບໍ່ໃຫ້ອີງຊີພິດ
ຂໍໃຫ້ບຳລຸງສອງຫຼ້າ
ທຸກປານໃດກະຊິສູ້
ອຸປະມາດັ່ງຂ້ອຍໃຊ້ ໂອ້ຍ...
ພໍເວລາສາຍັນ
ມະທິນອນໃນຫ້ອງ
ປ້ອນເຂົ້າເສັດຮຽບຮ້ອຍ
ພໍເມື່ອເດິກຊັກໄຊ້
ມະທິນອນຄຽງໝອນ
ດວງພະຈັນກຳລັງຄ້ອຍ
ເລີຍເລົ່າຫຼັບມິດອ້ອຍຈ້ອຍ
ວ່າຖືກຊ້າງແລ່ນໄລ່
ແລ່ນໜີຕາຍພັດມີຊາຍ
ມາກຳຄໍນາງໄວ້
ເບິ່ງກາຍາຕົນໂຕ
ມະທິນາງກະຜ່ອງຢ້ານ
ມັນບໍ່ກ້ວຄວາມຜິດ
ຈັບພະຂັນດວງກ້າ
ຜູກຂັດແຂນມັດໄວ້
ຝັນແຕ່ພຽງສ່ຳນີ້
ຈັກກ່າວເລື່ອງກຸມມານກັນ
ພາກພອຍເມືອງບ້ານ
ຢູ່ກາງໄພໃນເຖື່ອນ
ບໍ່ມີເອື້ອອ່າວນະຄອນ
ເຂົ້າປ່າຫາຜົນ
ຢູ່ຄອງຄອຍຖ້າ
ເອົາຫົວມັນມາປັນແຈກ
ຜົວແກ້ວແລະລູກລຸນ
ມະທິພໍ່ພຽນອິດ
ຍາກແຄນພໍນ້ອຍ
ຢູ່ກາງໄພບໍ່ມີໝູ່
ບໍ່ມີຮ້ອນຮ່ອມໃດ
ຄັນທົນທຸກເວດທະນາ
ຄ່ຳລົງວັນນັ້ນ
ກັບສອງເຂືອລູກອ່ອນ
ນອນຫັ້ນກະທ່ອມໄພ
ນອນງຽບສະງັດມິດ
ກະພໍ່າບຸດຕານ້ອຍ
ມະທິນອນມິດທະນີ່ງ
ຄືນນ້ອຍກະເລົ່າຝັນ
ອອກໃຈຫາຍ ຍາຍເອີ່ຍ
ຮ່າງກາຍທະມິນໜ້ໍ
ນາງຕົກໃຈໄດ້ຮ້ອງ ໂຮ່..
ຫູຕາຝັນແລະແຂ້ວຄືດ້ຳມຍັກມານ
ນາງວອນອ່ານຂໍຊີວິດ
ຕໍ່ມະທິທັງນັ້ນ
ມາເຈາະຕາສອງລູກ
ໃຈນ້ອຍແລ້ວແລ່ນໜີ
ສະດຸ້ງຕື່ນຂຶນຫົວລຸກ

ຄັນຊິປຸກສອງກຸມມານ
ແລໄປກອງໄຟຮ້າ
ຈູດກະບອງຜ່ອງຂີ້ເຖົ່າ
ຖ້າວ່າເຮົາຊິຢູ່ນີ້ງ
ກົວຊິມີເວນໄພ
ງໍຄໍທາງຕາເວັນຢ້ຽມ
ຂະນະນັ້ນດວງຈັນພັດແຫ່ງຄືຈັ່ງເສົ້າ
ມະທິນາງຜ່ອງຮ້ອນ
ຕາຈຳລຽງມອງດູ
ຄັນຊິກອຍເອົາອຸ້ມ
ເກງວ່າລູກຕົວເອງຕື່ນຕລົກໂຕກຮ້ອງ
ເຮົາໄດ້ພັດພາກຫ້ອງ
ໃຜຊິຫວາຍໃຫ້ເບົາໃຈ
ເປັນຫຼືຕາຍໄປຫາພີ່
ຈັກຝັນດີຝັນຊົ່ວ ນາງມັດທິໂລດບໍ່ຮູ້
ພໍໄປຮອດແລ້ວບອກໂຈ້ງ
ລາງສັງຫອນມີຈິງ
ຄັນຊິທຳນາຍໃຫ້
ຢ້ານບໍ່ໄດ້ປະກອບສອງອ່ອນນ້ອຍ
ເພິ່ນກ່ຳວ່າບໍ່ມີແນວຂັດຂ້ອງ
ເຫດວ່ານາງພັດພາກບ້ານ
ພະເຫວດວ່າທໍ່ນັ້ນນາງກະກັບຄືນຫ້ອງ
ເດີກອອນຊອນນ້ຳໝອກລົງສູ່ພື້ນ
ມະທິລຸກລ້າງໜ້າ
ຄືກັນຫາຊາລີ
ແລ້ວຈຶ່ງເອົາມັນຕົ້ນ
ເອົາມາປ້ອນລູກນ້ອຍ
ນຳເອົາແປ້ງລູບໄລ້
ສຸຄັນທາປະໂລມກາຍ
ຫາໄມ້ຄານທັງກະຊ້າ
ຢ້ານບໍ່ມີທາງແກ້
ຈັບໂລ້ນໄຟມາກຸມເປົ່າ
ກວ່າຊົ່ວໄຟຊິລຸກໄດ້ໃຈເຕັ້ນສະເມັ່ນໃນ
ບໍ່ເຜີຍບອກຄົນໃດ
ໄລ່ນຳຈຳຈໍ້
ຈຽມຕົວທັງຜ່ອງສັ້ນ
ດອຍເປົ້າຈອກຫອນ
ລົມອ່ອນຢຸດອຽງ
ລູກລຸນສອງນ້ອຍ
ເອົາໄປເປັນໝູ່
ພະນາງຢ້ອງຄ່ອຍຢອງ
ທອງແທ່ນມາເນົາໄພ
ເລື່ອງຄວາມຝັນຮ້າຍ
ພະສາມີຊິດີກວ່າ
ອົດສູ້ລະຢ່າງວ່ານ
ຈາຕໍ່ເຫວດສັນດອນ
ພະເຫວດຫຼືຊິຮູ້
ເຫັນໄປຄັນຕາມຊອບ
ຄັນທານໃຫ້ວ່າແກ່ພາມ
ໝອງໃຈຈັກສິ່ງ
ນານລ້ຳຈຶ່ງທ່ຽວຝັນ ດອກນາງເອີ່ຍ
ປະຄອງອົງສອງອ່ອນ
ຈວນແຈ້ງສະຫວ່າງມາ
ແລ້ວປຸກອ່ອນສອງສີ
ໃຫ້ຕື່ນນອນຍາມເຊົ້າ
ທີ່ເຫຼືອໜູ່ແຕ່ວັນກ່ອນ
ສອງຫຼ້ອນໃຫ້ອີ່ມໜຳ
ປະໂລມລູບບຸດຕາ
ອາບສີສີງລ້າງ
ນາງເອົາສຽມຂຶ້ນໃສ່ບ່າ

ອຸ້ມກັນຫາຈູງຊາລີໄປຝາກພະພໍ່ເຈົ້າ
ວ່າພີ່ເອີ່ຍ ນາງຂໍຝາກລູກເຕົ້າ
ນາງຊິຫຽວດົງດອນ
ລູກກັນຫາເຈົ້າຢ່າໃຫ້
ທ້າວຊາລີກະໃຫຍ່ແລ້ວ
ຈູບສອງແກ້ມເຈົ້າຫຼ້ອນ
ຄິດອາໄລຄຳຝັນ
ຄິດເຫັນຄຳຝັນຮ້າຍ
ຍາມນາງຂ້າມດ່ານດົງ
ຫຼົງຫາດູໝາກໄມ້
ຕາຫຼຽວມອງຫາຜົນ
ມະທິໄປວັນນັ້ນ
ເລີຍບໍ່ໝານໝາກໄມ້
ບໍ່ຄືຕັ້ງກ່ອນກີ້
ຫາທາງໃດບໍ່ເຄີຍອົດ
ບັດມາເຖິງວັນນີ້ ໂອຍ.
ລຸກຂະຊາດໝາກໄມ້
ເຫຼືອຢູ່ຕົ້ນເລັກນ້ອຍ
ເດ່ມືດຶງກະສູງເກີນ
ຕາຫຼຽວມອງຕີນຕຳຕ້ອງ
ຕີນຕຳຕໍໝາມກ່ຽວສິ້ນ
ຕົກຄະມ່າຄ້າມ
ຄິດນຳສອງບຸດຕາ
ປານນີ້ນໍບຸດຕາຫຼ້າ
ໝາກໄມ້ຫາບໍ່ໝານ
ໂອຍເດນໍ ສັງບໍ່ຄືສູ່ມື້
ໝາກຄັນທາແລະກະໂດນ
ເຖິງຊິເຫຼືອຫຼໍ່ບ້າງ
ຫຼົ່ນລົງດິນເຫຼືອຢູ່ບ້າງ
ໝາກເລັບແມວແລະໝາກເໝົ້າ
ຄາວຊິເຂົ້າເຂດເຂົາ
ຊາມຊົ່ວປະດ່ຽວດຽວ
ເພື່ອຜົນພະຫຼາໄມ້
ຫາທາງອອນແອ່ວ
ໃຫ້ອອຍນ້ອງເຈົ້າຢ່າງອນ
ໜີລາດກາຍໄປ
ລ່າພະໄທໃຈເຕັ້ນ
ຫາຍໃຈກະບໍ່ໂລ່ງ
ພະນາງໃຈອູ່ຮ້ອນຕອນນັ້ນໝັ່ນຄະນິງ
ຫາໝາກຜົນພະຫຼາ
ບ່ອນຕົນເຄີຍໄດ້
ອັດສະຈັນບໍ່ພໍ້ຜ່ານ
ບ່ອນເຄີຍໄດ້ໂລດບໍ່ມີ
ມີໝາກດົກໝາ
ຕັ້ງແຕ່ປາງຫຼັງກີ້
ເຕັມທີຫາຍາກ
ຫາຍສ້ຽງວ່າຫຼິ່ນລືງ
ຫັກໄມ້ຕ່ອຍບໍ່ມີເຖິງ
ຄັນວ່າສູງແປະຟ້າ
ຕໍຕາຍຕີນກະແຕກ
ພະນາງລົ້ມຄຸບໝາມ
ພະນາງຫຼ່າຫຼົງຈິດ
ຢູ່ຄອຍດອກເມືອງບ້ານ
ຄອຍທາງລັດດ່ານ ລູກຄຳເອີ່ຍ
ຍາມລູກແລ່ນລັດຕ້ອນເອົາຫຍັງວ່າໃສ່ມື
ຜິດແປກກັບຕາ
ເໜົ່າໃນບໍ່ເຫຼືອຄ້າງ
ເຈຍລົງເອີ່ຍເລັມບ່າງ
ພະນາງຟ້າວເປົ່າເອົາ
ແປນເປົ່າບໍ່ເຫຼືອຫຼັງ

ຈັກແມ່ນຫຍັງມາກິນ
ໝາກເຝືອງໄຟລຳສະທ້ອນ
ຊ້າດຶງກິນມ້າລາກມ້ວນ
ສາລະພັດໝາກໄມ້
ເລີຍບໍ່ພານສາຍຕາ
ໝາກເຝືອງໄຟມີເລັກນ້ອຍ
ໝາກສີດາຕົ້ນເຕ້ຍ
ຢູ່ໃນດົງດ່ານນັ້ນ
ຜິດກັບອັນຫຼັງໆ
ຂຶ້ນຕົ້ນໄຮຕ່ອຍໝາກຫວ້າ
ໂອ້ຍ.ພິລາແດງເຕັມຢູ່ຕົ້ນ
ໝາກເດື່ອສຸກເກັບເຊື່ອງໄວ້
ຍິນແຕ່ສຽງລີງໂທນ
ໃນຕອນນີ້ກ່າວເຖິງຕາພາມເຖົ້າ
ເຂົ້າໄປໃນເຂດດຸ້ມ
ຂໍກັນຫາຊາລີໄດ້
ສອງບຸດຕາຮາດທ້າວ
ສອງອ່ອນນ້ອຍອົດບໍ່ໄດ້
ນ້ຳຕາພັ່ງລົນໄຫຼ
ເຮົາພາກພອຍເມືອງບ້ານ
ເປັນຈັ່ງໃດ່ທຸກແທ້ໆ
ພາມມັນຕິເກືອກກົ້ງ
ຍ່າງບໍ່ໄຫວພາມຕີ
ສອງບໍ່ກິນາດ້ວຍ
ຄຶດລຳບາກຮອດເຈົ້າ
ກັນຫາວ່າປານນີ້
ບໍ່ເຫັນສອງບຸດຕາ
ຄາວເມື່ອບິດາໄທ້
ແມ່ຂອງເຮົາໂລດບໍ່ຮູ້
ວ່າສາທຸເດີ.....ຂໍໃຫ້ເທບພະທ່ອນທ້າວ
ຮູດໄປຈົນຫຼ້ອນ
ລຳດວນເອີ່ຍຜີພ່ວນ
ບໍ່ເຫຼືອໄວ້ທໍ່ໄຍ
ສົ້ມເວີ່ນາວຫວານ
ວ່າແມ່ນດ ອອກຈົນກ້ຽງ
ລີງຜັດກິນໜີຈາກ
ເຈຍຜັດຫຼ້ອນຫຼິ້ນລີງ
ຫາຍາກອັດສະຈັນ
ທ່ຽວຫາມາໄດ້
ຕົກລີງມາສົ້ນຂາດແຫຼ່ງ
ເກັບໄດ້ວ່າເນົ່າໃນ
ແຕ່ວັນກ່ອນໜູຜັດກິນ ແມ່ໃຫຍ່ເອີ່ຍ
ໄຕ່ໂຕນຢູ່ປາຍເປົ້າ
ຜູ້ເດີນເຖິງຫິມະເວດ
ອີງທ່ານພະລັດສີ
ຈັບຕີທັ້ງຟາດ
ຫົວໃຫ້ຮໍ່າໄຮ
ໃຫ້ຮໍ່ານຳຫຼັງ
ຢູ່ໃນດົງດ້າວ
ເພາະທຳທານໃຫ້ພາກແມ່
ບໍ່ມີຜ້າຊິຫໍ່ຄີງ
ລົ້ມທ່າວທາວໄຍ
ເລືອດໄຫຼພໍປານນ້ຳ
ສອງພອຍທຸກຍາກ
ມານດາເຫງົ້າແມ່ຄີງ
ມະທິແມ່ກັບມາ
ຢ້ານແຕ່ມໍລະນາມ້ຽນ
ກະທຳທານແມ່ບໍ່ຢູ ໂອ້ຍ.
ອົດຫ້າແມ່ມະທິ
ບອກຂ່າວມານດາ

ວ່າກັນຫາຊາລີ
ແມ່ມະທີມາແລ້ວ
ຂໍໃຫ້ແມ່ແລ່ນຕ້ອນ
ກັນຫາມີນຕາຂຶ້ນ
ໂອຍຮ່ານີ້
ໄດ້ຍິນນົກກາງກີ
ຫຼາຍພາສາຝູງສັດ
ວ່າແມ່ນມານດາໄທ້
ນ້ຳຕາໄຫຼນ້ຳປຽກແກ້ມ
ຄັນຫາກແມ່ຢູ່ຢັ້ງ
ນີ້ແມ່ນຫຍັງມານດາ
ເວລາພາມຕີນ້ອງ
ເອົາຫຼັງຮັບບາດແສ້
ພາມມັນແຮງຕັ້ງແກ້ງ
ວາໂຍບໍ່ມີປານ
ຄາວເມື່ອພາມພາດັ້ນ
ສອງໂລດອິດເມື່ອຍລ້າ
ເອີ,ຜູ້ຂ້າຊີໂຈະໄວ້ນີ້
ແລ້ວບັດນີ້ມີ 101 ພຣະຄາຖາຕອນ
ເອົາລະນໍຕອນນີ້
ຂໍລາລົງໄວ້ແຕ່ພຽງທໍ່ນີ້

ພາມຕາມມາທາງນີ້
ໃຫ້ຕາມຫຼັງຄັນວີ້ງແລ່ນ ແນ່ແມ່
ສອງນ້ອຍໄດ້ຕ່າວຄືນ
ມອງເຫັນຕັ້ງແຕ່ປ່າ ໄກແທ້ນໍ
ບໍ່ເຫັນໜ້າແມ່ມັດທີ
ຕາມເຂດສາລິກາ
ຮໍ່າໄຮຢູ່ປາຍໄມ້
ຕາມຫຼັງເອີ້ນຮຽກ
ຄະນິງບ້ານເກົ່າຫຼັງ
ທານທອດບໍ່ຂີນຂັດ
ພາກພອຍບໍ່ເຫັນໜ້າ
ຊາລີເອີ່ຍແຫ່ງແລ່ນ
ຕາງນ້ອງຜ່ອງແຮງ
ລາກແກ່ໄຖຈູງ
ແກ່ດຶງທັງຝ້າວ
ບຸດຶງໝົ້ນປ່າ
ບໍ່ເຫັນໜ້າແມ່ຕົນ ນໍໂຍມ.
ກັນກຸມມານຈົບໄວ້ກ່ອນ
ພະອວນຂ້າ ຊິອວ່ຍລົງ
ມັດທີກັນເພີ່ນຊິຕໍ່
ກອ່ນເດີທ່ານໝູ່ຂະໂຍມ.

ຈົບ (ກັນກຸມມານ ມີ 101 ພຣະຄາຖາ)

ภัณฑ์ที่ 9 มัดทธิ (1) มี 90 พระคาถา

(เดิน) ยังปะนะลันยา มะหาปะถะวิง อุนนาเทตะวา พธามมะนัดสะ ปิยะปุดเตสุ ทินเนสุ ยาวะ นิธมมะโลกา เอกะโลกาทะลัง ชาชัง อะโทชิ สาทะโว ดูลาสับปุริสาทังหลาย **ยังโกลาทะลัง** อันว่าสรรพโกลาหินอันใด **มะหาปะถะวิง** อันยังแผ่นดินหลวงทั้งพะยาดอยดวงขะหาด **อุนนาเทตะวา** กำให้ร้องก้องหวั่นไหวไปมา **ปิยะปุดเตสุ** ในเมื่อพระธาชะบุด **อุดตะมะชะเนหาธันยา**

ແຫ່ງພຣະເວດສັນຕະຣະກະສັດ **ທິນເນສຸ** ແລໃຫ້ແລ້ວແກ່ຊິນນະພາມ **ຕັງ ໂກລາຫະລັງ** ອັນວ່າສຽງໂກລາຫິນອັນນັ້ນ **ເອກະໂລກາຫະລັງ ຊາຕັງ** ເກີດເປັນໂກລາຫິນອັນໜຶ່ງອັນ ດຽວບໍ່ຂາດ ມີສຽງອຸຕະມາດກ້ອງເວຫາ **ຍາວະພຣົມມະໂລກາ** ຕາບຕໍ່ເທົ້າຮອດອະກາ ນິດຖາພົມມະຫາອະໂຫຊິ ກໍມີມາກຍິ່ງໜັກໜາ.

ເທວະຕະໂຍ ສ່ວນດັ່ງເທວະດາທັງຫຼາຍ ຝູງຢາຍຢັ່ງຢູ່ຄູ່ໝູ່ໄມ້ພູຜາ **ສຸຕະວາ** ໄດ້ຍິນສຽງ ໃຫ້ແຫ່ງແກ້ວແກ່ນໄຫ້ທັງສອງເໝືອນດັ່ງຫົວໃຈຈັກແຕກຈັກທະລາຍໄປເປັນອັນຍິ່ງຈິ່ງຕ້ານ ຈາລະຈາເຊິ່ງກັນວ່າ **ສາມະທິ** ສ່ວນດັ່ງນາງແກ້ວຣາຊະມະທິຈັກເຂົ້າມາສູ່ພຣະກູ່ແກ້ວສາລາແຕ່ຍັງ ອັນ ບໍ່ທັນເຫັນໜ້າລູກແກ້ວຮັກອັກຄະບຸດທັງສອງນາງຈັກປອງຖາມຫາດອມພຣະກະສັດຕາບໍ່ຂາດ ນາງບໍ່ຮູ້ພຣະບາດເຈົ້າປະສາດໃຫ້ເປັນທານ **ທາວິຕະວາ** ນາງກໍ່ຈັກແລ່ນລັດຜັດໄປມາຕາມຫົນທາງ ອັນຊື່ຈື່ຣອຍຕີນແຫ່ງເຈົ້ານຸມມານທັງສອງພີ່ນ້ອງ ອັນໄຫວ້ປະເທດທ້ອງຄີລີ ດ້ວຍສະເໜຫາ,ທັນຄຳຮັກສຸດຂະໜາດໃນລູກນ້ອຍນາດຈອມໄຕ ນາງກໍ່ຈັກໄດ້ສະເທວີຍຍັງທຸກຍິ່ງໜັກໜາ **ເທວະຕະໂຍ** ສ່ວນດັ່ງ ເທວະດາທັງຫຼາຍ ກໍ່ຈິ່ງອຸບາຍຄຳສັ່ງຍັງເທບພະບຸດສາມຕົນ ດ້ວຍຄຳວ່າ ດູລາເຈົ້າທັງສາມຕົນວິເສດ ຈິ່ງເນລິມິດເພດເປັນຣາຊະສີເສືອໂຕ່ງ ແລະເສືອເຫຼືອງ ໄປນອນເນືອງຂະນັນຕັນຫົນທາງ ແຫ່ງນາງແກ້ວຣາຊະມະທິ **ຍາຈິຍະມານາປີ** ແມ່ນວ່ານາງຫາກຂໍສິ່ງໃດກໍ່ດີ **ອະທັດຕະວາ**ເຈົ້າທັງຫຼາຍ ຢ່າໄດ້ໃຫ້ຍັງຫົນ ທາງແກ່ນາງແກ້ວຣາຊະມະທິຕາບຕໍ່ເທົ້າ ພຣະສຸລິຍະອາທິດຕົກຕ່ຳເຂົ້າຍາມຄ່ຳພໍດີ ຈິ່ງໃຫ້ນາງມັດທິເຂົ້າມາສູ່,ພຣະແກ້ວກູ່ປັນນະ ສາລາ ກໍຂ້າເທີ້ນ..

ຕະມັດຖັງ ປັກກາເສນໂຕ ສັດຖາ ອາຫະ ເຕສັງ ລາລະປິຕັງ ສຸຕະວາ ຕະໂຕ ພາລາ ວະເນ ມິກຄາ ສີໂຫ ພະຍັກໂຄຈະ ທິປິຈະ ອິທັງ ວະຈະນັງ ພຣະວຸງ "ພົກຂາເວ ດູຣາພົກຂຸທັງຫຼາຍ **ເທວະປຸຕຕາ** ອັນເທວະບຸດທັງຫຼາຍອັນຢາຍຢັ່ງຢູ່ຄູ່ໝູ່ໄມ້ພູຜາ ຈິ່ງຕ້ານຈາລະຈາດ້ວຍຄຳຄວນສະຫຼາດເຊິ່ງພະບາດ 3 ຕົນວ່າດູຣາເຈົ້າທັງສາມຈິ່ງນິລະມິດເພດເປັນເນື້ອຕົວວິເສດຢູ່ໃນເຂດອານາ ຢ່າໃຫ້ສັດຕົວຈັ່ງໃຮມາ ເຫິງສາອາຄາດແກ່ນາງນາດນ້ອຍບຸນຊົມ.ໂສມອຸດົມຄວນຄາດ ຄັນວ່າມັດທິມໍລະນາດ ຊາລີລາດຫຼ້າຈັກຕາຍຕາມ,ກັນທາງາມຍອດຟ້າ ຈັກກົ້ມໜ້າມ້ວຍມໍລະນາບໍ່ຢ່າຊະແລ. **ອັດຖະ**ໃນກາລະເມື່ອນັ້ນ ບັ້ນເທພະບຸດສາມຕົນ **ປະຕິສຸນິຕະວາ** ກໍ່ຮັບເອົາດ້ວຍຄຳງາມສະອາດວ່າ ສາທຸ ດີໆ ສີໂຫ. ຕົນໜຶ່ງເນລະມິດເປັນຣາຊະສີຕົ່ນເຕັ້ນ ຕົນໜຶ່ງເນລະມິດເປັນເສືອໂຕ່ງຄົ່ນຄະຄັ່ງ,ຕົນໜຶ່ງເນລະມິດ ເປັນເສືອເຫຼືອງຢັ່ງຢູ່ຖ້າຕັນພາຍໜ້ານາງຈັກມາ **ມະທິປິໂຂ** ສ່ວນດັ່ງນາງແກ້ວ ຣາຊມະທິໃຈບໍ່ດີຕັ້ງຕໍ່ ຄິດຮ້ອຍຮໍ່ຄຳຝັນອັນບໍ່ດີໃນຣາຕີຄືນອັນນັ້ນ

ຄິງສະບັ້ນສັ່ນສາຍໄປມາ **ອຸປະທາເຣສີ** ກໍ່ພິຈາລະນາຫາ ຫົວມັນແລະລູກໄມ້ ໃສ່ໃຈໄວ້ ວ່າຈັກຄືນມາ ຄິດເຖິງຫາສາມກະສັດຕາພໍ່ລູກທຸກຍາກຢູ່ລຸນຫຼັງ **ປຸພຸພະນິມິດຕັງ** ອັນວ່າ ບຸບພະນິມິດອັນບໍ່ດີ ມີສຽງຫຼຸດມືເປັນເຄົ້າ ສາຍກະເຊົ້າຫຼຸດບ່າເປັນຖ້ວນສອງ ເປັນຄອງ ອັນນາງຈັກໄດ້ໜີຈາກພັດພາກລູກໄປໄກທັກຂິນະຈັກຂຸ ຕາຂະເມັ່ນກ້ຳຂວາຈີ້ໄຈ້ວ໋ຽ ເປັນ ເຫດອັນນາງຈັກໄດ້ໃຫ້ເສຍນ້ຳຕາ **ຜາລິໂນ ລຸກຂາ** ຕົ້ນໄມ້ທັງຫຼາຍຝຸງເປັນໝາກ ຜາກົດຫຼາກບໍ່ເຫັນ ຕົ້ນບໍ່ເປັນເລົ່າຜາກົດ ເຫັນຊູ່ທີ່ລຳດູທີ່ແທ້ເລົ່າບໍ່ເຫັນແກ່ຕາ **ສັບພາທິ ສາ** ອັນວ່າທິດທັງມວນທຸກແຫ່ງ ກໍ່ເກີດເປັນອັນມືດຍິ່ງໜັກໜາ **ອະຍັ**ງອັນວ່າເຫດ ອັນນີ້ຈັກແຈ້ນແກ່ກູລືຮູ້ວ່າຈັກເປັນແກ່ສອງບຸນຊູ ລູກນ້ອຍ ຮູ້ວ່າຈັກໄດ້ແກ່ພຣະຍອດ ສ້ອຍຈອມທັນນີ້ຈາ ອັນໜຶ່ງເນື້ອຄະນອງຕົວກ້າ ຜິກຈອກຂ້າ ກາງທາງ **ໂອລຳພະເກ** ເຖິງພໍແລງຄ້ອຍຄ່ຳຕາວັນຕົກຕ່ຳລັບຈອມຜາ ກູຫາກທຽວ ໄປມານານຮອດ ຄິດຈຶ່ງ ຈອດລູກພາຍຫຼັງ **ທາລະກາ** ສອງສະເໜຫາແກ່ນໄທ້ ອຶດລູກໄມ້ໝູ່ຫົວມັນ ຮອຍວ່າມາ ກະສັນ ໂສກຢູ່ ໃນແກ້ວກູ່ສາລາກັນ ຫາແມ່ນີ້ເອີ່ຍ ໃຫ້ຫາແມ່ມານດາລຳບາກຄືດັ່ງລູກ ເນື້ອຢາກກິນນົມແມ່ຄອງຊົມຫົວຫອດກຳພ້າສອດສຸດໃຈ ບັດນີ້ຕາວັນໃສລະຫ້ອຍ ຕົກຕ່ຳຄ້ອຍຍາມແລງ ມາອົດສອງພົມແພງພະແມ່ຢາກນ້ຳແຕ່ວັນສວຍ ຄືດັ່ງລູກງົວ ຄວາຍງາມແງ່ຢູ່ຖ້າແມ່ຄອງຊົມນັ້ນແລນາ **ທ້າງສາ** ແມ່ຫຼົງດູຖີ່ຖ້ອຍຄືດັ່ງລູກຫົງນ້ອຍຢູ່ ເໜືອຕົນ ອົດສອງອຸດົມກ່ອມກ້ຽງກູແມ່ລ້ຽງໂດມຂວັນ ບັດນີ້ແມ່ກໍ່ໜີໄປຫາຫົວມັນ ພາຍໜ້າ ປະລູກໄວ້ໃຫ້ເຈົ້າຟ້າຢູ່ຮັກສາແລນາ ९

(ແຫ່) ຕອນນີ້ນັ້ນກ່າວເຖິງນາງມະທີຜ່າຍ ໄພໜາປ່າໄມ້ໃຫຍ່
ຄັນຕາວັນຄ່ຳຄ້ອຍ ພະນາງຫຼ້າຊິຕ່າວຄືນ
ພໍນາງມາຮອດຫ້ອງ ເຂົ້າຮອມໆບ່ອນເປັນຮ່ອມ
ພໍແຕ່ມາຮອດຫ້ອງ ເຂົ້ານ້ອຍແປກກະໃຈ
ດ້ວຍວ່າເທວະດາດ້າວ ໄດ້ແປງກາຍກັບເພດ
ລົດເດດກ້າ ກະທຳໃຫ້ສູ່ເຊີງ
ຕົນໜຶ່ງທຳເປັນໃຫ້ ແປງເປັນເສືອໂຄ່ງ
ຄະໂຍງແລ່ນເຕັ້ນ ຕັນໄວ້ປ່ອງທາງ
ຕົວໜຶ່ງແປງເປັນເຊື້ອ ເສືອເຫຼືອງຕົວໂຕຂະໜາດ
ໂຜດຜາດເຕັ້ນ ຕັນໄວ້ປ່ອງທາງ
ຕົນໜຶ່ງແປງເປັນເຊື້ອ ຣາຊະສີສັດໃຫ່ຍ
ຈັ່ງວ່າຕັນປ່ອງໄວ້ ທາງໜ້າຮ່ອມຜາ
ອັນວ່າກັນລະຍາ ຄັນມາເຫັນກະຢ້ານສັ່ນ

ຄິງສະບັ້ນແຂງກະດ້າງ
ຕອນນັ້ນຂົນຄິງຂ້າມ
ອັນວ່າພະແມ່ເຈົ້າ
ຈິດນາງຄິດຫ່ວງຫຼ້າ
ຄືກັນຫາຊາລີ
ນາງຈຶ່ງວາງກະຕ່າມັນໄວ້
ຂໍໃຫ້ພະພີ່ເວັ້ນ
ໂອ່ພີ່ເອີ່ຍນາງຊີປັນໝາກໄມ້
ຣາຊະສີກໍ່ຍັງຢືນຕັນທາງ
ເຖິງວ່ານາງວອນໄຫວ້
ອັນວ່າເທພະທ່ອນເຈົ້າ
ຈົນຕາເວັນຄໍ່າຄ້ອຍ
ສາມສັດເດີນວົນວົກ
ມະທີແຈວປານເຮືອຈ້າງ
ເກງວ່າລູກຕົວເອງ
ລະອາເອົ້າເສົ້າລະທົມ
ຄອງບຸດຕາຊິມາລັດ
ງອຍອາສົມລະງົມເອີ້ນ
ຊາລີເອີ່ຍກັນຫາ ແມ່ເຈົ້າມາຮອດແລ້ວ
ຫຼືວ່າພວກເຈົ້າໄດ້
ກູກທໍ່ໃດ່ແຮ່ງມິດ
ນາງຈຶ່ງໄປທູນໄຫວ້
ອັນວ່າລູກອ່ອນນ້ອຍ
ຂໍໃຫ່ພະຈົ່ງເກື້ອ
ຂໍໃຫ້ກູນາຜາຍ
ອັນວ່າກຸມມານນ້ອຍ
ເປັນເຫດດ້ວຍ
ແຕ່ນັ້ນໂພທິສັດເຈົ້າ
ສະຫງົບຢູ່ນິ້ງ
ຫັນຫຼັງສູ້

ຍ່າງບໍ່ເປັນ ໂອ່.....
ດອກຜ່າງຕາຍຕົວສັ່ນ
ລືມເນື້ອຫຼ່າຫຼົງ
ນ້ອຍອ່ອນສອງສີ
ຊິຢູ່ຄອງຄອຍຖ້າ
ໄດ້ວິງວອນກົ້ມຂາບ ວ່າສາທຸເດີ.....
ໜີໃຫ້ປ່ອງທາງ
ໃຫ້ເຄິ່ງໜຶ່ງຄັນໜີ
ບໍ່ໃຫ້ນາງໄປໄດ້
ແສນທີຮ້ອຍເລົ່າ
ບໍ່ມີໃຫ້ປ່ອງຊິໄປ
ຄຽງບ່າຍຈອນຊີຕົກ
ໃຫ້ຫຼີກໜີໄປແລ້ວ
ເດີນຕາມທາງຮີບເລັ່ງ
ຊິຄອງຄອຍຢູ່ຖ້າ
ຫາບກະຕາແລ່ນລົ້ມ ໝົ່ນປ່າເຖິງສາລາ
ຢູ່ວ່າງທາງກະຈາງຈ້ອຍ
ເດີນລົງມາແຄມປ່າ
ຄຳແກ້ວເຈົ້າຢູ່ໃສ
ລີ້ຊ່ອນຫົວຊຸກລູກຄຳເອີ່ຍ
ງຽບສຽງບໍ່ຂານຕ້ານ
ສົມພານໂພທິລາດ ວ່າພີ່ເອີ່ຍ
ຂອງຂ້ອຍກະເລົ່າຫາຍ
ໄດ້ວອນໂຜດປານີ ນ້ອງຖ້ອນ
ໄຄ່ຄວນຄຳແຈ້ງ
ທັ້ງສອງສູນຄາບ ພີ່ເອີ່ຍ
ອັນໃດແທ້ໃຫ້ອີ່ດູ
ບໍ່ມີຈາຕ້ານປາກ
ບໍ່ມີເອື້ອເຈົ້າອ່າວຝັ່ງ
ບໍ່ມີຈາຕ້ານຕໍ່

ພະນາງທູນເລົ່າຊ້ຳ
ນາງກະໂສກາດ້ວຍ
ທຸກທ່ຳຟ້າ
ໂທມະນັງແຄ້ນ
ທັງຄິດເຖິງລູກນ້ອຍ
ອັນໜຶ່ງເດີເປັນດັ່ງເຂົາຫຼວງກ້ວາງ
ລົ້ມທັບເຈົ້າ
ຕໍ່ແຕ່ວິບາກເບື້ອງ
ມະຫິທູນຜິວຂວັນ
ວ່າພີ່ເອີ່ຍ ຂ້າຊິມໍລະນາມ້ຽນ
ຄັນບໍ່ເຫັນລູກນ້ອຍ
ເຖິງແມ່ນນາງວອນໄຫວ້
ອັນວ່າພະເຫວດເຈົ້າ
ນາງຈຶ່ງຟ້າວ
ດູຕາມສະພັງໜອງ
ນາງກະບຸໜາມໜົ້ນ
ຕີນນາງຕຳຕ່ອຍຕ້ອງ
ເຈົ້າຢ່າໄດ້ຢູ່ຊ້າ
ມາກິນເຝືອງໄຟຫວານ
ແມ່ໄດ້ແປງປົດຂວັ່ນຄັນໜ່ອຍໃດ່ສົມຄວນ
ມັນອີ່ອອນແມ່ລ້າງແລ້ວ
ວ່າກັນຫາແມ່ນີ້ເອີ່ຍ...
ເອົ້ນຄຳໃດກະເລີຍມິດອົ້ງຕົ້ງ
ບໍ່ເຫັນສອງກຸມມານ
ມະຫິເລີຍລົ້ງຄົ້ນ
ນຶກວ່າເງືອກຄາບເຈົ້າ
ເປີດໃບບົວແລ້ວກະກົ້ມ
ດູຕາມສະພັງໜອງ
ກັບຄືນມາທູນເຈົ້າ
ຜັດຫາເຫດໃສ່ນ້ອງ
ຫຼາຍຄັ້ງກະບໍ່ຈາ
ຫຼາຍປະການເຕັ່ງຕຶງ ໂອ....
ໄດ້ກອຍກັ້ນເກື່ອນກະຫາຍ
ພໍປາງຕາຍດອມໂສກ
ພໍປານຟ້າເຈົ້າລັ່ນເຕັ່ງ
ພະສຸເມນຄົ້ນໂຄ່ນ
ກະແດລົ້ນບໍ່ຕ່ຳ ໄດ້ແລ້ວ
ພອຍພາກຊິເປັນສຽງ
ໃຫ້ຮ່ຳຮຽນຂຽນຂໍ້
ເປັນຜີເສຍຈາກພະອົງແລ້ວ
ພະນາງນ້ອງສ່ວນຊີຕາຍ
ແສນທີຮ້ອຍເລົ່າ
ກະຊົ່ງນິ້ງບໍ່ຕ່ຳ
ກະວິ່ງແລ່ນນຳຮອຍ
ກະພ່ອງດູດາຍດ້ອມ
ເຂົ້າຄຳຕາເວັນຄ່ຳ
ທັ້ງຮ້ອງວ່າລູກມາ
ລຽບປ່າງຊິກັດ ຄຳເອີ່ຍ
ໜ່ວຍໜາກແຍວຍາມແລ້ງ
ເລືອກໄວ້ຖ້າລູກອ່ອນ
ໜາກແຍວສົ້ມແມ່ປາດຫົວ
ຊາລີແມ່ນີ້ເອີ່ຍ...
ບໍ່ມີສິ່ງຊິໄຂຂານ
ຜັດແລ່ນລົ່ງໃນນ້ຳ
ຢູ່ສະສີຕັ້ງຫຼາຍເລົ່າ
ລົ່ງນ້ຳຈຸ່ມຈົ່ມ
ໜອບສ່ອງຫາຮອຍ
ກະບໍ່ມີພໍນ້ອຍ
ສັນດອນພະຍາເຫວດ
ຈາເວົ້າບໍ່ແມ່ນຄອງ

ວ່ານາງລັກຫຼິ້ນຊູ
ປະຜົດຜິດກາເມ
ກັບຄືນມາຫາເລື້ອງ
ຜ່ອງດູຖືກອ້າຍ
ເພິ່ນວ່າຊ້າງເປີດໄມ້
ປາຫາກໜີໄກວັງ
ຫົງຫາກໄກວັງກວ້າງ
ວັງໃສມີບໍ່ໃຊ້
ເຈົ້າຫາກພິຕີໄຂ້
ໄຂ້ບໍ່ເຈັບປວດເມື້ອ
ຄັນແມ່ນຫາຜົວໃຫ້
ໄຂ້ຂອງນາງ
ຄືຊິມີດອ້ອຍຈ້ອຍ
ພະເຫວດວ່າທໍ່ນັ້ນ
ມະທິເວດທະນາອຸກ
ວ່າພີ່ເອີ່ຍ ສັງມາທຳເວນຂ້ອຍ
ນັບແຕ່ໄດ້ຈາກເມືອງ
ຫາວ່ານາງໂລບລ້ຽວ
ຖ້າຫາກເປັນຄວາມຈິງ
ນາງຫາກມາພຽນລ້ຽງ
ຖ້າທຳບໍ່ຖືກຕ້ອງ
ຊິເອົາຫົວຮອງໄມ້
ໂອ່ພີ່ເອີ່ຍ ຄັນນາງທຳຖືກຕ້ອງ
ວ່າທໍ່ນັ້ນ ພະນາງແລ່ນນຳຮອຍ
ໄພພະນອມກວ້າງ
ມີໝູ່ສັດຕື່ນເຕົ້າ
ມີໝູ່ສັກກຸນາເຄົ້າ
ຝູງຊະນີຕື່ນເຕັ້ນ
ພະແມ່ເຈົ້າ
ໂຄມຄ່ຳມໂຂມ
ຢູ່ໃນປ່າພະຍາທອນ
ບໍ່ຫ່ວງຜົວກັບບຸດນ້ອຍ
ພ່າຍນ້ຳຕາຫາລູກ
ຜັດລືມຖິ້ມບໍ່ພໍ ນີ້ລະນໍມະທິເອີ່ຍ...
ໄລປ່າບໍ່ຫົວຊາ
ວ່າສະຫາວຄາວນ້ຳ
ໄປລົງຕົມບວກຄວາຍແຊ່
ໄປລົງກ້ວແຕ່ບວກຕົມ
ຖາມກິນແກງໄກ່ ມະທິເອີ່ຍ
ໃຜຊິຮູ້ຮ່ອມປ່ວ
ມະທິນາງຄົນໃໝ່
ຄືຊິມີດອ້ອຍຈ້ອຍ
ຢາແກ້ບໍ່ອ່າວເລີຍ..
ກໍ່ເສີຍຢູ່ບໍ່ມີຈາ
ດັ່ງຊີຕິອີກນ້ອຍ
ຫາກະບວນຫຼາຍເລື່ອງ ແທ້ນໍອ້າຍ
ຫວັງເພິ່ງພະເຜົ່າຜູ້ຜົວແກ້ວຜູ້ດຽວ
ມືອມືດກາມະຄຸນ ວ່າລື
ຈຶ່ງຄ່ອຍຝັນຄໍ່ມ້ຽນ
ພະອົງທັມທາງໂລກ
ເຊີນທ້ອນຈຶ່ງປະຫານ
ຍອມຜິດສາລະພາບ
ພະນາງນ້ອງຈຶ່ງຈະເລີນ...
ໃນດົງດອຍ ປ່າໄພພະນອມໄມ້
ທົ່ມມະພານມືອມືດ
ຕັນເຂົ້າລະຫວ່າງເຂົາ
ເຈຍບົນແຮ້ງບ່າງ
ໂຕນໄມ້ຕື່ນພະນາງ
ໄດ້ໝົ້ນປ່າໂຄມໜາມ
ເຈົ້າຄ່ອຍຄານໄປໜ້າ

ແມ່ນເຈົ້າກາເປັນເສັ້ນ
ພະແມ່ເຈົ້າ
ເລີຍບໍ່ເຫັນສອງຫຼ້າ
ມະທີຢູ່ບໍ່ໄດ້
ໂອ້ຍ ຊຸມຊູ່ເຈົ້າ
ຊຸມຊາຍເຈົ້າ
ຈັ່ງວ່າໂຕ້ນຕີ່ໂຕ່ນ
ແນວໃດ?ໆ
ທັງມັນແກວມັນເຜືອກ
ຢ່າພາກັນໄປຫຼິ້ນ
ຜົວລູກຊິລ່າເສົ້າ
ຕອນນັ້ນເຫັນວ່າບໍ່ໄດ້ເລື້ອງ
ກັບໄປທູນອົງພະ
ພຣະກໍ່ເລີຍບໍ່ຈາເວົ້າ
ຈັ່ງວ່ານາງນາດຕ້ານ
ແຕ່ນັ້ນກຳສູນສ້ຽງ
ເຫດຄະນິງລູກນ້ອຍ
ເລີຍສະຫຼົບລົ້ມ
ດ່າວໆດິ້ນ
ລົ້ມລົງພຸ່ມດອກໄມ້
ທາງໄກ15 ໂຍດ
ພະເນຜ່າຍຜູ້ດຽວ
ອັນດາລາທັງຄູ່
ກະເຣໄຫ້ອັ່ງມະໂນ
ຜູ້ພົ້ວດອກຫວ້າ ອີ່ແມ່ນີ້ເອີ່ຍ
ຜູ້ພົ້ວໝາກຂາມໂຂ
ດອກຕອງຕີ່ງມັນແກວ
ແມ່ໄດ້ຫາມາແລ້ວ
ວ່າຊິມາແຈກນ້ອຍປັນໃຫ້ທ່ໍກັນ
ເນີນດິນຊາຍມັນຊິເກົ່າ
ກັນຫານ້ອຍຄ່າບໍ່ແພງ
ກ່ໍກັບສູ່ອາສົມ
ພີ່ສັນດອນເຈົ້າ
ອັນໃດຈັກຢ່າງ
ຂານໄດ້ກະບໍ່ຈາ
ຕາມະທີມ໊ອມ໊ດ ມາແລ້ວ
ກະເລີຍລົ້ມທ່າວລົງ
ເຈົ້າເປັນລົມລົ້ມທ່າວ
ລົງດິນດິ້ນແດ່ວໆ
ມະທີຫຼ້າ ກ່ໍທ່າວຕາຍ....

ມັດທຣິກັນຕ໌ 2

(ເດີນ) **ອິຕິ** ມະທີຊິຊະແລ້ມ ສອງຝ່າຍແກ້ມແປກຜິວຄຳ ສອງຕາດຳດີດູປອດ ແຂນ ສອດສ້ອຍອົກໄຂ ຕີນມືໃສຊະຊ້ອນ ເນື້ອກ້ຽງອ່ອນຜິວສົມວນໆ ລັກຂະນະດີ ຄວນຄາດ ຄ້ຶອຄ້ອມລວາດ ຕີນຜົມແອວກົມແກວນຄໍຕົກປ້ອງ ແມ່ນວ່ານາງບໍ່ຢ້ອງກ່ໍ ຫາກຄ່ອງສະໜົມສາວ **ປັກໄຄຫະ** ນາງນິງ ພາວເລີກຂຶ້ນຍັງເຄົ້າແຂນທັງສອງກ້ຳຮ່ຳສອງ ທີ ຕີອົກຕົນຄ້ຶອຍລະຫ້ອຍຫອດຫົວຕາຍ ເໜືອແຜ່ນດິນດາຍຈົມໃກ້ ແທບພຣະບາດ ໄທ້ມະຫາລັດສີ ກໍມີແລ?

ອະຖະ ໃນກາລະເມື່ອນັ້ນ ບັ້ນພຣະເວດສັນຕະຣະຣັດສີ ເຫັນຣາຊະມະທີລົ້ມທ້າວ ໄທ້ ຈອດໃຈເຖິງຄຳກັ່ງວົນ ຫາກມາຖືກຕ້ອງ ແກ່ນ້ອງນາດໄທ້ມະທີ ເຈົ້າກ່ໍມີຄຳຮ່ຶມ

ເພິ່ງວ່າດັ່ງລືມະທິ ແລມາຕາຍໃນທີ່ບໍ່ສົມບໍ່ຄວນນີ້ຈາ ຜີວ່ານ້ອງມະທິເມືອຕາຍໃນເມືອງ ເຈຕຕະຣາດ ແລະເມືອງແກ້ວອາດປະເຊໄຊອຸຕຣະນະຄອນວຽງກ້ວາງ ຜີຈັກສ້າງຫີບໃສ່ ໂລງຄຳລຳນຳດີທຸກເຍື່ອງ ປະດັບເຄື່ອງພ້ອມລິງລາຍພາຍປົນຜີຈັກໃສ່ຜາສາດ ມີທັງຮູບ ນາຄຣາດຄາບຄໍລອງດວງປີແລຊໍ່ຟ້າ ກ້ຳໜ້າຜີຈັກແຕ້ມລາຍວັນທັນກາງຜີຈັກໃສ່ດອກ ຜັກແວ່ນ ແປ້ນອັດໜ້າຜີຈັກແຕ້ມຮູບທ້າວແອ່ນນຳສາວ ທາງຍາວຜີຈັກແຕ້ມລາຍເຄືອ ເຈືອວິງວາດ ຂ້າງຜາສາດຜີຈັກແຕ້ມລາຍໂຄມຂັດ ຖັດນັ້ນ ໂບກຄວ້ຳຜີຈັກແຕ້ມຮູບ ຄວາຍ ໂບກຫງາຍຜີຈັກແຕ້ມຮູບຊ້າງ ສອງຕາບຂ້າງຜີຈັກໃສ່ລາຍຈີນ ຕີນທໍລະນີຜີຈັກ ແຕ້ມຮູບເທວະດາຖືທຸງໄຊເດັຍຣະດາດ ຜີຈັກແຕ້ມຮູບເຈົ້າຈັກກະວັດຕິຣາດມາແກວ່ງ ຈຳມອນ ບັດນີ້ນາງມາຕາຍໃນດົງດອນປ່າໄມ້ຜີຈັກໜີກ່ຳໜີບໍ່ມົ້ນຜີຈັກກົ້ມໜ້າຕ່ຳ ຫົວເຂົ່າເຊັດນ້ຳຕາ ພາວະນາຢູ່ກ່ຳ ເປັນອັນຍາກທຸກໂສກຫາກວິວອນ ບັດຖັດນີ້ນາງເລົ່າ ມາຕາຍ ໃນດົງດອນແຫຼ່ງຫ້ຳ ປະຜີໄວ້ເປັນ ໜ້າຍຈວ້າຍກວ້າຍຢູ່ຜູ້ດຽວ ໃນໄພຂຽວດູ ຍາກ ຈັກມີຄົນໃດມາຊ່ອຍເລີກຊາກສິ່ງສະການແກ່ນາງ ນິງຄານແກ່ນໄທ້ ບັດນີ້ນາງມາ ຕາຍໃນດົງດອນປ່າໄມ້ ຜີຈັກປະລະເຈົ້າໄວ້ໃຫ້ກະດ້າງຢູ່ເໜືອແຜ່ນ ດິນດາຍແລນາ ໂອນ ຜີວ່ານ້ອງແກ້ວກູແລເມືອຕາຍໃນເມືອງປະເຊໄຊດັ່ງນັ້ນ ກິຍາອັນເລີກຊາກ ສິ່ງສະການດ້ວຍປະລິວານເຊື້ອຊາດຍາດຕິກາວິງສາ **ທະເວ ຣັດຖາ** ອັນວ່າເມືອງທັງສອງ ຄືວ່າເມືອງ ເຈຕຣາດແລະເມືອງແກ້ວອາດປະເຊໄຊ **ຈະເຣຍຍຸງ** ກ່ຳເພິ່ງວ່າຈະຂຳເຂືອກ ເຍືອກໄປມາ ດ້ວຍອັນເລີກຊາກສິ່ງສະ ການແກ່ນາງນິງຄານແກ່ນໄທ້ ບັດນີ້ເຈົ້າເລົ່າມາ ຕາຍໃນພະນັງຣາວເຖື່ອນ ບໍ່ມີຜູ້ພ້ອມເພື່ອນພໍສອງ ຈັກມີຄົນໃດມາຊ່ອຍປອງຜ່າໄມ້ ໃຫ້ເປັນຫຼົ່ວ ຈັກມີຄົນໃດມາຊ່ອຍໂຈມຫ້ວນາງລູບລ້າງ ຈັກມີຄົນໃດມາຊ່ອຍລັ່ງນ້ຳ ອາບສົງສີ ຈັກມີຄົນໃດມາຊ່ອຍຫາມນາງມະທິໄປປົ່ງໃນປ່າຊ້າ ຈັກມີຄົນໃດມາຊ່ອຍຜ່າ ໄມ້ໃຫ້ເປັນເຊິງຊະກອນ ບັດນີ້ນາງມາຕາຍໃນດົງດອນແຫຼ່ງຫ້ຳ ປະຜີໄວ້ເປັນ ກຳພ້າທຸກ ຍາກຢູ່ລຸນຫຼັງແລນ **ອຸປັຊຊາເຍ** ໃນເມື່ອທຸກໂສກຫາກເກີດມີ ພຣະລັດສີກ່ຳແກວດກົດ ໝາຍວ່າ ຕົນລູບໜ້າແລຫົວອົກແຫ່ງນາງພະບາດດ້ວຍມືກ້ຳຂວາພຣະບາດ **ສັດຕະມາ ເສອະຣັນເຍ** ແຕ່ ເຈົ້າມາເປັນຊີທະລິງຜະນວດ ບວດເປັນ ຣັດສີໄດ້ 7 ເດືອນແລ້ວ ກ່ຳ ບໍ່ຫ່ອນໄດ້ຖືກຕ້ອງເນື້ອຄີງແຫ່ງ ນ້ອງນາດໄທ້ມະທິ ບັດນີ້ທຸກໂສກຫາກເກີດມີແກ່ເຈົ້າ ກ່ຳບໍ່ຮູ້ເມືອຄີງວ່າຕົນເປັນຊີແລະນັກບວດ ລວດມີນ້ຳຕາທັງສອງຕົກເນືອງໄຫຼຫຼັ່ງ ຍ້ອຍ ໜ້າທັ້ງລິງມາ ທ້າວກ່ຳຍົກຫົວພະນາງມາພາດໄວ້ເໜືອຂາ ປະຣິໂພຊິຕະວາ ເຈົ້າກ່ຳຜາຍໃສ່ ຍັງນ້ຳເຕົ້າແລະຄັນທິ ເພື່ອວ່າຈັກໃຫ້ນາງມີສີດັ່ງເກົ່າ ພຣະເວດສັນຕຣະເຈົ້າ ກ່ຳນັ່ງຢູ່ຫຼົ່ງດູ ແລນາ ৭

(ແຫ່) .ເອີ ບັ້ນມະຫາລັດສີເຈົ້າ ເຫັນນາງມໍລະນາດ
ອົງພະບາດນັ່ງເກີ້ ພະໄທເສົ້າເກົ່າສີ
ພະອົງຫຽວພຸ້ນພີ້ ຈັກຊິເຮັດປະການໃດ
ເຫັນມະທີສະຫຼົບໄປ ເກືອກຂີ້ດິນໝອງມົ້ວ
ຄິວເອົາແຂນໂຈມຂຶ້ນ ບິນພະເພົາເອົ້າອັ່ງ
ຕັ້ງແຕ່ມາຢູ່ດ້າວ ບໍ່ເຄີຍຕ້ອງຕ່ອຍຄີງ
ມື້ນີ້ບໍ່ອາດນິ້ງ ຊິຫຽວຢູ່ດຽວດາຍ
ຫຼືອາດຕາຍຈິງຄັກ ອ່ອນຄີງບໍ່ຕີງເນື້ອ
ແລ່ນເອົາເຫຼືອນໍຫຼ້າ ແພງຂວັນຕາຄອບເປັນຫ່ວງ
ດວງພະໄທຜີນີ້ເອີ່ຍ ໂພດຕ໊ອອ້າຍນີ້ຫວ່ງຫຼາຍ
ພີ່ໄດ້ທຳທ່າຮ້າຍ ບໍ່ແມ່ນຈາກໃຈຈິງ ດອກນາງເອີ່ຍ
ຄອບຫຼົງເຫັນໂພທິຍານ ອ່ານວິຈານເຫັນແຈ້ງ
ຄັນຖະແຫຼງໃຫ້ນາງຮູ້ ໂພທິຍານຊິບໍ່ຜ່ານ
ຢ້ານເຈົ້ານຳຄັດຄ້ານ ເອົາສອງຫຼ້າຕ່າວຄືນ
ມະທີເອີ່ຍໃຫ້ລຸກຟື້ນ ພີ່ຊິບອກຄວາມຈິງ ນາງເອີ່ຍ
ເລີຍບໍ່ຕີງຕົນລຸກ ອ່ອນສະຫຼວຍຊວຍແທ້
ພຣະອົງແລດູໜ້າ ເບິ່ງໄປມາກະໃຈອ່ອນ
ໂອ້ແມ່ດວງດອກຊ້ອນ ສະອອນເດ້ເຫວ່ກະໃຈ
ຢູ່ໃນກາງປ່າໄມ້ ໃຜຊິຊ່ວຍຫາຢາ
ມາຮັກສາໃຫ້ນາງຄືນ ຕື່ນມາໄດ້ເປັນເພື່ອນ
ເໝືອນພະໄທຊິເພ້ມ້າງ ບໍ່ຈັກທາງຊິແກ້ຊ່ວຍ
ພະເຫວດເວົ້າອີ່ນອ້ອຍ ໄດ້ຄວນຄ້ຳຮ່ຳຮອນ
ຄຳເບິ່ງໃສກະບໍ່ຮ້ອນ ເຢັນສະງຽບລົມຝົນ ເດນໍ
ມາບໍ່ເປັນຕາຄືນ ພະເນດນາງໝອງຄ້ຳ
ເຖິງຄາວກຳແລ້ວບໍຫຼ້າ ດຶງແຂນນາງກະບໍ່ຕື່ນ
ພະເຫວດຊົງສະອື້ນ ແສນເສົ້າເກົ່າມະໂນ...
ໂອເດນໍ ຫາຜູ້ມາຜ່າໄມ້ ເຜົ້າເຈົ້າກະບໍ່ມີ
ພະເຫວດພາທີເວົ້າ ພະອົງດຽວທັງຈິ່ມ
ບໍ່ເຫັນຫົນປ່ອງທ້ຳ ທ່ຳຊິແກ້ຊ່ວຍໄຂ
ມະທີເອີ່ຍ ເຈົ້າຊິຖິ້ມອ້າຍໄວ້ ແກມປ່າພະນາສັນ ຈັ່ງໃດນໍ

ໃຜຊິຫາຫ້ວມັນ
ອັນວ່າສອງກຸມານແກ້ວ
ກະຫາກຍັງແຕ່ເຈົ້າ
ບັດນີ້ນາງນາດນ້ອງ
ພີ່ຊິນຳເອົາໃຜ
ອັນແຕ່ໃນຫີນຫ້ອງ
ຫາຜູ້ດີຈັ່ງນ້ອຍ
ຍາມພີ່ທຸກາກ່ຳບໍ່ເວັ້ນ
ຫອບບຸດຕາຕິດຕາມ
ຢູ່ນຳກັນພຽນສ້າງ
ຄວາມລຳບາກກະແມ່ນເຈົ້າ
ຂຽວເອີ່ຍຂຽວໃບຝ້າຍ
ເດືອນເອີ່ຍເດືອນຈາກຟ້າ
ເທບເທວາທຸກຄ້າຍ
ມາຊ່ວຍເອົາມະທິຄືນ
ປາລະມີພູມພື້ນ
ຜືນຊິນທານໃຫ້ສິ່ງທ້ອນ
ຕໍ່ແຕ່ນັ້ນພະເຫວດເຈົ້າ
ຕັກອະລິມາສິງ
ມະທິຄືນມາໄດ້
ຂາບລືສີແລ້ວກະເວົ້າ
ວ່າພີ່ເອີ່ຍ ລູກເຮົາຕາຍຈຸ່ມນ້ຳ
ໂປດຈົ່ງໄຂພະວາຈາ
ພຣະເວດແນມເບິ່ງໜ້າ
ຂໍໃຫ້ນ້ອງນາດຫຼ້າ
ພີ່ນີ້ຄິດຕໍ່ຕັ້ງ
ຈົ່ງໄດ້ທານສອງສີ
ພາມຢູ່ແຖວກະລິງຜຸ້ນ
ປະສົງຍອດມ່ຶງຕົ້ນ
ຄັນຊິຖ້າກ່າວເວົ້າ
ສູ່ສະເຫວີຍຈັ່ງເຄີຍແລ້ວ
ພີ່ທຳທານບໍລິຈາກ
ຊິເປັນເພື່ອນຮ່ວມສອງ
ຊິມາພາກໜີໄປ
ຈັ່ງຊິຄືມະທິນ້ອງ
ຈັກະວານຜືນທີ່
ມະທິສ້ອຍຍາກຊິເຫັນ
ພີ່ເຂົ້າປ່າກະນຳມາ ໂອຍ...
ຍາກຈົນກະທົນກັ້ນ
ບໍ່ໄລວາງອຸປະຖາກ
ເອົາໄວ້ແຕ່ຜູ້ດຽວ
ສັ່ງມາຕາຍຢູ່ກາງປ່າ
ຊິຄືຫຼ້າຫ່າງພີ່ຊາຍ ວ່າສາທຸເດີ.....
ຂ້ຽງເຂດພະນາເຂົາ
ໃຫ້ຕື່ນຕົນຕ່ຶງຟື້ນ
ບຳເພັນມາຈົນລ້າອ່ອນ
ມາຖ້ອນ ຊ່ວຍມະທິ ແດ່ເດີ
ກ່ຳນວດນ່ວງສີງພັກ
ແມ່ນິງກ່ຳເລີຍຟື້ນ
ຕົກພະໄທຢູ່ຕັກພີ່
ທູນຂໍ້ຕໍ່ຖາມ
ຫຼືວ່າຢູ່ຫົນໃດ
ຢ່າຊິບັ່ງຍັງນ້ອງ
ແພງຂວັນຕາແລ້ວເວົ້າຕໍ່
ສະຕິຕັ້ງເຈົ້າຕໍ່ຟັງ ພີ່ເດີ
ຫວັງເພິ່ງໂພທິຍານ
ລູກເຮົາໃຫ້ເຂົາແລ້ວ
ບຸນເຫຼືອໂຕດັ້ນຮອດ
ສອງຫຼ້າລູກເຮົາ
ພ້ອມພໍ່ບາດນາງມາ

ຢ້ານບໍ່ວ່າງບຸດຕາ
ພີ່ຄົນດຽວກະເລີຍໄດ້
ຂໍໃຫ້ຍອດມົ່ງຫຼ້າ
ມະທິຫາຍວ່າວຸ້ນ
ມັນຊິເປັນການຫຍັ່ງ
ບໍ່ດູຕົນຖະແຫຼງເຢີ້ຍ
ສໍ້ໃຫ້ອິດເມື່ອຍລ້າ
ເວົ້າໃຫ້ຟັງຮູ້ເລື້ອງ
ສິ່ງຄວນພີ່ເຫັນຊັດ
ນາງບໍ່ຂີ້ນຂັດແຫຼ້ວ
ຕົກມາຮອດລະວ່າງນີ້
ພຸດທະອົງກ່າວຕ້ານ
90 ຕອນພຣະຄາຖາ
ເອວັງທີລົງໄວ້
ສັກກະບັນບັ້ນໜ້າ
ນັ້ນລະນາ

ຊິກອດກັນພັນກ້ຽວ
ຕັດຊົນໃຈທານທອດ
ປະສົງຕັ້ງເຈົ້າຕໍ່ບຸນ ພີ່ຖ້ອນ
ກົ້ມຂາບພະລືສີ
ບອກໃຫ້ຟັງແຕ່ຕອນຕົ້ນ
ບໍ່ເຄີຍເປັນກະແກ້ງວ່າ
ຫຼົງເອີ້ນກູ່ສຽງ
ນ້ອງບໍ່ວ່າຈາຂັດ
ກວ່າມະທິດີແລ້ວ
ຂໍຍໍມືຮ່ວມພຣະພີ່
ກະຈັບຖ້ວນສູ່ປະການ
ນິທານເທດສະໜາສອນ
ຜູກມະທິກະຈົບນີ້
ຜູກຕໍ່ໄປຊິໄດ້ກັ່ນ
ນິທານເລື້ອງ ຊິຕໍ່ເຕີມ
ສັດທາໂຍມ.

ຈົບ (ກັນມະທິ ມີ 90 ພຣະຄາຖາ).

ກັນຕ໌ທີ່ 10 ສັກກະບັນ ມີ 43 ພຣະຄາຖາ

ບັດນີ້ ຈົບບ່ອນນາງມະທິດັ້ນ
ຈົນໄດ້ມໍລະມົ່ງມ້ຽນ
ຕອນນີ້ເພິ່ນກ່າວເວົ້າ
ພວກຄົນຟັງກໍ່ສະເນາະ
ຕອນນີ້ໂຈະປິດບັ້ນ
ສັກກະບັນບ່ອນບັ້ນ
43 ເພິ່ນບອກໄວ້
ສາດສະດາເທດສອນ
ເປັນປິດຮຽນຄົນເຖົ້າ
ຢ່າຊິຟ້າວເດືອດຮ້ອນ

ຫາຫົວມັນລ້ຽງລູກອ່ອນ
ຕາຍຄ້າງຢູ່ວ່າງເຂົາ
ດູລະອຽດເໝາະສົມ
ມ່ວນຍິນສະອອນໂອ້
ມະທິກັນໄວ້ກ່ອນ
ໃຫ້ຟັງຂ້າຊິວ່າໄປ
ໃນໝວດພຣະຄາຖາ
ວ່າບໍ່ມີທາງອື້ນ
ຊະລາການກາຍແກ່
ໃຫ້ຟັງເລື່ອງຕໍ່ເຕີມນໍໂຍມ.

ບັດນີ້ຊີໄດ້ເລີ້ມ
ນັບແຕ່ອົງຈອມທັນ
ໃຫ້ແກ່ພາມມະໂນເຖົ້າ
ພຣະອົງທານທອດແກ້ວ
ຝູງສັດສາໝູ່ໄມ້
ສັດໃນດົງດອນຜາ
ຈົນຂົນພອງສະຫຍອງເກົ້າ
ວັນທະນັງນອບນ້ອມ
ໂລກໄດ້ຊ່າຕຶ້ງໆ
ພວກຊາວເຮົາເມືອງມະນຸດ
ຕະຫຼອດເຖິງເມືອງຟ້າ
ຍິນດີນຳທ່ອນທ້າວ
ຝູງພົ້ກສາໝູ່ກ້ວຍ
ເມືອງຍັກສາກັນດານ
ເຂົ້າຍຸຄັນທອນນ້ອມ
ຄັນທະນາດອ່ອນນ້ອມ
ໃນກາຫຼະຄັ້ງນັ້ນ
ພະອົງຫຼົງແລດ
ເຫັນວ່າຊີໄພເຈົ້າ
ພະອົງທານລູກນ້ອຍ
ເກີດແຜ່ນດິນສະທ້ານ
ເພາະວ່າມີສັດທາ
ສຽງເຂົ້າລືຊາກ້ອງ
ພະອົງໃຈແກ່ກ້າ
ດຽວນີ້ເຫຼືອແຕ່ແກ້ວ
ຄັນມີຄົນມາຂໍ
ຕໍ່ໄປຊີໄພເຈົ້າ
ກໍ່ຈັກເກີດເດືອດຮ້ອນ
ຊົນກະຊີເກີດປັ່ນປີ້
ບໍ່ມີໃຜຫາຫ້ອມັນ
ປົດບາດສັກກະບັນ
ໄດ້ທອດທານບຸດຕານ້ອຍ
ເມືອງກະລິງເດີນຮອດ
ໄປແລ້ວຊ່ອງພະໄທ
ຍໍຍິ່ນໂມທະນາ
ສະນັ່ນເມືອງສຽງຮ້ອງ
ເມືອງເຮົາລົ້ນອັ່ງ
ປະນົມນ້ອກ່າວເຖິງ
ປານອຶ່ງຕົກຂຸມ
ໄດ້ຊ່າກັນດອກດັງຕຶ້ງ
ໂມທະນາຫຼົ່ງຫຼ່ຳ
ຍໍນ້ອຍິ່ນຖວາຍ
ອອກດອກຜົດການ
ຊ່າກັນຈົນເຖິງເທົ້າ
ຈອມດອຍຖວາຍບາດ
ຍອມຮ້ອມສ່ວນບຸນ
ເທວະຣາດສັກກະລົນ
ແຜ່ນດິນໄຫວປົ້ນ
ສັນດອນພະຍາເຫວດ
ໄປແລ້ວແຕ່ວານ
ໄດ້ທານລູກບຸດຕາ
ໃຫ້ລູກລຸນບຸນລົ້ນ
ສຽງຊໍເຊັ່ງຊ່າ
ທານໄດ້ຄູ່ສູ່ແນວ
ມະທີນາດຄົນດຽວ
ມົ່ງເມຍຊົທານໃຫ້
ສັນດອນພະຍາເຫວດ
ຄົນໃຊ້ຊົບໍ່ມີ
ຕີເຫດກາງຄັນ
ເຜືອກາອຍມາລ້ຽງ

ຄວນກູໄປຂໍໄທ້
ແລ້ວຊິຄືນທ່ອນທ້າວ
ພໍທີ່ອີງທ່ອນທ້າວ
ທະຍານລົງເມືອງຄົນ
ສະເດັດລົງເມືອຫ້ອງ
ແລ້ວຈິ່ງແປງເພດຜ້ຽນ
ສັກຄ້ອນເທົ້າ
ແລ້ວກໍ່ວັນທະນາມົບ
ນັ່ງທີຄວນເລີຍນົ້ງ
ຄາວນັ້ນພຣະເວດເຈົ້າ
ຖາມວ່າເດີນດຸ່ງດັ້ນ
ພາມຈິ່ງວັນທະນາມົບ
ເຫດທີ່ເຮົາເດີນດັ້ນ
ຫວັງເຜິ່ງອົງພະສີສີ
ຂ່າວວ່າທ່ານເລີດລ້ຳ
ກະທຳທານບໍ່ມີຂັດ
ອຸປະມາຄືນ້ຳ
ກະແສໄຫຼມາກລົ້ນ
ໃຈເຢັນຄືແມ່ນ້ຳ
ຍົມມະນາອາເຈລາອະດີ
ອຸປະມາຄືທ່ານ
ນ້ຳພະໄທເກື່ອຍກັ້ນ
ເຫດທີ່ຂ້າເດີນດັ້ນ
ວ່າຢາກຂໍເມຍແພງ
ຊື່ວ່ານາງມະທິເທງ້ຳ
ຂໍຈິ່ງປະສາດໃຫ້
ຄາວນັ້ນອົງເອກໄທ້
ເຫັນເຂົາທູນຂໍເມຍ
ເອີ້ນເອົາເມຍແພງຫຼ້າ
ຄືມີຜູ້ຢາກໄດ້

ມະທິນາງໄວ້ກ່ອນ
ທັງພ້ອມປະສາດພອນ
ໂພທິຍາດລຳລຶກ
ລ່ວງບົນເຫີນຟ້າ
ວົງກົດທິມມະເວດ
ສົມດ້າມດັ່ງພາມ
ພາຍຍ່າມເດີນຂະຫຍັນ
ກາບລົງສາມຄັ້ງ
ດຸດສະນີບໍ່ມີປາກ
ຈິ່ງຖາມຖ້ອຍທ່ານພາມ
ມາຮອດປະສົງຫຍັງ
ຂາບທູນພະອົງທ່ານ
ມາເຖິງສະຖານທີ່
ຄືຊີໄພພະເຫວດເຈົ້າ ທາງພ້ຍອດທຳ
ໃຈໃຫຍ່ໄພສານ
ຍອດພະໄທໃຈກວ້າງ
ກະແສຊົນທັງ 5 ແມ່
ບໍ່ມີມື້ຂາດສາຍ
ສາຍໃຫຍ່ຄົງຄາ
ທົ່ງສະນະທີຫຼັ່ງໄຫຼບໍ່ມີເອື້ອນ
ມີພະໄທໃຈກ້ວາງໃຫຍ່
ທັງພ້ອມເຫດຜົນ
ຫວັງເຜິ່ງອາມະຕະ
ທ່ານພະອົງວັນນີ້
ເມຍແພງອຸປະຖາກ
ນາງນ້ອຍຈິ່ງປະສົງ
ນາມຫໍ່ພຸດທັງກຸນ
ຊົ່ນພະໄທໃຈແມ້ງ
ຮີບມາເດີແກ້ວກູ່
ນາງນ້ອຍນາດຖະແພງ

ພະເຫວດຈາກ່າວຕ້ານ
ນາງມະທີໄດ້ຍິນຄຳ
ເອົາແຕ່ສາມີເຈົ້າ
ເກີດມາໃນຊາດນີ້
ແລ້ວແຕ່ພະພີ່ເຈົ້າ
ຈັບມືນາງມະທີ
ວ່າ ອິມິນະປຸນຍະກຳເມນະ
ເຊີນເອົາຄຸດນາກນ້ຳ
ພ້ອມທັງອິນຢູ່ຟ້າ
ຜູ້ຂ້ານໍ້ມືຍົກ
ສິ່ງສັກຊິດເບື້ອງໃຕ້
ທໍລະນີນາກນ້ຳ
ຄວນໃຫ້ມາແລຢ້ຽມ
ວ່າຜູ້ຂ້າທານເມຍຮັກ
ຂໍໃຫ້ມີບຸນລົ້ນ
ໃຫ້ສຳເຫຼັດໂພທິຍານ
ໃຫ້ສົມແມ້ງປາດຖະໜາ
ຄາວນັ້ນອິນຢູ່ຟ້າ
ເດີນໄປຕາມສະສີ
ແລ້ວຈຶ່ງກັບມາຫ້ອງ
ແລ້ວຈຶ່ງບອກເຫດໃຫ້
ບິນຂຶ້ນໄປສູ່ຟ້າ
ເຮົາໄດ້ເອົາຄືນມາ
ຕໍ່ໄປນີ້ຢ່າທານນ້ອຍ
ໃຜມາຂໍຢ່າຊິໃຫ້
ຕໍ່ແຕ່ນີ້
ມີຈິດໃຈມຸ້ງຫວັງ
ເຮົາຊິເອົາພອນໃຫ້
ອົງພະເຫວດຈຶ່ງກ່າວອ້າງ
ຂໍ້ໜຶ່ງນັ້ນ ຂໍໃຫ້ກັບຕ່າວບ້ານ
ບອກນາດມະເຫສີ
ຊື່ນບານຫານກ້າ
ຊິທຳທານຝ່າພະບາດ
ຫວັງຊ້ອນເຜິ່ງຜິວ
ຊິທານທອດບໍ່ຂີ້ນຂັດ
ແລ້ວຢາດລົງຍັ້ງນ້ຳ
ມີພະໄທໃສແຈ້ງ
ນາງນ້ອຍເມກະຫຼາ
ເທວະໂລກທັງ 16
ຕະຫຼອດເຖິງໄຕຣແກ້ວ
ໂລກາໂກງໂລກ
ອະສູນພ້ອມພ່ຳມວນ
ພ້ອມພ່ຳເປັນພະຍານ
ມິ່ງມະທີຄາວນີ້
ກຸສົນນຳແນບຜ່ານ
ໃນອະນາຄົດຄັ້ງໜ້າ
ນັ້ນເທາະນາ ພະຄຸນເອີ່ຍ..
ຈຸງນາດນາງມະທີ
ຮອບວຽນສາມຄັ້ງ
ສາລາທອງຂອງພະເຫວດ
ເຮົານີ້ແມ່ນພະອິນ
ແລ້ວຢັ້ງຢູ່ເວຫາ
ແມ່ມະທີຄືນໃຫ້
ມະທີນາງແຈກຈ່າຍ
ແພງໄວ້ຢ່າຊິທານ
ອົງພະເຫວດປະສົງຫຍັງ
ສິ່ງໃດຈຶ່ງຂໍນ້ອມ
ສົມໃຈຄູ່ສູ່ຢ່າງ
ພອນແກ້ວແປດປະການ
ພະພໍ່ເຊີນໄປ

ຂໍໃຫ້ອົງສົມໄຊ
ສຸກສຳລານກະເສມສ້ານ
ຂໍ້ສອງ ຂໍໃຫ້ໃຈຜູ້ຂ້າ
ຍາມເມື່ອໄດ້ກັບຕ່າວບ້ານ
ເພື່ອເປັນທຸນພາຍຫຼັງ
ຂໍ້ສາມນັ້ນຂໍໃຫ້ຂ້າມີໃຈດ້ວຍ
ອະຊິນທຳຢ່າໄດ້ມາຜ່າມ້າງ
ຂໍ້ສີ່ນັ້ນຂໍໃຫ້ຄືດັ່ງນ້ຳ
ຍາມຂ້າຍໍມືນິບ
ຂໍ້ຫ້ານັ້ນ ເມື່ອຂ້າໄດ້ຢູ່ສ້າງ
ຢ່າມີໃຈໂມໂຫ
ຄົນທັ້ງຫຼາຍໃຫ້ມານ້ອມ
ຢ່າມີເຂີນຂາດຂໍ້
ຂໍ້ຫົກນັ້ນ ຂໍໃຫ້ບຸດຕາຂ້າ
ຂໍໃຫ້ໄດ້ສືບສ້າງ
ຂໍ້ເຈັດນັ້ນ ຍາມຂ້າກັບບຸຣີ
ຂໍໃຫ້ຝົນຫ່າແກ້ວ
ສິ່ງບໍ່ດີວ່ານັ້ນ
ຢ່າໄດ້ເຫຼືອຄົງຍັງ
ຂໍ້ແປດນັ້ນ ຍາມຂ້າດັບຊີວາໃຫ້
ຢ່າໄດ້ເນົາຄ້າງ
ເນົາຢູ່ຍອດແທ້ໆ
ທ່ານພະອິນຟັ່ງຟ້າວ
ຂໍໃຫ້ສັນດອນພະ
ແລ້ວຈຶ່ງແຍງຍັງຟ້າ
ໃຈຄະນິງຢູ່ບໍ່ແລ້ວ
ຄາວນີ້ອົງເອກໄທ້
ມີພະໄທຍິນດີ
ເກີດມີໃຈຜ່ອງແຜ້ວ
ສຸກກະເສມຣາບຣ່ືນ
ມາກ່າວເຊີນເມືອບ້ານ
ຄອງເມືອງຕຸ້ມໄພ່
ປະສົງຕັ້ງຕ່ຳທານ
ໄດ້ຈັບຈ່າຍທຳບຸນ
ຊາດຊິມາພາຍໜ້າ
ຝັນລະຍາຢ່າມີໃຈຄິດຕ່າງ
ມານຮ້າຍໝູ່ກາມ
ສັບພະສິ່ງເງິນທອງ
ທອດທານຢ່າມີຜ້ອງ
ຄອງຣາຊະສົມບັດ
ປະພຶດທຳກຳຮ້າຍ
ປາລະມີຫຸ້ມຖ່ີ
ອຸດົມດ້ວຍສຸຍາມ
ໂອຣົດສາທັງຄູ່
ເມືອງບ້ານຄ່ອຍຢູ່ດີ
ໃຫ້ຝົນຣວຍຮ່ຳແຜ່ນ
ລົງລ້າງຂີ້ຝຸ່ນໄຟ
ໃຫ້ປັດປ່າຍລົງທະເລ
ສິ່ງບໍ່ດີຢ່າເນົາຄ້າງ
ສູ່ດາວະດົງຟ້າ
ກາງດອນທຸກາຂະມອດ
ວິມານແກ້ວແສ່ວດາວ
ປະທານຣາດຊະອວຍພອນ
ດັ່ງມະໂນໃຈແມ້ງ
ດາວະດົງບ່ອນເຄີຍຢູ່
ແນວເຊື້ອມະນຸດຄົນ
ພະຍາໃຫຍ່ຊີໄພ
ຮັບເອົາພອນແກ້ວ
ມະໂນໃນໃສຊື່ນ
ມະໂນແມ້ງຊື່ນພະໄທ

ສັກກະບັນກະທາກຈິບທໍ່ນີ້ ໂຍຕິກາໄວ້ນີ້ກ່ອນ
ມີ 43 ຄາຖາຕອນ ກໍ່ທາກຈິບພຽງນີ້
ພະອວນຂ້າຊິອ່ວຍລົງ ແລ້ວລະນາ ສັດທາໂຍມ.

ຈົບ (ສັກກະບັນ ມີ 43 ພຣະຄາຖາ).

ກັນຕ໌ທີ່ 11 ມະຫາຣາຊ ມີ 69 ພຣະຄາຖາ

ອະນຸສັນທິ ຄະເຫຕະວາ
ເບື້ອງໜ້າຕໍ່ແຕ່ນີ້ ຊິທິເຫດສະໜາກອນ
ເຫວດສັນດອນຊາດິກ ຍົກນິທານຕາມເລື້ອງ
ກ່າວເຖິງສົນໄຊເຈົ້າ ເນົານອນມິດທະນົງ
ເລີຍເລົ່າຫຼັບມິດອ້ອຍຈອ້ຍ ຄາວນ້ອຍກະເຫຼົ້າຝັນ
ວ່າມີຊາຍຊາດຊັ້ນ ຖືດອກບົວບານ
ມາຖວາຍພຣະລາຊາ ກິ່ນຂະຈອນຫອມຟຸ້ງ
ຕື່ນຂຶ້ນມາເລີຍສະດຸ້ງ ຄະນິງຝັນແປກປະຫຼາດ
ຈັກຊິເປັນເຫດຮ້າຍ ປະການແທ້ສິ່ງໃດ
ຫາໂຫນມາທວຍໃຫ້ ວັນລຸນແມ່ວແມ່
ຍາດທີ່ຈາກພະອົງໄປ ຊິຄືນມາທ່ຽງແທ້ວັນນີ້ແນ່ນອນ
ກ່າວເຖິງພາມມະໂນເຖົ້າ ພາສອງສີຫຼົງປ່າ
ໄດ້ຊົບຫ້າຂວບມື້ ແຕ່ນອນຄ້າງທ່ຽວໄພ
ຕື່ນມື້ເຊົ້າກະຈົ່ງໄດ້ ຫຼົງເຂດຫົນທາງ
ເລີຍພາສອງກຸມມານ ດຸ່ງເດີນບໍ່ມີຢັ້ງ
ບໍ່ທັນນານກະເລີຍເຂົ້າ ປະເຊໄຊເມືອງໃຫຍ່
ຄາວນັ້ນກຸງສົນໄຊ ຫຼຽວເຫັນຫຼານອ່ອນນ້ອຍ ກະຈຳໄດ້ແນ່ນອນ
ພະຈົ່ງໃຊ້ ອຳໝາດໃຫຍ່ໃຫ້ຕິດຕາມ
ນຳເອົາພາມກັບຫຼານ ເຂົ້າສູ່ໂຮງຫໍກວ້າງ
ກິດທັງປວງຖາມສໍ້ ອີ່ຕາພາມຢາກຮູ້ເລື່ອງ
ສົນໄຊຮູ້ຊາບເລື່ອງ ພະໄທເສົ້າໝົ່ນໝອງ
ຜຸດສະດີຈົນວ່າຮ້ອງ ໃຫ້ຮໍ່ານຳຫຼານ ຍາຍເອີ່ຍ
ບໍລິວານເມືອງນອງ ກະຮໍ່າໄຮທັງໄຫ້
ໄດ້ເຫັນສອງຫຼານນ້ອຍ ພາມມະໂນດຶງແກ່

ຮອຍແສ້ຕີເລືອດອາບຍ້ອຍ ກະເລີຍໃຫ້ ໃສ່ແຕ່ກັນໂອ່ຍ....
ພໍຮູ້ເລື່ອງແລ້ວຈັ່ງຊັ້ນ ກະນຳໄຕ່ຫຼານຮັກ
ຈັກວ່າເງິນຫຼືທອງ ສິ່ງຂອງແນວຮ້ອຍ
ໃຫ້ແກ່ພາມມະໂນເຖົ້າ ເປັນລາງວັນຊິນໄຕ່
ໃຫ້ຊຸຍຊີກຈົນວ່າກ້ຽງ ໝົດຖວ້ນຄູ່ສູ່ແນວ
ພໍແຕ່ໄຕ່ຫຼານແລ້ວ ຊິລ້ຽງທ່ານພາມມະໂນ
ໂພຊະນະອາຫານ ຄູ່ສູ່ແນວກະຫາໃຫ້...

(ເດີນ) ວ່າຕໍ່ແຕ່ນັ້ນອັນວ່າພໍ່ຄົວຫຼວງອັນຕົກແຕ່ງໄວ້ດ້ວຍດີສັບພະສັນປີ້ງຈີ່ ໝົກໝອກໝີ່ ແລະ ແກງປາຕົ້ມຍຳແລະປາໝໍ້ກຸ້ງຍ້ຳແລະຍຳປີ ອັນເປັນເຄື່ອງຈີ່ແລະເຄື່ອງຈ້ຳ ມີທັງນ້ຳແຈ່ວໃສ່ຊິ້ນຕົ້ມແກງສົ້ມໃສ່ເຂົ້າເບືອໝາກເຂືອກັບປາແດກໝາກແປບກັບນ້ຳຜັກພາມເຖົ້າມັກພາໂລ,..ມັນກໍ່ຫຼຽວ ຫຼັງເຫັນທຸກພາກງວກໜ້າເຫັນທຸກພາຍ ພາມເຫັນຂອງກິນຫຼາຍມັນກໍ່ຫົວຢູ່ຍິຍຸ້ມຍິຍ້ຳມ... ຄວາມຢາກນ້ຳລາຍເຫີຍ ເຖົ້າຜີເປີຍຊ່າງຈວບ ເຖົ້າຮີບລວບຄວາກິນຜັກຕຳນິນເຕັມປາກຊິ້ນປາມາກເຫຼືອ ຫຼາຍ ພາມເຖົ້າມັກພາໂລ...ມັນກະເກັບຂາໝູໃສ່ລີໄລ່ ເກັບຂາໄກ່ໃສ່ລີລັນລີລັນ ຂາໝູມັນ ພາມແຫ່ງຄ້ຽວປາກພາມບ້ຽວຄຸງຫູຂີ່ມູກຍ້ອຍລືມເຊັດຂີ້ຕາທໍ່ເກັດເຕົ່າເໝັນຂີ້ແຮ້ປານ ນ້ຳເໜົ່າຜີຕາຍ...ຕໍ່ແຕ່ ນັ້ນມັນກໍ່ບາຍເອົາໝາກຫວ້າມາກິນໝົດສາມຂັນ ກິນໝາກ ທັນໝົດພ້ອມໝາກຂາມປ້ອມໝົດ ສາມກະເຊີງ ບໍ່ທໍ່ແຕ່ນັ້ນມັນກໍ່ກິນໝາກພ້າວໝົດ ເຈັດແຊງກິນແກງໝົດເຈັດໜໍ້ໆ ລະສາມຫູພາມກໍ່ຖູເຄື່ອງຄາວມາໃສ່ກໍ່ໝົດ ລະມັນຈຶ່ງ ຍໍເຄື່ອງຫວານມາຊົດກໍ່ຖ້ວນ ແລ້ວແລກິນນ້ຳແລ້ວແລ ບ້ວນປາກຫາຍໃຈ, ມືຂວາຊັກ ຂັນໝາກມາຄ້ຽວ ມືຊ້າຍໜ່ຽວເອົາໜ້ຽງມາອົມແລ້ວມັນລີເລືອຂຶ້ນ ເໜືອບັນທົມເທົ້າ ຊ້າຍ ຕໍ່ແຕ່ນັ້ນເຖົ້າກໍ່ຍ້າຍທ້ອງໄປມາທາງໃດກະບໍ່ໄດ້ ທ້ອງເຖົ້າໄຂ່...ໄຂ່ຄຸງຄາງ ເຖົ້າ ເຮຮຶນຫຶນຫວຍຢູ່ກາງພາສາດ ໃຈເຖົ້າຈັກຂາດ ກົ້ງເກືອກຢູ່ລີເລືອລີເລືອ... ມືຊ້າຍເຊັດ ນ້ຳຕາ ມືຂວາລູບທ້ອງນ້ອຍ ຮ້ອງໃຫ້ວ່າ ໂອຍ ເໝືອນດັ່ງເປັນພະຍາດປ່ວຍຕາມເຫິງ ຕາມນານນັ້ນແລະນາ.ᵎ

ຕໍ່ແຕ່ນັ້ນບັ້ນພະຍາບູລິມມະສີສິນໄຊຈຶ່ງອີດູພາມເຖົ້າ ເນົາເປສີ ທ່ານຈົ່ງສັ່ງວ່າ ດູຣາອຳໝາດ ທັງຫຼາຍ ສູທັງຫຼາຍຈົ່ງໄປຊອກຫາຢາມາຮັກສາພາມເນີ ໝໍຢາຫຼວງກະ ຈົ່ງມາພໍຮ້ອຍ ອັນວ່າໝໍຢາ ນ້ອຍກະຈົ່ງມາພໍພັນຕໍ່ແຕ່ນັ້ນເຂົາທັງຫຼາຍຈົ່ງໄປຊອກຫາຢາ ອັນໃດກະບໍ່ທັນເຂົາຈົ່ງໄປໄດ້ຮາກໄມ້ ຮາກຂໍ້ຫຼ້ຄ່າຂໍ້ມີມາຝົນໃສ່ໃຫ້ທ້ອງພາມແວບ ທ້ອງພາມກະບໍ່ແວບ ເຂົາຈຶ່ງເອົາຮາກໝາກແປບມາ ຝົນໃສ່ໃຫ້ທ້ອງພາມຊຸ ທ້ອງພາມ ກະບໍ່ຊຸ ເຂົາຈຶ່ງເອົາຢາປະຈຸມາຝົນໃສ່ໃຫ້ທ້ອງພາມດີ ທ້ອງພາມກະ ບໍ່ດີ ເຂົາຈຶ່ງໄປໄດ້

ຮາກຜັງຄີມາແຊ່ນ້ຳມາໃຫ້ພາມກິນໃຫ້ທ້ອງພາມລົງທ້ອງພາມກະບໍ່ລົງ ເຂົາຈຶ່ງໄປເອົາຢາຜົງມາໃຫ້ພາມກິນໃຫ້ທ້ອງພາມຫາຍທ້ອງພາມກະບໍ່ຫາຍ ໜ້ອຍໜຶ່ງບໍ່ພໍນານໄສ້ພາມກະແຕກປີ ບີພາມກະແຕກເປາະ ເຍາະພາມກະແຕກປ້ອງ ທ້ອງພາມກະແຕກໂປ້ງ..

ແຕກກະບໍ່ແຕກຊິ່ງດອກໂຍມເອີ່ຍ ແຕກຖືກໂຮງພະຍາເພສອງດ້ານສາມດ້ານ ແຕກໃສ່ຄົນ ຫ້ອລ້ານຕາຍ 3ຄົນ ແຕກໃສ່ໝໍນ້ຳມົນຕາຍເກົ້າ ແຕກໃສ່ຜູ້ເຖົ້າຕາຍຊາວ ແຕກໃສ່ຜູ້ສາວຕາຍຮ້ອຍ ແຕກໃສ່ເດັກນ້ອຍຕາຍພໍພັນ ຍັງບໍ່ຖືກແຕ່ຂ້ອຍຜູ້ນັ່ງເທດຢູ່ນີ້.

ວ່າໂອນໍ ພາມເອີ່ຍເຈົ້າມາກິນຫຼາຍລົ້ນ ຂົນລົງພຸງເກົ້າກະຕ່າ
ບັດມັນໄຂ່ຂຶ້ນແລ້ວ ຢາແກ້ກະບໍ່ມີ
ເຈົ້າຊິໄລເສຍຖີ້ມ ຫີນເດັກໄຟກັບຖົງຢ່າມສາບໍ
ກັບທັງຊາມອີ່ເລີ້ງ ກັບຮ້າງຮົ່ມເພ
ກັບທັງຂັນດູກໄມ້ ແລະຫອຍສັງເກົາຂີ້ກາກູພາມເອີ່ຍ
ກັບທັງຖວ້ຍປາກວາກ ຊິໄລຖີ້ມໃຫ້ແກ່ໃຜ ໂອຍ...
ຄົນທັງຫຼາຍເພິ່ນຕາຍ ຕາຍຍ້ອນເຈັບຍ້ອນໄຂ້
ຕາຍຍ້ອນຕົກກົກໄມ້ ຄວາຍຊົນແລະຟ້າຜ່າ
ບັດວ່າເຈົ້າອີ່ລຸງພາມນີ້ໜາ ຕາຍຍ້ອນແດກຮ່າໄດ້ຊາວບ້ານເພິ່ນຊ່າລື
ເຈົ້າມາກິນຄືຈັ່ງເທລົງຫ້ວຍ ແກ່ງຄວາຍໃສ່ໝາກຖົ່ວ
ລາບເລືອດງົວເບີດຕັ້ງຫ້າກະຊາມ ເປັນຫຍັງເຈົ້າຊິບໍ່ຕາຍ
ລາວມັກຫຼາຍກະແມ່ນໝໍ້າ ຕຳໝາກຫຸ່ງເພິ່ນຂໍເພຍ
ອີກອັນໜຶ່ງລາວມັກຫຼາຍກະແມ່ນນ້ຳຕົ້ມເພ້ຍ ເພິ່ນຍໍຖວ້ຍຊິດບໍ່ເຊົາ
ຜັກກະເດົາກັບລາບກ້ອຍ ຊອຍລົງເປັນເສັ້ນໆ
ໝົດຕັ້ງວ່າສາມກະຊາມອີ່ເລີ້ງ ໄປກິນຫຼົ້ນແຕ່ກ່ອນເພນ
ຊົ້ນພວງຕັບລາວກະຊອຍກິນຫຼົ້ນ ໝົດຂຽງຈົນໄດ້ເອົາໄປເຊື່ອງ
ສາມຊົບກົບຈົນວ່າກ້ຽງ ໄປກິນຫຼົ້ນແຕ່ຢູ່ໜອງ
ສອງໄຫທອງສະໂທສົ້ມ ຈັກວ່າຂົມຫຼືວ່າໂອ່
ແບ່ງໃຫ້ລາວເທື່ອລະສອງສາມໂອ ກະເລີຍບໍ່ຮອດທ້ອງ
ໄປກິນໄດ້ ແຕ່ບໍ່ລົງ....
ເອົາລະໂຈະໄວ້ນີ້ ພາມຕາຍບໍ່ມີຍາດ
ຂອງທຸກສົ້ນ ກະຂົນເຂົ້າສູ່ພະຄັງ
ບັດນີ້ຈັກກ່າວຜົ້ນ ພະຍາໃຫຍ່ສົນໄຊ

ຄິດຮອດບຸດສາຍໃຈ ຮ່ຳໄຮບໍ່ມີເວັ້ນ
ເຫັນຫຼານມາເຖິງບ້ານ ສົນໄຊກະໃຈອ່ອນ
ຢາກໃຫ້ເຫວດສັນດອນ ກັບຄືນມາສູ່ບ້ານໃຈສະທ້ານຫວັ່ນໄຫວ
ຕ່ຳຈາກນັ້ນກະຈົ່ງໄດ້ ເຕືອນປ່າວເສນາ
ທຳມັກຄາຫົນທາງຈາກສີພີພໍ້ ໄປເຖິງຄີລີກວ້າງວົງກົດຫົມະເວດ
ເພື່ອເຊີນພະເຫວດທ້າວ ຄືນເຂົ້າສູ່ມະຄອນ
ປະຊາຊົນຮີບຮ້ອນ ຢາກໄດ້ຫໍ່ອົງກະສັດ
ບໍ່ວ່າຍິງຫຼ ຊາຍ ກໍ່ຖາກຖາງທາງກວ້າງ
ບ່ອນໃດສູງກະຂຸດຖິ້ມ ບ່ອນໃດຫຼຸບຂຸດລົງຕ່ຳ
ແລ້ວບັດນີ້ກະຖົມຕື່ມ ໃຜກະຟ້າວລຸກຂຶ້ນທຳທ້າງຖາກຖະໜົນ
ຈັ່ງວ່າທຸກໆທ່ານ ບໍ່ໄດ້ວ່າຍິງຊາຍ
ຄົນກະຫຼາຍນັນເນື່ອງ ກະຊົ່ວແຊວແຖວບ້ານ
ມາທຳທາງບໍ່ມີຈ້າງ ພໍໃຈນ້ອຍໃຫຍ່
ຄາວນັ້ນກຸງສົນໄຊ ຕຽມໄພ່ພົນຮຽບຮ້ອຍ
ດອກເດີນເຂົ້າ ແຫ່ຂະບວນນໍ້.. ສັດທາໂຍມ...
ຈັ່ງວ່າຄົບຖີ່ຖ້ວນຍ້າຍຈາກສີພີ ໄດ້12ອະໂຂເພນີໝູ່ປະຊາຊາວເຊື້ອ
ບໍ່ວ່າເໜືອຫຼືໃຕ້ ຫຼາມໄຫລອະນັນເນກ
ອອກຈາກເຂດຂ່ວງຄຸ້ມ ກອງຄ້ອງຜ່ອງຕະໂພນ
ພໍປານໄມ້ລ່າວລົ້ມ ດິນຊິລົ້ມທະລາຍຫັກ
ເລາະຫົນທາງມີສາໂທ ແອ່ງໂອວ່າງຕັ້ງ
ຈັກທຸງຫຍັງປົວອ້ອນ ລຽນກັນເດຍລະດາດ
ປະດັບດ້ວຍກ້ວຍອ້ອຍ ດູລະຫ້ອຍງົດງາມ
ໄຫລໄປຄືຈັ່ງນ້ຳ ເພື່ອເຊີນຫໍ່ອົງກະສັດ
ພົນນິກອນເດີນກັນມາ ດອກມາກມາຍຫຼາຍລົ້ນ
ໂກລະຫົນຄຸງຟ້າ ດອກເວຫາອາກາດ
ລົດແລ່ນລ້ຳຍ ຄົນພ້ອມຢ່າງເດີນ
ຝູງໝູ່ກຸນສະໂລຊ້າງ ອະນັນນັບຂະຫຍັບຕີນ
ເອົາສຸລາມາລົນ ໃສ່ກະຖາງໂຖຕັ້ງ
ຈັກແມ່ນຫຍັງຄວັນກຸ້ມ ຕະລຸມບອນຄວັນໄຈ
ໄປຮັບອົງຊີໄພ ຫຍັງກະດັງວົ້ນໆພໍປານຟ້າລ່ວງບົນ

ຄົນກະຫຼາຍມາກລົ້ນ
ປະຊຸມນອງໄຫຼ
ຂ້າມໂຄກສູງລິ່ງເຫວຫ້ວຍ
ຍົນສະອອນມ່ວນແມ້ງ
ຕື່ນມື້ເຊົ້າ
ບໍ່ມີແນວຊິຂວາງຂັດ
ຄົນລຽງກັນເປັນແຖວຖ້ານ
ພວກຜູ້ເຖົ້າກະຜ່ອງຫ້າວ
ນັບຫຼາຍວັນຫຼາຍມື້
ເໝືອນໜຶ່ງໄດ້
ເປັນເວລາສາຍັນ
ຂະຫຍາຍແຖວວົງລ້ອມ
ທັງພັກພາມິດທະເນັ່ງ
ອັນວ່າເຂົ້າແລະນ້ຳ
ກຸ່ງສົ່ນໄຊກະເລີຍພັກ
ຄົນທັ່ງປວງນອນນິ້ງ
ຫອມສູ່ຄົນທະມາແມ້ງ
ເອົາລະໃນຕອນນີ້
69 ຄາຖາຖ້ວນໆ
ມົນອາຈາມເພິ່ນຂົ້ນຊ້ອນ
ສັກຂັດຕິນະຄອນກັນ
ອາວະສາມຕົວຂ້າ
ອາວະສາມສ່ຳນີ້
ແລ້ວລະນາ...

ຈົ່ນວ່າອັ່ງພະນາໄພ
ຫຼັ່ງໄຫລປານນ້ຳ
ຍົນສະອອນປ່າໄມ້ອ່ອນ
ແລງເຊົ້າໂລດບໍ່ເຫງົ້າ
ຍ້າຍທັບຂະບວນແຖວ ຍາຍເອີ່ຍ
ສະດວກດີພິກ້ຽງ
ສຸກສຳລານສາວບ່າວ
ທັງຝ້າວຢ້ານບໍ່ທັນ
ຈິ່ງເດີນເຖິງແຖວເຖື່ອນ
ເຖິງເຂດວົງກົດ
ເຈົ້າຄ່ຳແລງລິ່ງແລ້ວ
ດອກພັກພາມິດທະເນັ່ງ
ຄອຍບັນເລງເສບເຈົ້າທະຫານເຝົ້າຢູ່ຍາມ
ບໍ່ອຶດຢາກແນວໃດ
ດອກແທບອາສົມກວ້າງ
ບໍ່ມີຕົ່ງກວ້າກ່ອມ
ສະອອນໂອ້ ຊື່ນມະໂນ...
ຈົບກັນທິມະຫາລາດ
ຊິຍໍ່ມ້ວນອ່ວຍກອນ
ທິເທດສະໜາສຽງ
ດອກຕໍ່ໄປເດີທ່ານ
ອັຕຕະມາ ຜູ້ເທດແຫຼ
ອັນຕົວຂ້າຊິອ່ວຍລົ່ງ
ສັດທາໂຍມ....

ຈົບ ກັນມະຫາລາດ 69 ຄາຖາ

ภันต์ที่ 12 สักขัดติ มี 36 พระคาถา

อะสันสิ้นสั่งฟ้า
ເຫັນມັນມຸງມິວມິດ
ວາໂຍສໍ້ວ
ຫິມມະພານຍ່ານເຍີ້ນ
ສຸລີແສງສາດກ້ວ
ອາຍລະເຫີຍຄວັນຈາງ
ສັດໃນດິນແດນໃຕ້
ທຸກທີບສຽງສອດແສ້ວ
ອົງພະເຫວດຢູ່ຍັ້ງ
ພ້ອມມະທີຊົງຟິດ
ສອງເດືອນຖ້ວນ
ຍາກນຳຄວາມຢາກມີ້ມ
ຂ້າແຕ່ພະພີ່ທ້ານ
ປານນີ້ສອງແພງຮັກ
ຄົງຊິແຫຼວແຮງລ້າ
ຫຼືຊິຂ້າມປ່າກວ້າງ
ພີ່ເອີ່ຍ ກົນຄຳໃດກະຄິດພໍ້
ກ້ວຍທະນີອອງຂອງລູກມັກ
ຄັນແມ່ນສອງສີສ້ອຍ
ເຫັນລູກກິນອີ່ມທ້ອງ
ຊື່ວ່າເປັນທາດໃຊ້
ແຫ່ງບໍ່ເຄີຍທົນທຸກ
ກຳຫຍັງນໍສອງຫຼ້າ
ອອນຊອນເດມິ່ງແກ້ວ
ອົງລືສີກະຈິ່ງແຈ້ງ
ຄົນມີບຸນບໍ່ຮ່ອນທຸກ
ບັງເອີນເຫັນເຈີ້ພໍ
ສຸກທຸກດີຊົ່ວນັ້ນ
ເຊັ່ນຈັ່ງຂ້ອຍແລະເຈົ້າ
ຢ່າງເຂົ້າສູ່ລະດູໜາວ
ອີ່ມລະອອງອາຍກ້ວ
ສະຍົວກາຍຍິຍຽບ
ຍາມເຊົ້າໝອກສະຫຼົວ
ຍາມແກ່ງາຍເງີຍ
ນິລາດສູນເສຍສິ້ນ
ມະໂນໃສຖ້ວນທົ່ວ
ແຊວກ້ອງກ່ອມພະນັງ
ສະຖິດຢ່ານວິງກົດ
ກະດັ່ງດຽວໂດຍດ້ານ
ແຕ່ທ່ານອອຍພອຍພາກ
ເມືອງໃຕ້ໄຝ່ນິບພານ
ມະທີເອີ່ຍທູນຖະແຫຼງ
ລູກເຮົາຜູ້ທານແລ້ວ
ພາມມະນາໃຊ້ຊ່ວງ
ໄປໄດ້ໄປ່ລະນໍ
ຜົນໝາກເປັນກອງ
ໝາກເວ່ຫວານຕານອ້ອຍ
ຢູ່ນຳກັນຄືຊິຄ່ອງ
ກະພອຍໂອ້ອີ່ມກະໃຈ
ກົນບໍ່ອີ່ມກະຫ້ວໂຫຍ
ຊິຖືກທໍລະມານຊ້ຳ
ເປັນທາສາແຕ່ຍັງອ່ອນ
ຫາກກຳແລ້ວລູກແພງ
ເຈົ້າຢ່າບິ່ນທົນອຸກ ມະທີເອີ່ຍ
ຕະຫຼອດໄປໄກເຍີ້ນ
ທຳມະດາສັງຂານໂລກ
ມາພ້ອມໃຫ້ຄິດເອົາ
ແຕ່ຄາວກ່ອນກະມີສຸກ

ບັດນີ້ເຈົ້າຄວາມທຸກ
ຕົກວ່າງຈົນໄດ້ນອນດ້າວ
ລູກທັງຄູ່ເຂົ້າກະໄດ້
ຊ່າງເທາະນໍຢ່າຕ່ໍ້ມຊໍ້າ
ລູກສອງຄົນສໍ່າດວງຕາດວງໃຈ
ຕົກລົງທານໄປແລ້ວ
ຄິດໄປຫຼາຍແຫ່ງຊິເອົ້າ
ປົ່ງເສຍເຖິດນ້ອງເອີ້ຍ
ບໍາເພັນຊົນພາວະນາ
ຊ່ອຍສັ່ງຮອມຜະຫຼາຍູ້
ຄັນບໍ່ມຸດມອດມ້ວຍ
ນັ້ນລະນາ
ຈົບປົດບາດເຈົ້າຟ້າ
ໄດ້ຍິນສຽງອົກກະທົກ
ມອງລົງມາທາງໃຕ້
ອະລິລາດສັດຕຣູຊົນໍາມາເຂັ່ນຂ້າ
ມະທີຊົ້ບອກໂຈ້ງ
ຟັງແຕ່ສຽງດົນຕຣີ
ບຸນມາເຖິງແລ້ວບໍ່ອ້າຍ
ຈະຕຸລົງໝູ່ນັ້ນ
ວ່າແມ່ນຂອງເຈົ້າຟ້າ
ມາເຊີນເອົາກັບວັງ
ພະເຫວດໃຈບານແມ້ງ
ກະເລີຍລາຮັບຖ້າ
ກ່າວເຖິງພະພໍ່ທ້ານ
ຂົ້ນໄປທູນພະລືສີ
ພໍເມື່ອເຫັນກັນແລ້ວ
ແມ່ເຫັນສອງແກ່ນແກ້ວ
ນາງກໍ່ອຸ້ມເອົາແກ້ວ
ສອງບຸດຕາໂສມະນັດ
ບໍ່ອາດໜີໄກພົ້ນ
ເຖິງຄາວຢັ້ງບໍ່ຢູ
ມາໃຊ້ສ່ວງກໍາ
ທໍາໃຫ້ຜີເສຍຜົນ
ຮັກທໍ່ໃດບໍ່ຈັກຕ້ານ
ແມ່ນເສຍດາຍກໍ່ໄຮ້ເປົ່າ
ເຫງົ້າເສົ້າບໍ່ສວ່າງເບີຍ
ຫັກຄວາມໂສກໂສກາ
ຕໍ່ໄປໃຫ້ພຽງພ້ອມ
ຫ່າບຸນຊູລູກຊິອ່ວຍ
ກະຄົງໂຄ້ງອ່ວຍຫາ
ມະທີເອີ່ຍ...
ສູນທອນວາດລັດສີຊົນ
ສະນັ່ນດົງດັງກ້ອງ
ຕົກພະໄທໃຈຮູ້
ໃຫ້ໝົດຊົ່ນກົ່ນພະວົງ
ຄົງຊິບໍ່ເປັນຫຍັງ ດອກພີ່ເອີ່ຍ
ຫາກແມ່ນເມືອງເຮົາພຸ້ນ
ອັນຕະລາຍຢ່າໄດ້ຫວັ່ນ
ມາພ້ອມລະດາດາ
ສະເດັດພໍ່ສີພີເຮົາ ພຸ້ນແລ້ວ
ດັ່ງພະພອນທີ່ອອນໄວ້
ບັດເມຍແພງເວົ້າຕໍ່
ພະໄທກ້າເບີກບານ
ພ້ອມໄພ່ໄທຂຸນ
ພໍ່າມະທີນາງແກ້ວ
ພະໄທບານຊ່ານແຜ່
ມາແລ້ວກະແລ່ນເຖິງ
ໂລມລູບເກສາ
ດັ່ງພະມານດາໄທ້

ນ້ຳຕາໄຫຼລິນລ້ວງ ພະໄທດວງລົ້ນທີ່
ພາກັນວິສັນຍິສະຫຼົບລົງສູ່ພື້ນ ຄືນສະອື້ນຊື່ນຊົມ
ຫີກກະສັດທ່າວລົ້ມ ລົມປັ່ນວິສັນຍິ
ຊາວສີພີຜູ້ມາຮັບ ກະທ່າວຕາຍລົງສິ້ນ
ໃຜກະວິນວຽນລົ້ມ ເປັນລົມຢູ່ກາງປ່າ
ຊ້າງແລະມ້າ ບໍ່ກິນຫຍ້າງ່ວມເຫງົ້າ
ຮ້ອນຮອດພະພໍ່ເຈົ້າ ເທວະລາດອົນຕາ
ເທລົງມາຍັ້ງຝົນ ໃຫ້ໝູ່ຄືນໄດ້ຫາຍກຸ້ມ
ຊຸມໝູ່ຫີກກະສັດພ້ອມ ປະຊາກອນກະເລີຍຕື່ນ
ຝົກໂບກຂະລະພັດກະຈັດລົງສູ່ພື້ນ ກະເລີຍຟື້ນຊື່ນມະໂນ....
ຟັງສາກ່ອນຢ່າຟ້າວໂຍ້ ສົນໄຊໂຍພ້ອມໄພ່
ຊິເຊີນພະບາດທ້າວ ໃຫ້ຄືນເຂົ້າສູ່ນະຄອນ
ຟັງເອົາສາຢ່າຊິຮ້ອນ ກະຖາກ່ອນແຕ່ປາງຫຼັງ
ຢາກໃຫ້ຟັງສັກຂັດຕິບັ້ນ ເພິ່ນເຊີນສອງໄທ້
ຂ້ອຍເຄີຍຮຽນເອົາໄວ້ ຊິນຳໄຂຊື້ອ່ານ
ເຊີນພະອົງສູ່ບ້ານ ໃຫ້ຟັງຕ້ານອ່ານຖະແຫຼງ....

(ເດີນ) ສັນຊະໂຍ ພຣະບໍລົມສີສົນໄຊຕົນແກ່ນເຫງົ້າພຣະເຈົ້ອງເຈົ້າຈອມຈັກບຸນຊູ ເຊີຍຊັກຊອບ ຫີກທ້າວກອບກັບກັນ ເປັນທີ່ອັດສະຈັນສຽງເມືອງນັນເກື່ອນກ້ອງ ສຽງ ຕື່ນຕ້ອງຊ່ຳກົນ ຄົນເທພາໃຈ ສັ່ນສະທ້ານປັ່ນທັງປວງ ທັງເຂົາຫຼວງຊິເນລຸລາດ ໄຫວຫວັ່ນຫວາດທວຍສານ ທັງສັດຕະບໍລິພັນ ເຈັດຊັ້ນ ທຸກຂອບຂັ້ນປະລິດານ ທັງ ເຂົາຈັກກະວານໄກວກ້ວດແກວ່ງ ທົ່ວທຸກແຫ່ງຫົນໄປ **ວຸດຖິທາ ລັງ ປະວັດເຕນໂຕ ເທ ໂວ** ຄືວ່າຫຼານທັງສອງເລີດແລ້ວ ກັບແມ່ອອກແກ້ວສາຍສະໝອນ ກັບທັງເວດ ສັນ ດອນຕົນຜ່ານເຫງົ້າ ຈອມເຈືອງເຈົ້າສົນໄຊ ປັນຍາໄວຄິດໜໍ່ໆ ກັບທັງນາງນ້ອຍໜໍ່ຜຸດ ສະດີ ຕົນຜ່ານເຫງົ້າ ຈອມເຈືອງເຈົ້າສົນໄຊ ປັນຍາຄິດໜໍ່ໆ ກັບທັງນາງນ້ອຍໜໍ່ຜຸດສະ ດີ ຕົນເປັນວໍລະມະເທ ສີແກ່ນເຫງົ້າ ພຣະກະສັດເຈົ້າທັງຫົກຈຶ່ງມາຊຸມນຸມສົບພ່ຳພ້ອມ ໂອນອ່ອນນ້ອມເປັນອັນຫນຶ່ງອັນ ດຽວກັນ **ຍະທາ** ໃນກາລະຍາມໃດ **ຕະທາ** ໃນກາລະ ຍາມນັ້ນ ບັ້ນພະອົນທາທິລາດ ຕົນອົງອາດໃນ ຕາວະຕິງສາ **ຊັນຍະທາລາປະວະຊິຕະວາ** ກ່ຳໃຫ້ຍັ້ງຫ່າຝົນໂບກຂະລະພັດ ໃຫ້ຈັດຕົກລົງມາໃນຂົງເຂດ ປະເທດທີ່ສາລາ **ຕະມັດຖັ້ງ ປະກາເສນໂຕ ສັດຖາ ອາຫະ ພົກຂະເວ** ວ່າດູຣາພົກສຸສິງທັງຫຼາຍຍາມເມື່ອຫາຍ ໂສກເສົ້າ ແລະ ໂສກາ ສັບເພສັດຖາ ຊາວເມືອງມ່ວນທຸກໝູ່ ສະພູ່ພ້ອມໝູ່ມວນມາ

ທັງ ເສນາ ແລະ ມົນຕີ ທັງເສດຖີ ແລະ ທວຍຄ້າ ນາຍໜ້າພ້ອມພວກໝູ່ທະນູຫານຝຸງ ອາຈານ ແລະ ນັກປາດ ອຳມາດພ້ອມໝູ່ເມືອງນອງນັບວ່າໄດ້ຊົບສອງອັກໂຂເພນີ ເຂົາ ມີໃຈຍິນດີບໍ່ໂສກເສົ້າ ໃຫ້ ຮໍ່າເຮົ້າເຕັມດີງ ໃນໄພພິງຫົມມະວາດ ເນື້ອນົກຂາດໃຈຕາຍ ພູກສາວາງໃບຫຼົ່ນ ດອກໄມ້ໝົ່ນໝອງ ດວງໃບໄໝ້ຂວາງລົດສາມາດ ຮ້ອງໄຫ້ຂາດ ສະຫຍົບ ສົບກັບຕົນຈ່ອງໄຈ້ ເອົາບາດໃຫ້ທູນຜົມ ຍົນອາລົມລຳບາກຄິດຢາກດ້ວຍ ດອມທ້າວບາບ່າວບໍ່ເມືອເມືອງ ປະນົມມືເມືອງທັງຊົບນົ້ວ ຕັ້ງໄວ້ເໜືອ ຫວ່າງຄົ້ວຂາບ ໃຫວ້ສາທຸການ ຂ້ານ້ອຍຂໍວອນວານດອມສອງກຸມມານແກ່ນໄທ້ ຮ້ອງຮໍ່າໃຫ້ລືບອົກ ວອນ ເຊີນພູທອນແຈ່ມເຈົ້າ ກັບທັງນາງໜໍ່ເຫງົ້າມິ່ງມັດທີ ຕົນເປັນວໍລະມີເຫສີເລີດ ແລ້ວ ຈົ່ງໃຫ້ ເມືອຜ່ານແຜ້ວແກ້ວສີພີ ດ້ວຍສີສະຫວັດສະດີບໍ່ຫຼ້າ ໄຫວ້ພະຣິເວດສັນຕາ ເຈົ້າ ດ້ວຍບາດພຣະຄາຖາວ່າ **ຕະວັນ ຈະໂນຊິ ອິດສະໂຣ ຣາຊາ ຣັດຊັງ ກາເຣຖະ ໂນອຸ ໂພ** ດັ່ງນີ້ເປັນເຄົ້າ ຕັ້ງແຕ່ພຣະບາດເຈົ້າ ເຈຍລະຈາກໜີເມືອງມາ ອັດທາ ເຄືອງໃຈໄພ ເຫດວ່າພຣະນີ້ເມືອບໍ່ໄດ້ເປັນເຈົ້າແຜ່ນທະລິງ ເຊີນ ພຣະນີ້ເມືອເປັນປິ່ນຄຳປັກເກສາເກົ້າ ເຊີນພຣະນີ້ເມືອເປັນເຈົ້າເຈືອງຈອມພົນ ຜາບສາກົນແຫຼ່ງຫຼ້າ ແກ່ໄພ່ຟ້າໝູ່ແສນເມືອງ ຂໍໃຫ້ຍົກສັກເຮືອງແຜ່ນແຜ້ວ ເຊີນພຣະນີ້ເມືອນີ້ເມືອສະຖິດຜາສາດແກ້ວ ຮຸ່ງເຮືອງຣົມ ເຊີນພຣະນີ້ຄືນເມືອຊົມໝື່ນຫົກພັນນາງໜຸ່ມເຫງົ້າ ເຊີນພຣະນີ້ເມືອເປັນເຈົ້າແກ່ສີພີ **ອຸ ໂພ** ສອງກະສັດສີເອີ້ຍ ແກ່ນໄທ້ ບໍ່ຄວນພຣະຊິປະຊິລະນະຄອນໄວ້ໃຫ້ສີເສົ້າເກົ່າໝອງ ເຊີນພະນີ້ເມືອ ປຸນປອງຄອງເມືອງລ້ຽງໄພ່ຟ້າ ເຊີນທັງລູກໄພ້ຫຼ້ານາງແກ້ວມິ່ງມັດທີ ເຊີນພຣະນີ້ຄືນເມືອຫາຜຸດສະດີ ແມ່ແກ້ວ ກັບທັງອົງຜ່ານແຜ້ວພຣະຍາພໍ່ປີຕາ ເຊີນພຣະ ນີ້ຄືນເມືອລ້ຽງທາລະກາລູກນ້ອຍອ່ອນ ເຊີນ ທ່ອນທ້າວເມືອຕຸ້ມໄພ່ພົນ ເຊີນພຣະນີ້ຄືນ ເມືອຫ້ອງວັດໄຊຍົນຜາສາດ ເຊີນມະຫາລາດເຈົ້າດຽວນີ້ ຢ່າຊົນານ ຊ່າງຊິປະຊິລະນະ ຄອນໄວ້ທັງເມືອງໃຫ້ສ ນເປ່າ ສັງຊິລະເຜົ່າເຊື້ອທາງບ້ານໃຫ້ໝົ່ນໝອງ ເຊີນພຣະນີ້ຄືນ ຄອງສ້າງສະເຫວີຍປາງດັ່ງເກົ່າ ຂຶ້ນຊົງແທ່ນນັ່ງເກົ້າເປັນຄັ້ງເທື່ອສອງ ຕາມປະເພນີ ອາດຍາທຳດັ່ງເກົ່າ ເປັນທ້າວເລົ່າສອງທີ ສັກຂັດຕິຍະປັບພັງ ນິດຖິຕັງ...

36 ຄາຖາຖ້ວນ ຈົບຂະບວນບັ້ນແອ່ວ
ທູບທຽນທອງດອກໄມ້ແກ້ວ ຖວາຍແລ້ວຊິອ່ວຍລົງ.....

ຈົບ ກັນສັກຂັດຕິ ມີ36 ຄາຖາ.

ภันต์ที่ 13 ນะຄອນ ມີ 48 ພຣະຄາຖາ

(ເດີນແຕ້ມຜ້າ) ภับปาสีภัน ຈะ ຜ້າຜືນໜຶ່ງຊື່ວ່າภับปาสีใสพายเผิด เส้นฝ้ายเลิดด้วยใยบัว ເຊິ່ງຊາยหัวสิมแส่ว ເຫຼື້ອมเลิดแล้วด้วยไหมคำ ในมะຄอน ขวาง ทำเป็นผืนบางสะใบบ่า แผงพื้นค่าคำแสม **ถันตะอา** แวมชับเชื่อง ข้างย้าย เยื่องยั่เขิา ทำเป็นผืนบางเบิาผิวเผ่อง กะทำด้วยเส้นฝ้ายเลิเลิด ย่องยองผึงปัว ปุยโยงยียาบ ผ้าลายกาบพรึงพันที ปิดปีติแล้วติกแต่ง ซ่าขาวแซ่งเซันขาว เป็นเส้นแลบเลิงยาวไหย่ยอด สาวเส้นสอดสิมกัน ใส่ฟุมขัน แล้วฝักต่ำพรม ม้อมพ่ำอันถืม ทำเป็นผืนดีสุดละหมาด ผิลาดด้วยลายดอกและ ดวงเถือ จูมจิเจือจาวจ่ำ ก่ำเป็นซุ่เหื้อมลายอัน สับพะสันมิทุกสิ่ง ตาหนึ่งรูบม้า มิ่งเงียงอม ตาหนึ่งรูบม้าย่างว่องไว ตาหนึ่งรูบลิดไฟไหวกึงหูายหูากตาหนึ่งรูบดูหูากด้วย ถืมย่างทางติน ย้อมลายขืมก้รึงอ่อมในผ้าผ่อมผืมดิงๆตาหนึ่งรูบลาละถื ตาหนึ่ง รูบบໍลิสุดด้วยรูบนากต๊อหนึ่งรูบเบิ่งหูายหูากด้วยต๊อมอม สังรอมๆ กะต่าย เต้น ตาหนึ่งรูบกะต่ายหูื้นหัวกะโดง ตาหนึ่งรูบเรือคำคะโยงแยกแล่น ตาหนึ่ง รูบแก้วแก่นหึงหอง ตาหนึ่งรูบแม่น้ำมะหาสะหมุดติฟองยู่ลิลอด ตาหนึ่งรูบปา ละสี ซิงเผือกโตถือข้าง ตาหนึ่งรูบแม่ร้างกอดขายนอน มือขอนคำ และ จูบแก้ม ตาหนึ่งรูบผู้สาวยุ้มแย้มๆ เป็นระรื่ต่ำขายกิ ตาหนึ่งรูบผู้ยิงติอีกร่ำไห้หาชู้ ตา หนึ่งผู้ยิงยูงผู้ม่ายยูง เมยตาหนึ่งรูบเจยบินวินเจิดแอ่น ตาหนึ่งรูบสาวนาง แยงแอ่นแล้วและหวิผืม มิบายนิมและลูบไล่ ตาหนึ่งรูบผู้สาวถักดอกไม้และ มายา ตาหนึ่งรูบสะกุนาบินเหินปีก กำละวิกพ้อมหมู่สังกา ตาหนึ่งรูบมะยุลาแอ่น แอกแอ้น ตาหนึ่งรูบท้าวแอ่นมิชิน ตาหนึ่งนิกน้อยจับยู่แซมซอนๆ กำละวิก จอนแกมกึ่ง ตาหนึ่งรูบม้ามิ่งอาชาไน สิลิลาลรูบไล่ รูบช้างเต้นไต่ตามของสะ เผิายองยิอละยาด ตาหนึ่งรูบชิมพูละนาดน้อยส้อยสุละผิ จำปิปากันนิกาก้าน เกด...ลื...ถ่านทิเหื่องก่ำเหื่องดิดูหูายหูากถ่านทิขาว ก่ำขาวดิดูสะอาด ถ่านที่ แดงดิดั่งน้ำค้าง เหื้อมไหลหั่งลังสิ ถ่านที่ขรึวก่ำขรึวดิยิยับๆ ถือดั่งปีกแมงคับ เหื้อมยิยับยิยอง เหมือน ดั่งผุดสะบาบานแย้มๆ..

(แหฺ่) เอ๊าละโจะไว้นี้ ນะຄอนภันขั้นต่ำ
พะชิงทำธับดอกไม้ ปะชาไท้ยื่นถวาย
ลาชิกขาจากค้าย ลัดสิเผดสะหูะชิน
ธับกาสาผืมแผง พะแม่แจงจัดต้อม
ม้อมบังออนมะทิหูา ลาชิกขาชิโค้งต่าว

ຊາວປະຊາພີ່ນ້ອງ
ຟັງສຽງແຕກຕົ້ມໆ
ໃຜກະຮອງໆໃສ
ພາກັນຮອນແຮມຢັ້ງ
ອົງຄະນົງມ່ວນຫ້າວ
ອົງພະເຫວດກະຈົ່ງໄດ້
ຂໍໃຫ້ສຳລານລົມ
ມາໄລຍ້ອຍ
ຊຸມພົກສາຊາດເຊື້ອ
ຮຽມຊິລາຄືນຫ້ອງ
ໃຫ້ຄອຍຢູ່ທ່ຽງໝັ້ນ
ໃຫ້ຄ່ອຍຢູ່ດີເດີ ມະຫົງສາເຊື້ອ
ທັງກະແຕກະຮອກນ້ອຍ
ເສຍດາຍເດ ອາສົມນ້ອຍ
ຊິຫ່າງເຫັນບໍ່ມີວັນ
ເຄີຍໄດ້ສົງສະໜານລ້າງ
ບັດຫ່ານີ້
ຈັ່ງວ່າບຸບເພສ້າງ
ໄດ້ເຜິ່ງພາພຽງເລັກນ້ອຍ
ບັດນີ້ ຕົກລາຍຫຍໍ້
ພະເຫວດກັບສູ່ເບື້ອງ
ຄອງນະຄອນອີກຄັ້ງ
ຜອງປະຊາບໍ່ມີທຸກ
ສົມບູນດ້ວຍ
ທຸກທົ່ວຖ້ວນ
ນະຄອນກັນກະສ່ວນຊື້ນ
ເຫວດສັນດອນຄອງເມືອງ
ນິຖິຕັ້ງບ່ອນຈອມຟ້າ
120ວັດສາກາມອາວະສານສູ່ຟ້າ
ພັນຄາຖາຖ້ວນໆ
ໄດ້ໂຮຮ້ອງຊື່ນຊົມ
ສົມເຈດຕະນາປອງ
ໄດ້ທ່ຽວໄພເລີງລ້າ
ໃນອະນົງເດືອນໜຶ່ງ
ໄດ້ຊົມດ້າວຊື່ນກະໃຈ
ເອີ້ນສັງພຸມສະຖານ
ຢູ່ສະຖານສະຖຽນຢັ້ງ
ແຂວນຍອຍເຄຍລະດາດ
ໃຫ້ຄົງໝັ້ນໝຶ່ນວັດສາ
ປະເຊໄຊແກ້ວກູ່ ກ່ອນເດີ
ດົກດົ້ວຊື່ນສະເໝີ
ກວາງຝານແລະເມັຍມັ່ງ
ຮຽມຊິຮ້າງຮ່າງຫາຍ
ທີ່ເຄີຍນັ່ງບຳເພັນ
ໄດ້ອ່ວຍຫັນຄືນໂຄ້ງ
ໃນວັງສະໂບກ
ຊົມາຮ້າງຫ່າງເຫ
ສັນມາດ້ຳມໜ່ອຍ
ຊິລາຮ້າງກ່ອນລະເດີ...
ຊົຍໍກອນຈ້ອນເລື່ອງ
ເມືອງເຄົ້າເກົ່າຫຼັງ
ເປັນເທື່ອທີສອງ
ຢູ່ສຸກກະເສີມສ້າງ
ໂພຊະນັງນ້ຳທ່າ
ເລີງລ້ວນມ່ວນຍິນ
48 ພຣະຄາຖາ
ລາດຊະທຳເຕັມຕັ້ງ
ມໍລະນາຜົ້ນຜ່ານ
ກ່ຳຈົບຖ້ວນສູ່ກະບວນ
ໃນສ່ວນຊົບສາມກັນ

ພັນລະນາມາຄົບ
ອົງມຸນີນຈອມຝ້າ
ຊາດົກຕັດປະກາດແຈ້ງ
ພິກຂາເອ ດູກ່ອນທ່ານ
ແຕ່ລະອົງນັ້ນຄືໃຜ
ກຸງສີນໄຊຄາວກ໌
ພະບິດາເຮົາສູ່ມ໊ື
ຜຸດສະດີຍອດອົ້ມ
ຄືພະສີລິມາຍາ
ມະຫິນາງນົງແກ້ວ
ຄືພິມພາມິ່ງແກ້ວ
ຊາລີລາດປາດເປ້ືອງ
ສ່ວນກັນຫາເປັນອຸບົນວັນນາ
ຊູຍຊະໂກພາມຮ້າຍ
ເທວະທັດຜູ້ກັ່ນແກ້ງ
ອາມິດຕາຊາດນັ້ນ
ຫາກແມ່ນນາງກິນຈາ
ຄົນທັງຜອງຄາວກ໌
ເຄີຍໄດ້ທານກ່ຳຮ່ວມ
ເຫວດສັນດອນເຈົ້າຟ້າ
ກະຄືເຮົາຕະຖາຄົດ
ຈັບສຳເນົາພໍຮູ້
ປະລິວັດຊາດໄວ້
ນັ້ນລະນາ

ສູ່ປະການອະສານຊົ້ນ
ພະສັດຖາເທດໂປດ
ປະຊຸມເລ່ືອງກ່ອນການ
ມວນໝູ່ພິກສຸສິງ
ບາດຊາດເຮົາດຽວນ້ ີ
ປົຕຸລິງຜູ້ໂລກຊ່າ
ຄືທ່ານປະເສີດສົມ
ການກ່ອນພະຊົນນ ີ
ຜູ້ຍອດຍິງອິງອ້າງ
ແວວມະນີສີສະຫງ່າ
ຜູ້ກາຍກ້ຽງພໍ່າພຽງ
ໄດ້ແກ່ພະລາຫຸນ
ສະຫງ່າສີງາມໂກ້
ກັບກາຍເປັນຄູ່ແຂ່ງ
ກຳຊິກ້ຽວກ່ຽວພັນ
ກັບເກີດອຸບັດມາ
ບໍ່ລະອາຍເວນຕ້ອງ
ກັບຄືນແມ່ນພວກທ່ານ
ກຸສົນສ້າງຮ່ວມມາ
ຜູ້ເຂົ້າປ່າວົງກົດ
ເທດສະໜາຈາເວົ້າ
ບູລົມຄືເທດປະກາດ
ພຽງໜ້ອຍບໍ່ວ່າຫຼາຍ
ສັດທາໂຍມ.....

ຈົບ ກັນນະຄອນ 48 ພະຄາຖາ

ลาຫໍທັມມາດ

ບັດນີ້ ພໍແຕ່ຈົບລົງແລ້ວ
ຊຸມໝູ່ນັກປຣາດເຈົ້າ
ດ້ວຍຈິດໃຈປ່ຽມລົ້ນ
ດ້ວຍຜົນບຸນມາຟັງທັມ
ສັບພັນຍູເຍືອງໃຕ້
ໄປຕາມທາງພຣະເຈົ້າຊີ້
ມີເສັ້ນໂງເສັ້ນໂຄ້ງ
ມາຕັດຮອນລົງໃນ
ຖືເອົາທານະໄມໃຫ້
ບໍ່ໄດ້ຂາດແບບເບື້ອງ
ຈິດໃຈສູງສົ່ງພົ້ນ
ນັບແຕ່ທານມາເຄນ
ທານະຂັນພັດທານມ້າ
ຣາຊະຣິດທີ່ເຄີຍຂີ່
ເຂົ້າໄປຢູ່ປ່າໄມ້
ບຳເພັນຕົນເປັນບັນພິດ
ເພື່ອແລກຍານດວງແກ້ວ
ກ່ຳທານສາ
ນາງມັດທິນາດນ້ອຍ
ໃຈພຣະເຫວດຕ່ຳຕ້ອງ
ປາຣະມີເປັນຜົນ
ຄຳແຄງໃຈເຄືອງແຄ້ນ
ເສນາເມົານັ່ງນ້ອມ
ເລື່ອງອາດີດທີ່ຜ່ານນັ້ນ
ໃຜກ່ຳຊົມເຊີຍສຽງ
ເສນານອງເມືອງລົ້ນ
ສະໜຸກແຕ່ພຣະເຫວດແຕ່ງ
ແສນສະໜຸກມາກລົ້ນ
ພຣະອົງປິວເປື້ອງປັດ
ເທສະໜາມະຫາຊາດ
ໄດ້ຟັງແຈ້ງຄູ່ສູ່ຄົນ
ເຕັມແຕ່ການກຸສົນ
ຮ່ຳຄະນຶງເຫັນຮູ້
ໄຟປັນຍາແຈ້ງສະຫວ່າງ
ເພິ່ນລົງໃຊ້ຊາດພຣະອົງ
ເສັ້ນຊີ ຫຼື ທາງລັດ
ພຣະເຫວດສັນດອນເຈົ້າ
ໃນທະສະຊິບຊາດ
ຄອງເຄົ້າຊາດພຣະອົງ
ລົ້ນຍິ່ງເຫຼືອປະມານ
ຢູ່ເມືອງປາງນັ້ນ
ອາຊະໄນບໍ່ໄດ້ຖີ່
ກ່ຳຫາກທານຕະຫຼອດກ້ຽງໃຫ້ສົມດ້ຳມດັ່ງໃຈ
ເຂົາໃຫຍ່ວົງກົດ
ກ່ຳບໍ່ມີຢຸດຢັ້ງ
ແນວ່າບຸດຕາຫຼ້າ
ກ້ຽງອ່ອຍຫ່ອຍ
ກ່ຳທານກ້ຽງໂລດບໍ່ຍັ້ງ
ຍິ້ງໃຫຍ່ໃນທານ
ຄັກຈິງຈະແຈ້ງ
ກ່ຳຫາຍໄປແປນເປົ່າ
ກ່ຳຫອມຫຸ້ມຮໍ່ກັນ
ຍົກຍື່ນຂໍອະໄພ
ຊ່າລືດັງກ້ອງ
ໃຈກຸສົນໄດ້ບົແບ່ງ
ເບີກພຣະໄທຄັ້ງນັ້ນປັນໃຫ້ຄູ່ສູ່ຄົນ
ຄົນທີ່ຂາດອຶດຫິວ
ແຈກໄປໝົດກ້ຽງ

ຟັງສຽງຍໍມີນ້ອມ
ອັນວ່າພາສາດກວ້າງ
ຄົນຢູ່ເໜືອແລະໃຕ້
ມາເພິ່ງບຸນສົມພານ
ສາມັກຄີໂຮມເຕົ້າ
ແສນຮັກຫອມຮໍ່ຫຸ້ມ
ເອີ ! ຖານະດີເລີດລົ້ນ
ໝາຍວ່າສັງຄົມເຮົາ
ຢ່າລືມໄລທາງເລື້ອງ
ເກີດມາໃນໂລກນີ້
ຂໍໂຈະໄວ້ທໍ່ນັ້ນ
ຂໍສັ່ງວອນພຽງ
ທ່ານຜູ້ມີຄວາມຮູ້
ໂຈະໄວ້ພຽງເທົ່ານີ້ ໂອ້ຍ...
ເອີ ! ບັດນີ້ຊິຂໍໄລລາຮ້າງ
ໄປຄົນດຽວດອກເຈົ້າ
ທັງອາຈານຜູ້ນັ່ງຖ້າ
ດ້ວຍພຣະຄຸນທີ່ສູງສົກ
ຂໍລາທັງຍາພໍ່ເຖົ້າ
ຂ້ານ້ອຍຂໍກ່າວຕ້ານ
ຂໍລາທັມມາດກວ້າງ
ຂໍລາອາຣາມຫລວງ
ຊອງພູພັນອັນເຄີຍຄ້ຽວ
ອົງພຣະພຸດທະຮູບເຈົ້າ
ລາທັງອາສະໜາພ້ອມ
ລາທັງກອງ ແລະ ຄ້ອງ
ຖືຂັນໂອພຸ້ນນີ້
ການເວລາມາເຖິງ
ຢ່າໄດ້ມີໝອງເສົ້າ
ອັນວ່າໂຣກພະຍາດຮ້າຍ
ສາທຸການບໍ່ໄດ້ຂາດ
ງາມລະຫ້ອຍສ່ອງໃສ
ໄຫຼຫຼັ່ງມາໂຮມ
ພຣະພໍ່ເມືອງເປັນເຈົ້າ
ເປັນກຳລັງແໜ້ນແກ່ນ
ພຣະອົງເຈົ້າຄູ່ສູ່ຄົນ
ປະເສີດຍິ່ງເຫຼືອຫຼາຍ
ຊິຢູ່ກັນໄປໄດ້
ທານະໄມອັນປະເສີດ
ອາໃສຊົ່ນເພິ່ງກັນ
ເລື້ອງພຣະເຫວດສັນດອນ
ສັງເຂບເອົາເທົ່ານີ້
ວິຈານເອົາຖ້ວນຖີ່
ສາແລ້ວກ່ອນລະໂຍມ ເອີ່ຍ
ໄປຕາມທາງເສັ້ນປ່ຽວໆ
ຕິວຂ້ອຍຊິສັ່ງລາ
ເປັນປະມຸກໃນປາງບຸນ
ໄດ້ຮັກຊຸມຊິດເຕົ້າ
ພຣະເຖຣານຸເຖຣະທຸກໆທ່ານ
ລາແລ້ວຄູ່ສູ່ອົງ
ບ່ອນເຄີຍນັ່ງເທສນາ
ຂວ່າງສະໜາມທີ່ງານຢ້ອງ
ຢາອາແດງທີ່ເຄີຍສູບ
ທີ່ເຄີຍໄຫວ້ນ້ອມສັ່ງລາ
ຕຽງຕູ້ຜ້າຫົ່ມນວມ
ທີ່ໂຍມເຈົ້າໄດ້ລັ່ນຕີ
ສັດທາແຜ່ແຖມສົມພານ
ຊິສັ່ງລາພຽງນີ້
ໃຫ້ຫາຍເປົາບາງໂສກ
ຢ່າມາໃກ້ບຽດບຽນ

ອັນໜຶ່ງຊຸມຜູ້ເຖົ້າ
ບໍ່ວ່າຍິງຫຼືຊາຍ
ຂໍໃຫ້ສົມພານເຈົ້າ
ລາບຍົດໄຊໂຊກພ້ອມ
ເອີ ! ໄດ້ເວລາດີແລ້ວ
ຂໍສິ້ນສຸດເລື່ອງພຣະທັມ
ປີໜ້າຈຶ່ງຄ່ອຍຟັງ

ແລະນ້ອຍໃຫຍ່ທັງຫຼາຍ
ກໍ່ດັ່ງດຽວໂດຍດ້ານ
ອານິສົງຍູ້ສົ່ງ
ໃຫ້ຫອມຕຸ້ມແດ່ທຸກຄົນ
ອັດສະດົງໃກ້ຊິຄ່ຳ
ຊິລາລົງພຽງເທົ່ານີ້
ສັດທາໂຍມ...ເອີຍ.

(ໝົດ).

ລາຫໍທັມມາດອີກແບບໜຶ່ງ

ບັດນີ້ ພໍແຕ່ຈົບລົງແລ້ວ
ເທດມາແຕ່ເຊົ້າໆ
ມີຈິດໃຈຕໍ່ຕັ້ງ
ມາຮ່ວມກັນຫຼາຍຄົນ
ບໍ່ໄດ້ຄວງຄຸຍຫລິ້ນ
ຟັງບ່ອນເລິກບ່ອນຕື້ນ
ມີຂັນໂອທຽນໄຕ້
ດ້ວຍຈິດໃຈມາດມຸ້ງ
ຈິດໃຈຈຳເອົາໄວ້
ແນວເປັນໂທດລະຖິ້ມ
ເຊັ່ນຕາພຣາມຂີ້ຮ້າຍ
ເລື່ອງຕັນຫາພາໂລ
ບຸນສົມພານບໍ່ເຄີຍສ້າງ
ກາຍເປັນເຫດຊົ່ວຊ້ຳ
ໄດ້ເມຍນ້ອຍໜີບໍ່ພົ້ນ
ນາງອະມິດຕະຕາເປັນຄົນ
16 ປີ ຍັງຈ້ອຍໆ
ຕາເລີຍມິດເລີຍມິວ
ແຕ່ລະມື້ຊອກຄົ້ນ
ກາຍເປັນຄົນພາໂລ

ສັນດອນພຣະຍາເຫວດ
ຂະໂຍມເຈົ້າໄດ້ນັ່ງຟັງ
ນັ້ນຄັກແນ່ບໍ່ແປຜັນ
ຈົນອັ່ງອໍສາລາກວ້າງ
ສົນທະນາໄປທາງອື່ນ
ໃນເລື້ອງໜໍ່ພຸດໂທ
ຈົນສາລາເຮືອງຮຸ່ງ
ໃນແກ້ວໜ່ອຍພຣະທັມ
ແນວດີມີປະໂຫຍດ
ຢ່າຈຳໄວ້ໃສ່ໃຈ
ມີອາຍຸ 60 ປີ
ໂລດບໍ່ຄືຊາວບ້ານ
ມີວເມົາແຕ່ກິເລສ
ມາເຂົ້າໃສ່ຕົນ
ໃນຮ່ວງອະກຸສົລ
ໜຸ່ມສາວຄະນອງນ້ອຍ
ນາງສຳອອຍແຕ່ເຖົ້າຊົ່ວ
ບໍ່ຄິດນຳເລື່ອງສ້າງບຸນໄວ້ໃສ່ຕົນ
ສ້າງກິເລສຕັນຫາ
ທ່ຽວຂໍໄທບ້ານ

ວຽກບ່ຽງນການບ່ສ້າງ
ສຸດທ້າຍເຂົ້າສູ່ຫ້ອງ
ຂໍໃຫ້ຄິດກ່າວຢ້ອນ
ໃຫ້ປະຈັກໃນຫູ
ໃຫ້ຄິດເອົາທາງເບື້ອງ
ການກຸສິລເປັນເຫດ
ນາງມັດທີນັ້ນເປັນທີ່ອາດເອ້
ມີຈັນຍາຂອງແມ່ຍິງ
ຮັກແພງຜິວຂວັນແກ້ວ
ປາຣະມີຈິ່ງງຳເຫຼືອມ
ໃຜກໍ່ຮັກຮໍ່ໜ້າ
ເບິ່ງບ່ອນໃດສວຍງາມ
ຄຳປາກເໝືອນສັງກາແກ້ວ
ຈັ່ງເປັນຕາອອນຊອນ
ອັນໜຶ່ງອີກໃຫ້ຄົ້ນ
ທັງບຸດຕາ
ຄືວ່າທ້າວຊາລີ
ສັງມາດີກະດ໋ໍ
ກະຕັນຍູທັງກະຕະເວທີນັ້ນ
ໄປຕາມຄອງບິດາ
ບ່ໄດ້ຖຽງຄວາມເວົ້າ
ເຈົ້າອີ່ພໍ່ທູນຫົວ
ເອ໋ ! ພໍແຕ່ສົມຄວນແລ້ວ
ຊິໄດ້ພາກຜີ່ນ້ອງ
ດ້ວຍບຸນທີ່ເລີດລົ້ນ
ນຳພາການທຳບຸນ
ດ້ວຍພຣະປາຣະມີກັ້ງ
ເປັນດັ່ງໂພແຜ່ນກວ້າງ
ຂໍໃຫ້ທ່ານປ່ຽມລົ້ນ
ດ້ວຍຜົນບຸນທີ່ທຳມາ

ວິຖີທາງບໍ່ແຈ້ງສ່ອງ
ອະບາຍພຸ້ນວ່າແນ່ນອນ
ເອົາແຕ່ບ່ອນມັນຄັກ
ຄິດເບິ່ງເອົາເດີເຈົ້າ
ອົງພຸດໂທພຣະຍາເຫວດ
ສ້າງຄວາມດີທ້ອນໄວ້ໃຈກວ້າງກວ່າທະເລ
ເປັນເລື່ອງເຫລ່ຳຂອງສະຕຣີ
ຄັກຈິ່ງຈະແຈ້ງ
ທັງບຸດຕິບຸດຕາບໍ່ມີໄດ້ສູນເສື່ອມ
ອານິສົງສິ່ງໃຫ້ບຸນກວ້າງຕໍ່ມາ
ຈາຮອດຄະນິ່ງເຖິງ
ຢູ່ທຸກຍາມບໍ່ມີເອື້ອນ
ແນວໃດຫວານອ່ອນໆ
ແມ່ມັດທີຢາດແຕ່ຟ້າລົງໃຕ້ມະນຸດຄົນ
ໃນເລື່ອງຂອງບຸດຕິ
ພ່ຳກັນສອງນ້ອຍ
ນາງກັນຫາສຽງຈ້ອຍໆ ຄຳຫວານ ໆ ຟັງພໍ່
ບຸດຕາແກ້ວໜໍ່ພຣະອົງ
ສິ່ງຜົນຕໍ່ພໍ່ແມ່ທັງສອງ
ສັ່ງສອນເອົາໄວ້
ເລວຊາມທາງຊົ່ວ
ສັງມາດີກະດ໋ໍບຸນເຈົ້າພໍ່ພຣະອົງ
ຊິຂໍໄລລາຈາກ
ຂະໂຍມເຈົ້າຄູ່ສູ່ຄົນ
ອາຈານໃຫຍ່ອົງປະທານ
ຢູ່ໃນວັນນີ້
ເນືອງນອງຊ້ອຍຊື່ນ
ປວງຂ້າໄດ້ເພິ່ງເງົາ
ເຕັມແຕ່ການກຸສົນ
ໃຫ້ຊ່ວຍຊູປົກປ້ອງ

ລາກ່ອນເດີ້ສຽງຄ້ອງ
ສຽງກອງດັງສະນັ່ນ
ລາທັງມ້ຽງພູພັນ
ລາທັງອຸແອ່ງນ້ຳກະບອຍຊ້ຳພ່ອງໂອ
ລາຂັນໂທທັງຖ້ວຍ
ລາທັງຊວຍໃສ່ເງິນກີບ
ລາທັງດວງປະທີບໄຕ້
ໄຟແຈ້ງສ່ອງໃສ
ຂໍລາໄປທາງກ້ຳ
ໝອນປັກຄຳທັງສາດເສື່ອ
ລາໝາກເຂືອໝາກແຄ້ງ
ທີ່ເຄີຍແກ້ມປົ່ນປາ
ລາທັງອາພອນຜ້າ
ແພວາທີ່ໄດ້ຫົ່ມ
ລາເຂົ້າໝົ່ມເຂົ້າຕົ້ມ
ຂອງສົ້ມ ແລະ ເຄື່ອງຫວານ
ລາພາພານພາເຂົ້າ
ສາລາງາມສີສະງ່າ
ຂໍໃຫ້ໃສ່ສ່ອງແຈ້ງ
ຄືດ້ານດັ່ງດາວ
ກຸຕິຍາວກຸຕິນ້ອຍ
ລາທັງຊົມໃສ່ຍອດໂງ່
ອົງພຸດໂທຮູບພຣະເຈົ້າ
ຢ່າມີເສົ້າເກົ່າສີ
ເອີ້ ! ກ່ອນຊີລາຈາກນັ້ນ
ຂໍລ້າງຊ່ວຍຜັດສີ
ຜົ້ງທຸລີມືອໝອງ
ສູ່ອັນໃຫ້ໃສແຈ້ງ
ສັ່ງມາເຫຼືອແຮງຂ້າ
ອາດຕະມາຜູ້ເທດແຫຼ່
ຄັນສັດທາໂຍມແມ່
ບໍ່ຊ່ວຍລ້າງແທ້ໆຊິໄປກ້ຽງບ່ອນຈັ່ງໃດ
ເງິນບາດໄທບໍ່ເຄີຍເວົ້າ
ເງິນກີບລາວບໍ່ເຄີຍວ່າ
ເງິນດອນລ່ານ້ຳໄດ້
ໂອ່ຍພໍໃຫ້ຄ່າຟອຍ
ໄຍແມງມຸມຢາດຍ້ອຍ
ຫຍາບຢ່າງເປັນຍວງໄຍ
ຜັດທາງໃນມັນສີດຳ
ກ່ຳມືອໃຫ້ມັນແຈ້ງ
ແຍງເງົ່າໄດ້
ໃສດີພໍປານແວ່ນ
ອາດຊິບໍ່ຍາກແຄ້ນ
ດຳຄືໝຶ້ກະແມ່ນໃສ
ອັນນີ້ລ້າງນອກໃຫ້
ສິດຊື່ນມີຊີວິດ
ລ້າງທາງໃນແນວຄິດ
ບໍ່ງ່າຍດາຍຄືເວົ້າ
ເຮົາຕ້ອງເອົາພຣະທຳລ້າງ
ຫົວໃຈທີ່ໝອງໝົ່ນ
ລ້າງພວກອະກຸສົນ
ໃຫ້ຈິດໃຈແຈ່ມແຈ້ງ
ມີບຸນຄ້ຳຊ່ວຍຊູ
ເອົາແລ້ວນໍ່ພໍ່ຕູ້ແມ່ຕູ້
ຊີຂໍອ່ວຍພອນໄຊ
ອາຍຸຍືນຍາວໄກ100 ວັດສາຖຽນໝັ້ນ
ພຣະຈັນເພັ່ງພຽງດ້ານ
ກາຍຍາຜຸດຜ່ອງ
ອັນວ່າໂລກພະຍາດຮ້າຍ
ຢ່າໄດ້ມາຖືກຕ້ອງຕົວເຈົ້າໃຫ້ຫຼີກໄກ

ພະລະຂໍໃຫ້ໄດ້ ສະເໝີດັ່ງພາຍສານ
ບຸນສົມພານເຜັ່ງແສງ ແດ່ທຸກຄົນຢ່າໝອງເສົ້າ
ຄັນເຮັດນາໃຫ້ລອຍເຂົ້າ ທັ່ງຂາຍຂອງທຸກສິ່ງຢ່າງ
ໃຫ້ມີຄົນຊ່ວຍຊື້ ສົມເຈົ້າປາດຖະໜາ
ຊີຂໍລາພຽງນີ້ ປີໜ້າມາພໍ້ກັນໃໝ່
ທັ່ງຄວາມເຈັບເຈົ້າຢ່າໄດ້ ທັ່ງຄວາມໄຂ້ເຈົ້າຢ່າມີ ນັ້ນລະນາ... ສັດທາໂຍມເອີ່ຍ...

(ໝົດ).

ອວຍພອນທົ່ວໄປ

ນະມະການຸພາເວນະພ້ອມ ປະນົມກອນກ້ອຍກ່າວ
ມະໂນໃນໜ່ວງນ້ຳວ ຄຸນແກ້ວລະນຶກຫາ
ເຈົ້າຫາກໃຈແກ່ກ້າ ລະນຶກຮອດພຣະໄຕຣັດ
ໄດ້ພາກັນຈັດຫາ ແຕ່ງທານດີແລ້ວ
ລະນຶກເຖິງຄຸນແກ້ວ ສາມປະການກົ້ມກາບ
ໂດຍສຸພາບຮຽບຮ້ອຍ ທາງຂ້ອຍຊິອວຍພອນ
ຢ່າໄດ້ທຸກຍາກຮ້ອນ ປະການສິ່ງສັນໃດ
ສັບພະໂພຍໄພຫຍັ່ງ ໃຫ້ເສື່ອມສູນເສຍສິ້ນ
ຢູ່ທ່ຽງກິນທານສ້ຽງ ທາງບຸນໄດ້ຈິດຈໍ່
ຂໍຢ່າໄດ້ພົບພໍ້ ມານຮ້າຍຜ່າຍໜີ
ເຈົ້າທຳບຸນເທື່ອນີ້ ໃຫ້ມີແຕ່ຄວາມດີ
ຄວາມອັບປິຈັ່ງໄຮ ຢ່າໃຫ້ເວີນມາໃກ້
ທັ່ງຄວາມເຈັບຄວາມໄຂ້ ແນວບໍ່ດີໃຫ້ໜີຫ່ຽງ
ຢ່າໄດ້ມາຢູ່ຄ້ຽງ ຄາຂ້ອງໃຫ້ຂາດຄີງ
ຈິດສະຫງົບແນ່ນິ້ງ ປາດສະຈາກມອນມານ
ກະເສີມສານສິດໃສ ສ່ວນໃຈສະບາຍບ້ຽງ
ທ່ຽງສ່ວນກາຍສະເໝີດ້ວຍ ໂດຍດີສະດວກດັ່ງ
ຕົວຈິດຕັ່ງ ກາຍັ່ງ ໃຫ້ສົມຫວັ່ງຢູ່ດ້ຳມບໍ່ພານພໍ້ສິ່ງໃດ
ສັບພະໂຣກຢ່າໃກ້ ໄພໝູ່ມະຫາສານ
ກິເລດສາມານຜີ ໃຫ້ຜ່າຍໜີເດີທ້ານ
ປັນຈະມານທັ່ງຫ້າ ທັ່ງໂຣຄາພະຍາດເກົ່າ

ຢ່າໄດ້ມາຢູ່ເຝົ້າ
ສັບພະສິ່ງຮ້າຍ
ເຜະຫລາບຸນນຳຊູ
ຢ່າໄດ້ມີທາງເສົ້າ
ບໍ່ວ່າວັນ ແລະ ຄືນ
ຄັນເຈົ້າຍົກຍ່າງຍ້າຍ
ຢ່າໄດ້ມີເວນໄພ
ສະໜຸກເນົາໃນຫ້ອງ
ເປັນຄົນລ້ຳຄົນລວຍ
ດີໄປໝົດທຸກຊົ່ນ
ຊິທຳການຫຼືຂາຍຂອງ
ໄດ້ຄຳໄລມີເງິນລ້ານ
ເງິນກີບຢ່າຂາດບ້າງ
ທຸກສິ່ງສົມມາດມຸ້ງ
ຫວິດຈາກເຫວນາຣົກ
ແນມເຫັນທາງທຽວຍ້າຍ
ຕົກຫວ່າງນີ້ຊິຂໍລາ
ຊິລາແລ້ວແມ່ນສູ່ຄົນ

ນຳເຈົ້າໃຫ້ຫ່າງຫາຍ
ໃຫ້ຫາຍຂາດກາຍາ
ຢູ່ສູ່ຍາມເດີເຈົ້າ
ດວງພຣະໄທໃຫ້ສົດຊື່ນ
ຕະຫຼອດເດືອນຍ່າງຍ້າຍນອນເທິ້ງນັ່ງສະບາຍ
ຍົວລະຍາດໄປໃສ
ສິ່ງໃດມາຕ້ອງ
ເຄຫາຫາຍປ່ວຍ
ມີເງິນຄຳອີກດ້ວຍສະໜຸກສ້າງແຕ່ງກິນ
ສັບພະສ່ວນເຮືອນຊານ
ທ່ອງທ່ຽວເໜືອໃຕ້
ໂດລາທັງເງິນບາດ
ສົມພານເຈົ້າໃຫ້ໃຫຍ່ສູງ
ຢ່າເຂີນຂາດເບົາບົກ
ປ່ອງສະຫວັນໃຫ້ເປັນທ້າງ
ອັນຕະລາຍຢ່າມາຜ່າ
ສັດທາໂຍມພີ່ນ້ອງ
ສັດທາໂຍມ...ເອີຍ.

(ໝົດ).

ອວຍພອນຜູ້ມາທານ

ບັດນີ້ທ່ານຜູ້ມາທານໃຫ້
ຫາກເຊື່ອລິງແນ່ແລ້ວ
ຕັ້ງໃຈອອກຈາກບ້ານ
ມາທຳການກຸສົນ
ເປັນບັນໄດໄປພາຍໜ້າ
ດ້ວຍກຸສົນໃນຄັ້ງນີ້
ລວມໝົດຍາດພີ່ນ້ອງ
ສ້າງກອງການກຸສົນ
ບາງຄົນມາທານເຂົ້າ

ດ້ວຍປັຈຈັຍບໍລິຈາກ
ມະນີແກ້ວກະບໍ່ປານ
ນຶກວ່າຊິມາທານ
ແຕ່ງບຸນເອົາໄວ້
ຊາດຊິມາໃຫ້ມູນມັ່ງ
ໄປນຳກຸ້ມກ່ຳກອມ
ທຸກພາກສ່ວນມາໃນງານ
ແຕ່ລະຄົນມາໂຮມເຕົ້າ
ໂພຊະນັງຕົກແຕ່ງ

ມີທັງຕົ້ມ ແລະ ແກ່ງ ກໍ່ຫາກຫຼາຍມາກລົ້ນ ອາຫານພ້ອມຄູ່ຊູ່ອັນ
ບາງຄົນນັ້ນກໍ່ໄດ້ ມວນໝູ່ຜົນຜລາ
ພ້ອມກັນຈັດຫາມາ ແຕ່ງພາພູນລົ້ນ
ມີໝາກຈອງໝາກຄາຍພ້ອມ ນາວຫວານກ້ຽງເວີ່
ມີຂອງຫວານ ແລະ ສົ້ມ ເຂົ້າໜົມພ້ອມຄູ່ຊູ່ແນວ
ຍັງບໍ່ແລ້ວທໍ່ນັ້ນ ມີທັງຊໍ່ດອກດວງມາລາ
ພ້ອມກັນມາຊອມແຊມ ຊຶນຊົມຫອມກຸ້ມ
ທ່ານມາທານວັນນີ້ ໃຫ້ມີບຸນມາຫຸ້ມຫໍ່
ອານິສົງກໍ່ເກື້ອ ກວມເກົ້າຄູ່ຊູ່ຄົນ
ຂໍໃຫຫ້ເຈົ້າລອດພົ້ນ ສັບພະທຸກທັງປວງ
ຢ່າມີມານມາຂວາງ ປ່ອງທາງທຽວດົ້ນ
ຈົ່ງພາກັນສະໜຸກສ້ານ ກຸສົນຜົນບຸນທຸກເຊົ້າຄ່ຳ
ຢ່າໄດ້ມີຄວາມເດືອດຮ້ອນ ເງິນເຈົ້າອັ່ງກະເປົາ
ຄັນນເຈົ້າມີລູກເຕົ້າ ໃຫ້ປະເສີດມີບຸນ
ໄດ້ເພິ່ງຄຸນທັງໝົດ ໜ່ຳໂພທິຍານກ້ວາງ
ສັບພັນຍູເຍືອງໃຕ້ ນາໂຖເປັນທີ່ເພິ່ງ
ໃຫ້ເຈົ້າສຸກເລີງໆ ສົມພານບຸນແກ່ກ້າ ສະເໝີເທົ້າທ່ວກັນ
ອາຍຸທຸກທ່ານນັ້ນ ໃຫ້ສົມດ້າມດັ່ງໃຈໝາຍ
ວັນນະໃສແພວພາວ ດັ່ງດາວອະດຶງຟ້າ
ສຸກກະເສີມສຳລານດ້ວຍ ໂລຄາໃຫ້ເຫີນຫ່າງ
ພະລະເຈົ້າໃຫ້ກຳລັງ ຄວາມເຂັ້ມແຂງແກ່ກ້າ ສັດທາເຈົ້າວ່າທຸກຄົນ
ນັ້ນລະນ່າ..... ສັທທາໂຍມ... ເອີ່ຍ...

ກອນເທດແຫ່ ເຊີນພຣະເອສເຂົ້າເມືອງ

ພຣະຍາສີສົນໄຊ ຕອນທີ1 (ເທດແຫ່)

ບັດນີ້ຕົວຜູ້ຂ້າ
ເລື່ອງນິທານຊາດົກ
ສົມໝຸດຕົວຂອງຂ້າ
ຊົງສະເຫວີຍລາຊສ້າງ
ດຽວນີ້ຕົກເຂດຮ້ອນ
ຈັນໂທແສງເຮືອງຮອງ
ເມສາຍົນຕົ້ນເດືອນຫ້າ
ສັບພະດວງດອກໄມ້
ບາງຜ່ອງມີມາກລົ້ນ
ຜູ້ຂ້າເນົາສີພີ
ຄິດເຖິງຈອມໃຈເຫງົ້າ
ທີ່ຖືກເນລະເທດຈາກຫ້ອງ
ບັດນີ້ ຂ້າຈຶ່ງພາພົ້ນເຂົ້າ
ຫຼານກັນຫາ ຊາລີພ່ຳພ້ອມ
ຫມາຍຈັກມາທູນໄຫ້ວ
ໃຫ້ລາເພດພະຫນວດໄວ້
ສອງບັງອອນເປັນຫົວຫນ້າ
ໄດ້ຊົບສອງຂວບມື້
ພ້ອມທັງຊ້າງແລະມ້າ
ໂສກກະສັນຄະນຶງຄິດ
ຈຶ່ງໄດ້ເດີນດົງເຂົ້າ
ຫວັງເພື່ອມາກຣາບໄຫ້ວ
- ບັດນີ້ພໍ່ວ່າມາເຖິງແລ້ວ
ຈຶ່ງໄດ້ພາກັນລົດ
ແລ້ວພາກັນວອນໄຫ້ວ
ຖາມຂ່າວຄວາມທຸກຮ້ອນ
ກັບທັງຈອມໃຈເຈົ້າ
ຈັກຂໍກ່າວຕໍ່ນານ
ໄດ້ຍົກມາແຕ່ຕອນຕົ້ນ
ສີສົນໄຊເປັນຊື່
ເມືອງບ້ານຍ່ານນະຄອນ
ລະດູປ່ຽນຄົມຫັນ
ສອງວະໂຣທີກ້າ
ຊົນລະທາຝ້າຝົນໃຫມ່
ກ່ຳບານບ້າງອອກຈູຈີ
ຜົນໝາກດົກຫນາ
ນັ່ງປອງເປັນເຈົ້າ
ສັນດອນພຣະຍາເຫວສ
ໃຫ້ໄກບ້ານຫ່າງນະຄອນ
ພະເນຈອນນອນປ່າ
ມາເຖິງພື້ກ່ຳແມ່ນບຸນ
ເຊີນຊວນອົງພຣະເຫວດ
ໃຫ້ຄືນເຂົ້າສູ່ນະຄອນ
ໄດ້ພາພົ້ນທຽວທ່ອງ
ແຕ່ເດີນດົ້ນເຈົ້າດຸ່ງມາ
ມວນຫມູ່ພົ້ນທະຫານ
ຫ່ວງນຳພຣະອົງເຈົ້າ
ສັນຈອນນອນປ່າ
ພຣະອົງເຈົ້າໃຫ້ຕ່າວຄືນ
ສຳນັກປ່າເຂົາວົງກົດ
ເຄື່ອງປົງລົງໄວ້
ຊີໄພໃຫ້ຄືນຕ່າວ
ມັດທີຫຼ້າຢູ່ຈັ່ງໃດ
ສັນດອນພຣະຍາເຫວດ

ຜູ້ທີ່ຊົງເຜດສ້າງ
ຫວັງວ່າຄົງສຸກລົ້ນ
ຍັງຄ່ອຍສຸກຢູ່ສ້າງ
ເປັນຈັ່ງໃດນໍ່ເຈົ້າ
ຍັງຄ່ອຍຫາຊອກໄດ້
ກັບທັງຝູງສັດຮ້າຍ
ເຂົ້າບໍ່ມາບຽດໃກ້
ອັນວ່າຜີເຜດຮ້າຍ
ກັບທັງສຽງແຊວຂັນ
ກໍ່ບໍ່ມາກວນຕ້ອງ
ເນົາຢູ່ດອນດ່ານດ້າວ
ຄ່ອຍຢູ່ດີ ບໍ່ນໍ

ຊົນຊ້ອຍຢູ່ປ່າດົງ
ໂພຍໄພນັ້ນເພີ່ນຫ່າງ
ສະບາຍບ້າງເພິ່ງບຸນ
ອາຫານໄພຢູ່ໃນປ່າ
ພໍໄດ້ໃສ່ຈໍຫັນ ບໍ່ນໍ
ໃນດົງນັບບໍ່ໄຄ່ວ
ກວນເຈົ້າກໍ່ພໍລີ
ເປົ້າປ່າພາຍໂພງ
ກູກຂວັນກວນຮ້ອງ
ຂວັນເຂືອລູກສອງອ່ອນ
ຄັນສອງເຈົ້າ..
ລູກຄຳເອີ່ຍ.....

ຕອນພໍ່ເວົ້າ

- ເປັນຈັ່ງໃດຕໍ່ລູກລ້າ
ບໍ່ຄິດຢາກອ່ວາຍໜ້າ
- ລູກພໍ່ເອີ່ຍ ພໍ່ນີ້ຂໍເຊີນເຈົ້າ
ຢ່າໄດ້ມາຢູ່ຄ້າງ
ຢ່າມານອນໃນຖ້ຳ
ໃຫ້ລູກຄືນເມືອຢູ່ກ້ຳ

ມາຢູ່ດົງຢູ່ປ່າ
ຄືນບ້ານເກົ່າຫຼັງ ແດ່ບໍ່ນໍລູກຄຳເອີຍ
ເມືອເມືອງຕຸ້ມໄພ່
ດົງກ້ວາງດັ່ງຫມູ່ລີງ ທ້ອນ
ເດືອນດຳຝ້າມືດກ່ຳ
ນະຄອນກ້ວາງແຫ່ງເຮົາສາພໍ່ວ່າ

ພຣະເຫວດຕອບພໍ່ ຕອນທີ 1 (ເທດແຫ່)

ບັດນີ້ ອາຕະມານີ້
ອົງມຸນີສັນຕະໂຣ
ມາບຳເພັນຊົນສ້າງ
ພ້ອມສາຍາຍອດແກ້ວ
ນັບວ່າເຈັດເດືອນໄດ້
ສັນລູກໝາກຮາກໄມ້

ໄດ້ສົມໝຸດຊື່ເປັນລືສີ
ທີ່ພາກພອຍເມືອງບ້ານ
ປາລະມີຢູ່ໃນປ່າ
ມັດທີພ້ອມກຳ່ຳພຽນ
ເປັນຊີໄພຈົນເຫຼືອງຫຼ່າ
ແຕ່ໃຈນັ້ນກຳ່ຊຸ່ມເຢັນ

ບໍ່ໄດ້ມີເຂັນຂ້ອງ ໂພຍໄພກໍ່ເຫິ່ນຫ່າງ
ຝູງຫມູ່ງອດງ້ຽວ ສັດຮ້າຍກໍ່ບໍ່ກ້ວນ
ເປັນຍ້ອນບຸນສົມສ້າງ ແຕ່ປາງຫຼັງຖ້ວນຖີ່
ສີລະ ທານະປາລະມີ ນັ້ນໄດ້ມາຫໍ່ຫຸ້ມ ມານຮ້າຍກໍ່ພາຍຫນີ
ບັດນີ້ ມວນມູ່ເສນາພ້ອມ ປະນົມມືກົ້ມກາບໃສ່
ຍໍຍົກຂັນດອກໄມ້ ວອນໄຫ້ວລາດທະນາ
ມີທັງຂັນເງິນພ້ອມ ຂັນຄຳອັນລ້ຳຄ່າ
ຍົກພຽງຫູຍໍພຽງຕາ ຂໍຂະມານອບນ້ອມ ວອນໄຫ້ວໃຫ້ຕ່າວຄືນ
ຂ້າແຕ່ບິດາໄທ້ ສີສິນໄຊພະຍາພໍ່
ຜຸດສະດີສິ່ງເຫງົ້າ ມານດາເຈົ້າໃຫ້ຮົ່ມຕອງ
ການທີ່ລຸກພັດພາກຫ້ອງ ນະຄອນທອງເຫິ່ນຫ່າງ
ແສນລຳບາກຍາກແຄ້ນ ບໍ່ຄືແທ້ແຕ່ເກົ່າຫຼັງ
ຄວາມທຸກຂັງຂັດຂ້ອງ ມີມາຕັ້ງຮ້ອຍຢ່າງ ພໍ່ແມ່ເອີ່ຍ
ການທຽວທາງຕົນເປືອຍເປ້ ເຊລົ້ມຕ່ອຍຕໍ່
ແສນສົງສານມັດທີນ້ອງ ຄອງກັນຫາຜູ້ນ້ອຍອ່ອນ
ຟັງສຽງລູກອອດອ້ອນ ຫົວເຂົ້າແລະນົມ
ບາງແຫ່ງຕົມຕິດເປື້ອນ ຊາລີກໍ່ວອນເຈ່ຍ
ນັບວ່າອົດອ່ອນເພຍ ຈຶ່ງໄດ້ມາຮອດຫ້ອງ ພະອົນເຈົ້າແຕ່ງຖວາຍ
ຕົກລົງຕັດເກດເກົ້າ ຊົງບວດເປັນລືສີ
ສ່ວນວ່ານາງມະທີ ທ່ຽວເດີນດົງກ້ວາງ
ໄປຫາຂຸດມັນອ້ອນ ຢູ່ໃນດອນຫາມັນປ່າ
ຜົນຜະລາໜາກໄມ້ ມັນມູ້ຄູ່ຊູ່ອັນ
ອັນວ່າຂອງສັນນັ້ນ ພຽງພໍບໍ່ອຶດຢາກ ພໍ່ແມ່ເອີ່ຍ
ແຕ່ຫາກປຽບບໍ່ໄດ້ ຄືຄາວກີ້ຢູ່ນະຄອນ
ເຖິງຍາມນອນບໍ່ມີຜ້າ ກຳພະລາມາຕຸ້ມຫົ່ມ ພໍ່ແມ່ເອີ່ຍ
ຫນາວຫົວລົມລ່ວງຕ້ອງ ກາຍສະບັ້ນສັ່ນເຊັນ
ຄິດເຫັນຄາວຢູ່ບ້ານ ສະເທວີຍເມືອງຕຸ້ມໄພ່
ພໍປານຕາຍແລ້ວເກີດໃຫມ່ ພຸ້ນລະຕີລູກແກ້ວ ແນວສ້າງຄູ່ຊູ່ອັນ
ອີກອັນຫນຶ່ງ ສັບພະສັນສັດຮ້າຍ ຢູ່ໃນປ່າໄພຫນາ
ເຂົ້າບໍ່ມາຮາວີ ບຽດບຽນເຂົ້າມາໃກ້

ສ່ວນວ່າບິດາໃຫ້ ສິນໄຊພະຍາພໍ່ ນັ້ນເດ່
ຍັງຄ່ອຍສຸກຢູ່ສ້າງ ສະເໝີດ້າມດັ່ງຫຼັງ ຢູ່ບໍ່ນໍ
ອັນວ່າໂລຄາໄຂ້ ໂພຍໄພທຸກໂສກ ນັ້ນເດ່
ໂລກບໍ່ມາບຽດໃກ້ ຕົວເຈົ້າເປັນຈັ່ງໃດ
ກັບທັງມານດາເຈົ້າ ຜຸດສະດີພະແມ່ເມືອງ ນັ້ນເດ່
ຍັງຄ່ອຍສຸກຢູ່ສ້າງ ບຸນກ້ວາງເຫຼືອມງໍາ
ຈັກຂຸທໍາຕາແກ້ວ ຂອງຈອມທໍາທັງຄູ່
ຍັງແຂງແຮງໃສຮຸ່ງແຈ້ງ ບໍ່ມີເສົ້າ ວ່າຫມົ່ນຫມອງ
ນັ້ນເທາະນ້າ.... ພໍ່ແມ່ເອີຍ.....ນໍ່

ພຣະເຫວດເວົ້າ

ຈັ່ງຊັ້ນລະພໍ່ແມ່ເອີ່ຍ ການທີ່ລຸກພັດພາກຫ້ອງ
ນະຄອນທອງມາຢູ່ປ່າ ບໍ່ໄດ້ມີອັນຄາຂັດຂ້ອງ
ຂອງສັນບໍ່ອຶດຢາກ ພ້ອມທັງໂລກພະຍາດຮ້າຍ ກໍ່ບໍ່ມາໃກ້ບຽດບຽນ
ພໍ່ເອີ່ຍລູກບໍ່ຄືນເມືອແລ້ວ ຄອງເມືອງຕຸ້ມໄພ່
ພວກເສນາໃຫຍ່ນ້ອຍ ຊິຫຍັນຫຍໍ້ທົ່ວເມືອງ
ຂໍໃຫ້ພໍ່ຈົ່ງເບື້ອງ ກັບຕ່າວຄືນສາ
ທັງເສນານາງໃນ ຢ່າຢູ່ດົນມັນຊິຊ້າ
ລູກນີ້ອາຍທັງຫນ້າ ອາຍໄປຫມົດທຸກຢ່າງ
ຄິດເຫັນປານກ່ອນກໍ່ ຫົວໃຈແຄ້ນອັ່ງມະໂນ ເມືອສາພໍ່ເອີຍ.

ພຣະຍາສີສິນໄຊ ຕອນ 2 (ເທດແຫຼ)

ດູລາ ບຸດຕາແກ້ວ ຊິໄພພະຍາເຫວດ ຄໍາເອີຍ
ການທີ່ລູກພັດພາກຫ້ອງ ນະຄອນກ້ວາງເກົ່າຫຼັງ
ຂອງອິຫຍັງທັງສິ້ນ ບໍ່ເຫມືອນຄາວລູກຍັງຢູ່
ມີແຕ່ຄວາມໂສກເສົ້າ ຄິດເຖິງເຈົ້າຜູ້ຈາກຫນີ
ວຽກກະທໍາການສ້າງ ນາສວນຮົ້ວແລະໄຮ່
ກໍ່ບໍ່ລຸລາບໄດ້ ເພາະຝົນຟ້າບໍ່ຄ່ອຍດີ
ພານິດໂຊຊາວຄ້າ ບໍ່ໄຫຼມາລົ້ນຫຼັ່ງ

ເຫມືອນລູກຍັງຕອມຕຸ້ມ ເປັນເຈົ້າພໍ່ພະຍາ
ອັນວ່າຊ້າງແລະມ້າ ພ້ອມພໍ່ພົນທະຫານ
ທີ່ຍັງເອົາກິຈຈະການ ດັ່ງເດີມຫາກມີຫນ້ອຍ
ທຸກວັນນີ ພໍ່ໄດ້ພາພົນສ້າງ ຄວາມຈະເລີນບໍ່ຄືເກົ່າ
ແຕ່ວ່າສັບພະໂລກບໍ່ເຂົ້າ ມາໃກ້ບຽດບຽນ
ອັນວ່າມານດາເຈົ້າ ຜຸດສະດີກໍ່ເຫມືອນພໍ່
ບໍ່ໄດ້ມີພະຍາດໄຂ້ ເຂັນຮ້າຍກໍ່ພ່າຍຫນີ
ດ້ວຍເດດປາລະມີເຈົ້າ ຂອງຈອມທໍຊິງເຫຼືອມ
ປະຊາຊົນໄພ່ຟ້າ ສະບາຍສ້ຽງທົ່ວແດນ
ຄາວນີ້ ພໍ່ໄດ້ຈາກແວ້ນແຄວ້ນ ກຸງໃຫຍ່ປະເຊໄຊ
ພ້ອມໄພ່ພົນເສນາ ພະແມ່ເມືອງແລະຊາວຄ້າ
ເພາະວ່າໂທສາສ້ຽງ ສູນເສຍຫາຍຫ່ວງ ລູກພໍ່ເອີ່ຍ
ຄວາມສັບສໍ່ທັງປວງ ຄວາມເຫັນຜິດທັງມວນ
ພໍ່ໄດ້ຂົນລ່ອງນ້ຳ ທະເລກ້ວາງບໍ່ໃຫ້ຍັງ
ພໍ່ແມ່ຍັງຢູ່ໄດ້ ຈິ່ງພ້ອມໄພ່ພົນທະຫານ
ບັນດິດຕາອາຈານ ມາອ່ອນຍອມພຣະອົງເຈົ້າ
ໂຊກດີມາເຖິງເທົ້າ ວົງກົດເຂົ້າອັນກ້ວາງໃຫຍ່
ຈິ່ງແຕ່ງຂັນດອກໄມ້ ເອົາທຽນຄຳຄາດໄວ້ ໃນຫັ້ນຄູ່ລະແສນ
ມີທັງຂັນເງິນພ້ອມ ມາລາຫອມດວງດອກ
ເສນາຊອກຄົດຄົ້ນ ມາວອນໄຫ້ວລາດທະນາ
ພາກັນຍໍຍົກຂຶ້ນ ສູງພຽງຕາຍັງວ່າຕ່ຳ ຄຳເອີ່ຍ
ຈຳຕ້ອງຍໍໃສ່ຄໍ້ວ ປະນົມນົ້ມກ່າວຈາ
ຂໍສົມມາລືສີເຈົ້າ ຈອມທຳພຣະຍາເຫວດ
ໂທດໄດ້ເນລະເທດເຈົ້າ ໃຫ້ໄພ່ບ້ານຫ່າງວັງ
ຊັ່ງພຣະອົງວ່າທານຊ້າງ ມຸງຄຸນຕົວປະເສີດ
ກໍ່ເລີຍເກີແຕກມ້າງ ໃຜກໍ່ເວົ້າວ່າບໍ່ດີ
ອັນນີ ນານເຖິງເຈັດເດືອນຖ້ວນ ໂທສາກໍ່ສູນເປົ່າ
ພໍ່ຈິ່ງເຕົ້າໄພ່ຟ້າ ມານ້ອມນ່ຽວອອນ
ຂໍອະໂທສີທ້ອນ ຢ່າເປັນບາບເວນກຳ
ບໍ່ໄດ້ເຈຕະນາທຳ ໃຫ້ລູກໄລໄພ່ບ້ານ

ເປັນດ້ວຍເທວະດາເຂົ້າ
ໃຫ້ພໍ່ຂັບໄລ່ເຈົ້າ
ເພື່ອຈັກໄດ້ກໍ່ສ້າງ
ບຸນສົມພານແຕ່ປາງຫຼັງ
ບັດນີ ກໍ່ຫາກສົມພຣະໄທປ້ອງ
ທ້ອປະເທດກໍ່ຍົກຍ້ອງ
ຝູງຂ້າຂໍເຊີນເຈົ້າ
ໃຫ້ລາເພດຜະນວດໄວ້
ຜົນນິກອອນຊາວເຊື້ອ
ລູກຢ່າຖືໂທດທ້ອນ
ໃຜບໍ່ຮູ້ວ່າເຈົ້າ
ບາດນີ້ມອງເຫັນຄັກ
ໃຫ້ລູກໄລໄພກ້ວາງ
ປະເຊໄຊເຂດແຄວ້ນ
ນັ້ນລະນ່າ

ບັນດົນໃຈພວກໄພ່
ຈອນຮ້າງຫ່າງປາງ
ສົມໂພດໂພທິຍານ
ແຕ່ງແປງຈິ່ງເປັນໄດ້
ເທວະດາປັນປ່ອງ
ຫວັງຊົ່ນເພິ່ງຮົ່ມເງົາ
ຊົ່ໄພພຣະຍາເທວດ
ຄືນເຂົ້າສູ່ນະຄອນ
ສີພິກໍ່ຫວັງເພິ່ງ ລູກນີ້ແລ້ວ
ຝູງຄືນໄປ້ບາບຫນາ
ເປັນນັກປາດທີ່ສູງສັກ
ວ່າແມ່ນໂພທິຍານສ້າງ
ກັບຄືນຄອງຕຸ້ມໄພ່
ຊົ່ຖວາຍເຈົ້າແຕ່ຜູ້ດຽວ
ລູກຄຳເອີ່ຍ... ....

ຕອນພໍ່ເວົ້າ

ເຊີນທອນ
